Debian Edu / Skolelinux 12 Bookworm Manual

ວັນທີເຜີຍແຜ່: 01/11/2026

ສາລະບານ

1 Manual for Debian Edu 12 Codename bookworm **1**

2 ກ່ຽວກັບ Debian Edu ແລະ Skolelinux **1**

2.1 ປະຫວັດຄວາມເປັນມາບາງສ່ວນ ແລະ ເປັນຫຍັງຈຶ່ງມີສອງຊື 1

3 ສະຖາປັດຕະຍະກຳ **2**

3.1 ເຄືອຂ່າຍ 2

3.1.1 ການຕັ້ງຄ່າເຄືອຂ່າຍເລີ່ມຕົ້ນ 3

3.1.2 ເຊີເວີຫຼັກ 3

3.1.3 ການບໍລິການຕ່າງໆທີ່ເຮັດວຽກຢູ່ໃນເຊີເວີຫຼັກ 3

3.1.4 ເຊີເວີ LTSP 4

3.1.5 ເຄື່ອງລູກຂ່າຍແບບບາງ (Thin clients) 5

3.1.6 ສະຖານີວຽກແບບບໍ່ມີດິສ (Diskless workstations) 5

3.1.7 ເຄື່ອງລູກຂ່າຍໃນເຄືອຂ່າຍ 5

3.2 ການບໍລິຫານຈັດການ 5

3.2.1 ການຕິດຕັ້ງ 5

3.2.2 ການກຳນົດຄ່າການເຂົ້າເຖິງລະບົບໄຟລ໌ 6

4 ຄວາມຕ້ອງການຂອງລະບົບ **6**

4.1 ຄວາມຕ້ອງການດ້ານຮາດແວ 6

4.2 ຮາດແວທີ່ຢືນຢັນແລ້ວວ່າໃຊ້ງານໄດ້ 7

5 ຄວາມຕ້ອງການສຳລັບການຕັ້ງຄ່າເຄືອຂ່າຍ **7**

5.1 ການຕັ້ງຄ່າເລີ່ມຕົ້ນ 7

5.2 ຣາວເຕີອິນເຕີເນັດ 8

6 ທາງເລືອກໃນການຕິດຕັ້ງ ແລະ ການດາວໂຫຼດ **8**

6.1 ບ່ອນທີ່ສາມາດຊອກຫາຂໍ້ມູນເພີ່ມເຕີມ 8

6.2 Download the installation media for Debian Edu 12 Codename bookworm 8

6.2.1 amd64 ຫຼື i386 8

6.2.2 ອີເມຈ ISO ແບບ netinst ສຳລັບ amd64 ຫຼື i386 8

6.2.3 ອີເມຈ ISO ແບບ BD ສຳລັບ amd64 ຫຼື i386 9

6.2.4 ການກວດສອບຄວາມຖືກຕ້ອງຂອງໄຟລ໌ອີເມຈທີ່ດາວໂຫຼດມາ 9

6.2.5 ຊອຣ໌ສໂຄ້ດ (Sources) 9

6.3 ການຕິດຕັ້ງ Debian Edu 9

6.3.1 ຮູບແບບການຕິດຕັ້ງເຊີເວີຫຼັກ 9

6.3.2 ສະພາບແວດລ້ອມເດັສທ໊ອບ 10

6.3.3 ການຕິດຕັ້ງແບບແຍກສ່ວນ 10

6.3.4 ປະເພດ ແລະ ທາງເລືອກໃນການຕິດຕັ້ງ . . . 11
6.3.5 ຂະບວນການຕິດຕັ້ງ . . . 16
6.3.6 ການຕິດຕັ້ງເກດເວໂດຍໃຊ້ debian-edu-router . . . 18
6.3.7 ໝາຍເຫດກ່ຽວກັບຄຸນລັກສະນະບາງຢ່າງ . . . 38
6.3.8 ການຕິດຕັ້ງໂດຍໃຊ້ USB flash drives ແທນ CD / Blu-ray discs . . . 39
6.3.9 ການຕິດຕັ້ງ ແລະ ການບູດຜ່ານເຄືອຂ່າຍໂດຍໃຊ້ PXE . . . 39
6.3.10ການແກ້ໄຂການຕິດຕັ້ງ PXE . . . 41
6.3.11ອີເມຈທີ່ກຳນົດເອງ (Custom images) . . . 41
6.4 ພາບຫົວໜ້າຈໍ . . . 41

7 ເລີ່ມຕົ້ນການນຳໃຊ້ 55
7.1 ຂັ້ນຕອນຂັ້ນຕ່ຳເພື່ອເລີ່ມຕົ້ນນຳໃຊ້ . . . 55
7.1.1 ການບໍລິການຕ່າງໆທີ່ເຮັດວຽກຢູ່ໃນເຊີເວີຫຼັກ . . . 56
7.2 ການແນະນຳກ່ຽວກັບ GOsa² . . . 56
7.2.1 ການເຂົ້າສູ່ລະບົບ GOsa² ແລະ ພາບລວມ . . . 57
7.3 ການຈັດການຜູ້ໃຊ້ດ້ວຍ GOsa² . . . 57
7.3.1 ການເພີ່ມຜູ້ໃຊ້ . . . 58
7.3.2 ການຄົ້ນຫາ, ແກ້ໄຂ ແລະ ລຶບຜູ້ໃຊ້ . . . 59
7.3.3 ການຕັ້ງລະຫັດຜ່ານ . . . 60
7.3.4 ການຈັດການຜູ້ໃຊ້ແບບຂັ້ນສູງ . . . 61
7.4 ການຈັດການກຸ່ມດ້ວຍ GOsa² . . . 63
7.5 ການຈັດການເຄື່ອງຄອມພິວເຕີດ້ວຍ GOsa² . . . 64
7.5.1 ການຄົ້ນຫາ ແລະ ລຶບເຄື່ອງຄອມພິວເຕີ . . . 67
7.5.2 ການແກ້ໄຂເຄື່ອງທີ່ມີຢູ່ / ການຈັດການ Netgroup . . . 67

8 ການຈັດການເຄື່ອງພິມ 68
8.1 ການໃຊ້ເຄື່ອງພິມທີ່ເຊື່ອມຕໍ່ກັບເຄື່ອງວຽກ (workstations) . . . 68
8.2 ເຄື່ອງພິມເຄືອຂ່າຍ . . . 69

9 ການຊິ້ງໂຄໄນເວລາ (Clock synchronisation) 69

10 ການຂະຫຍາຍຜາທີ່ຊັ້ນທີ່ເຕັມ 69

11 ການບຳລຸງຮັກສາ 69
11.1ການອັບເດດຊອບແວ . . . 69
11.1.1ຕິດຕາມຂ່າວສານກ່ຽວກັບການອັບເດດຄວາມປອດໄພ . . . 70
11.2ການຈັດການການສຳຮອງຂໍ້ມູນ . . . 70
11.3ການຕິດຕາມກວດກາເຊີເວີ . . . 71
11.3.1Munin . . . 71
11.3.2Icinga . . . 71
11.3.3Sitesummary . . . 72
11.4ຂໍ້ມູນເພີ່ມເຕີມກ່ຽວກັບການປັບແຕ່ງ Debian Edu . . . 72

12 ການອັບເກຣດ **72**
12.1 ໝາຍເຫດທົ່ວໄປກ່ຽວກັບການອັບເກຣດ . . . 72
12.2 Upgrades from Debian Edu Bullseye . . . 73
12.2.1 ການອັບເກຣດເຊີເວີຫຼັກ . . . 73
12.2.2 ການອັບເກຣດເຄື່ອງວຽກ . . . 74
12.3 Upgrades from older Debian Edu / Skolelinux installations (before Bullseye) . . . 74

13 ວິທີການ (HowTo) **74**

14 ວິທີການສຳລັບການຈັດການທົ່ວໄປ **74**
14.1 ປະຫວັດການກຳນົດຄ່າ: ການຕິດຕາມ /etc/ ໂດຍໃຊ້ລະບົບຄວບຄຸມເວີຊັນ Git . . . 75
14.1.1 ຕົວຢ່າງການນຳໃຊ້ . . . 75
14.2 ການປັບຂະໜາດພາທິຊັນ . . . 75
14.2.1 ການຈັດການວໍລຸ່ມແບບໂລຈິກ (LVM) . . . 76
14.3 ການນຳໃຊ້ ldapvi . . . 76
14.4 NFS ທີ່ໃຊ້ Kerberos . . . 76
14.4.1 ວິທີການປ່ຽນຄ່າເລີ່ມຕົ້ນ . . . 76
14.5 Standardskriver (ເຄື່ອງພິມມາດຕະຖານ) . . . 77
14.6 JXplorer, ໜ້າຕ່າງກຣາຟິກສຳລັບ LDAP . . . 77
14.7 ldap-createuser-krb5, ເຄື່ອງມືບັນທັດຄຳສັ່ງສຳລັບການເພີ່ມຜູ້ໃຊ້ . . . 77
14.8 ການນຳໃຊ້ stable-updates . . . 79
14.9 ການນຳໃຊ້ backports ເພື່ອຕິດຕັ້ງຊອບແວທີ່ໃໝ່ກວ່າ . . . 79
14.10 ການອັບເກຣດດ້ວຍ CD ຫຼື ໄຟລ໌ອີເມຈທີ່ຄ້າຍຄືກັນ . . . 79
14.11 ການລ້າງໂປຣເຊສທີ່ຄ້າງຢູ່ໂດຍອັດຕະໂນມັດ . . . 80
14.12 ການຕິດຕັ້ງການອັບເດດຄວາມປອດໄພໂດຍອັດຕະໂນມັດ . . . 80
14.13 ການປິດເຄື່ອງອັດຕະໂນມັດໃນຕອນກາງຄືນ . . . 80
14.13.1 ວິທີການຕັ້ງຄ່າ shutdown-at-night . . . 80
14.14 ການເຂົ້າເຖິງເຊີເວີ Debian Edu ທີ່ຢູ່ເບື້ອງຫຼັງໄຟວໍ (firewall) . . . 81
14.15 ການຕິດຕັ້ງເຄື່ອງບໍລິການເພີ່ມເຕີມເພື່ອລະບາຍພາລະຈາກເຊີເວີຫຼັກ . . . 81
14.16 ວິທີການ (HowTos) ຈາກ wiki.debian.org . . . 81

15 ວິທີການຈັດການຂັ້ນສູງ **81**
15.1 ການປັບແຕ່ງຜູ້ໃຊ້ດ້ວຍ GOsa² . . . 82
15.1.1 ການສ້າງຜູ້ໃຊ້ຕາມກຸ່ມປີ . . . 82
15.2 ການປັບແຕ່ງຜູ້ໃຊ້ອື່ນໆ . . . 82
15.2.1 ການສ້າງໂຟນເດີໃນໄດເຣັກທໍຣີຫຼັກ (home directories) ຂອງຜູ້ໃຊ້ທັງໝົດ . . . 82
15.3 ນຳໃຊ້ເຊີເວີເກັບຂໍ້ມູນສະເພາະ . . . 83
15.4 ຈຳກັດການເຂົ້າເຖິງການລັອກອິນຜ່ານ SSH . . . 84
15.4.1 ການຕັ້ງຄ່າໂດຍບໍ່ມີເຄື່ອງລູກຂ່າຍ LTSP . . . 84
15.4.2 ການຕັ້ງຄ່າພ້ອມກັບເຄື່ອງລູກຂ່າຍ LTSP . . . 84
15.4.3 ໝາຍເຫດສຳລັບການຕັ້ງຄ່າທີ່ຊັບຊ້ອນກວ່າ . . . 85

16 ວິທີການ (HowTos) ສຳລັບເດັສທັອບ **85**
16.1 ການຕັ້ງຄ່າສະພາບແວດລ້ອມເດັສທັອບແບບຫຼາຍພາສາ . . . 85
16.2 ການຫຼິ້ນແຜ່ນ DVD . . . 85
16.3 ຟອນລາຍມື (Handwriting fonts) . . . 85

17 ວິທີການ (HowTos) ສຳລັບເຄື່ອງລູກຂ່າຍໃນເຄືອຂ່າຍ **86**
17.1 ແນະນຳກ່ຽວກັບ thin clients ແລະ diskless workstations . . . 86
17.1.1 ການເລືອກປະເພດເຄື່ອງລູກຂ່າຍ LTSP . . . 88
17.1.2 ການນຳໃຊ້ເຄືອຂ່າຍເຄື່ອງລູກຂ່າຍ LTSP ອື່ນ . . . 88
17.1.3 ເພີ່ມ LTSP chroot ເພື່ອຮອງຮັບເຄື່ອງລູກຂ່າຍ PC ແບບ 32-bit . . . 88
17.1.4 ການຕັ້ງຄ່າເຄື່ອງລູກຂ່າຍ LTSP . . . 88
17.1.5 ລະບົບສຽງກັບເຄື່ອງລູກຂ່າຍ LTSP . . . 88
17.1.6 ການເຂົ້າເຖິງ USB ໄດຣຟ໌ ແລະ CD-ROM/DVD . . . 88
17.1.7 ການນຳໃຊ້ເຄື່ອງພິມທີ່ຕໍ່ກັບເຄື່ອງລູກຂ່າຍ LTSP . . . 89
17.2 ການປັບແຕ່ງການຕັ້ງຄ່າ PXE . . . 89
17.2.1 ການຕັ້ງຄ່າເມນູ PXE . . . 89
17.2.2 ການຕັ້ງຄ່າການຕິດຕັ້ງຜ່ານ PXE . . . 89
17.2.3 ການເພີ່ມຄັງເກັບຊອບແວ (repository) ເອງ ສຳລັບການຕິດຕັ້ງ PXE . . . 89
17.3 ການປ່ຽນການຕັ້ງຄ່າເຄືອຂ່າຍ . . . 90
17.4 ເດັສທັອບໄລຍະໄກ (Remote Desktop) . . . 90
17.4.1 Xrdp . . . 90
17.4.2 X2Go . . . 91
17.4.3 ເຄື່ອງລູກຂ່າຍ Remote Desktop ທີ່ມີໃຫ້ . . . 91
17.5 ເຄື່ອງລູກຂ່າຍແບບໄຮ້ສາຍ . . . 91
17.6 ການຢືນຢັນຕົວຕົນເຄື່ອງ Windows ດ້ວຍບັນຊີ Debian Edu ໂດຍໃຊ້ປັກອິນ pGina LDAP . . . 92
17.6.1 ການເພີ່ມຜູ້ໃຊ້ pGina ໃນ Debian Edu . . . 92
17.6.2 ຕິດຕັ້ງ pGina fork . . . 92
17.6.3 ຕັ້ງຄ່າ pGina . . . 92

18 Samba ໃນ Debian Edu **93**
18.1 ການເຂົ້າເຖິງໄຟລ໌ຜ່ານ Samba . . . 94

19 ວິທີການ (HowTos) ສຳລັບການຮຽນ-ການສອນ **94**
19.1 ການສອນຂຽນໂປຣແກຣມ . . . 94
19.2 ການຕິດຕາມເບິ່ງນັກຮຽນ . . . 94
19.3 ການຈຳກັດການເຂົ້າເຖິງເຄືອຂ່າຍຂອງນັກຮຽນ . . . 94

20 ວິທີການ (HowTos) ສຳລັບຜູ້ໃຊ້ **94**
20.1 ການປ່ຽນລະຫັດຜ່ານ . . . 94
20.2 ການຣັນແອັບພລິເຄຊັນ Java ແບບສະແຕນອາໂລນ (standalone) . . . 94
20.3 ການນຳໃຊ້ ອີເມລ . . . 95
20.4 Thunderbird . . . 95

21 ການມີສ່ວນຮ່ວມ **95**
21.1 ມີສ່ວນຮ່ວມທາງອອນລາຍ 95
21.2 ລາຍງານຂໍ້ຜິດພາດ (bugs) 95
21.3 ຜູ້ຂຽນເອກະສານ ແລະ ຜູ້ແປພາສາ 95

22 ການສະໜັບສະໜູນ **96**
22.1 ການສະໜັບສະໜູນໂດຍອາສາສະໝັກ 96
22.1.1 ພາສາອັງກິດ 96
22.1.2 ພາສານໍເວ 96
22.1.3 ພາສາເຢຍລະມັນ 96
22.1.4 ພາສາຝຣັ່ງ 96
22.2 ການສະໜັບສະໜູນແບບມືອາຊີບ 96

23 New features in Debian Edu Bookworm **96**
23.1 ຟີເຈີໃໝ່ສຳລັບ Debian Edu 12 Bookworm 96
23.1.1 ການປ່ຽນແປງໃນການຕິດຕັ້ງ 96
23.1.2 ການອັບເດດຊອບແວ 97
23.1.3 ການອັບເດດເອກະສານ ແລະ ການແປພາສາ 97
23.1.4 ບັນຫາທີ່ພົບ 97

24 ລິຂະສິດ ແລະ ຜູ້ຂຽນ **97**

25 ການແປພາສາຂອງເອກະສານນີ້ **97**
25.1 ວິທີການແປເອກະສານນີ້ 98
25.1.1 ການແປໂດຍໃຊ້ໄຟລ໌ PO 98
25.1.2 ການແປທາງອອນລາຍໂດຍຜ່ານບຣາວເຊີ 98

26 ພາກຜະໜວກ A - ສັນຍາອະນຸຍາດສາທາລະນະທົ່ວໄປຂອງ GNU **98**
26.1 Manual for Debian Edu 12 Codename Bookworm 98
26.2 GNU GENERAL PUBLIC LICENSE 98
26.3 TERMS AND CONDITIONS FOR COPYING, DISTRIBUTION AND MODIFICATION 98

27 ພາກຜະໜວກ B - ຟີເຈີໃນເວີຊັ່ນເກົ່າ **101**
27.1 New features for Debian Edu 11 Codename Bullseye released 2021-08-14 101
27.1.1 ການປ່ຽນແປງໃນການຕິດຕັ້ງ 101
27.1.2 ການອັບເດດຊອບແວ 101
27.1.3 ການອັບເດດເອກະສານ ແລະ ການແປພາສາ 102
27.1.4 Other changes compared to the previous release 102
27.2 ຂໍ້ມູນປະຫວັດສາດກ່ຽວກັບເວີຊັ່ນເກົ່າ 103

1 Manual for Debian Edu 12 Codename bookworm

```
<b>b''ภb''b''ๅb''b''ฆb''b''□b''b''ปb'':</b>
2026 Bone NI
```



This is the manual for the Debian Edu 12 (bookworm) release.

The source at https://wiki.debian.org/DebianEdu/Documentation/Bookworm is a wiki and updated frequently.

ຄຳແປທີ່ຍັບເດດແລ້ວແມ່ນມີໃຫ້ເບິ່ງ ແບບອອນລາຍ.

2 ກ່ຽວກັບ Debian Edu ແລະ Skolelinux

Debian Edu ຫຼື Skolelinux ແມ່ນລະບົບປະຕິບັດການ Linux ທີ່ອີງໃສ່ Debian ໂດຍໃຫ້ສະພາບແວດລ້ອມທີ່ພ້ອມໃຊ້ງານທັນທີສຳລັບເຄືອຂ່າຍໂຮງຮຽນທີ່ໄດ້ຮັບການກຳນົດຄ່າຢ່າງສົມບູນ. ມັນໃຊ້ຮູບແບບການເຮັດວຽກແບບ ເຄື່ອງແມ່ຂ່າຍ-ເຄື່ອງລູກຂ່າຍ (client-server). ເຊີເວີ ແລະ ຄລາຍແອນ ແມ່ນ ຊອບແວ ທີ່ເຮັດວຽກຮ່ວມກັນ. ເຊີເວີຈະໃຫ້ຂໍ້ມູນທີ່ຄລາຍແອນຕ້ອງການເພື່ອເຮັດວຽກ. ເມື່ອຕິດຕັ້ງເຊີເວີໄວ້ໃນເຄື່ອງໜຶ່ງ ແລະ ຄລາຍແອນໄວ້ໃນອີກເຄື່ອງໜຶ່ງ, ຕົວເຄື່ອງຄອມພິວເຕີເອງກໍຈະຖືກເອີ້ນວ່າ ເຊີເວີ ແລະ ຄລາຍແອນ ຕາມແນວຄວາມຄິດນີ້.

ບົດກ່ຽວກັບ ຄວາມຕ້ອງການດ້ານຮາດແວ ແລະ ເຄືອຂ່າຍ ແລະ ກ່ຽວກັບ ສະຖາປັດຕະຍະກຳ ຈະມີລາຍລະອຽດ ການອອກແບບລະບົບພື້ນຖານ.

ຫຼັງຈາກຕິດຕັ້ງເຊີເວີຫຼັກແລ້ວ, ການບໍລິການທັງໝົດທີ່ຈຳເປັນສຳລັບເຄືອຂ່າຍໂຮງຮຽນຈະຖືກຕັ້ງຄ່າ ແລະ ລະບົບ ກໍພ້ອມທີ່ຈະໃຊ້ງານ. ພຽງແຕ່ເພີ່ມຜູ້ໃຊ້ ແລະ ເຄື່ອງຄອມພິວເຕີຜ່ານ GOsa², ເຊິ່ງເປັນ Web-UI ທີ່ສະດວກ, ຫຼື ຕົວແກ້ໄຂ LDAP ອື່ນໆ. ສະພາບແວດລ້ອມການບູດຜ່ານເຄືອຂ່າຍໂດຍໃຊ້ PXE/iPXE ກໍໄດ້ຖືກກຽມໄວ້ແລ້ວ, ດັ່ງນັ້ນຫຼັງຈາກການຕິດຕັ້ງເຊີເວີຫຼັກຈາກ CD, ແຜ່ນ Blu-ray ຫຼື USB flash drive, ເຄື່ອງອື່ນໆທັງໝົດສາມາດຕິດຕັ້ງຜ່ານເຄືອຂ່າຍໄດ້, ລວມທັງ "ສະຖານີວຽກແບບໂຮມມິ່ງ" (ເຄື່ອງທີ່ສາມາດນຳອອກໄປນອກເຄືອຂ່າຍໂຮງຮຽນໄດ້, ສ່ວນຫຼາຍແມ່ນ ແລັບທ໊ອບ ຫຼື ເນັດບຸກ). ນອກຈາກນີ້, ເຄື່ອງຍັງສາມາດບູດຜ່ານ PXE/iPXE ໃນຮູບແບບສະຖານີວຽກແບບບໍ່ມີດິສ ຫຼື ເຄື່ອງລູກຂ່າຍແບບບາງໄດ້.

ແອັບພລິເຄຊັນເພື່ອການສຶກສາຫຼາຍຢ່າງເຊັ່ນ GeoGebra, Kalzium, KGeography, GNU Solfege ແລະ Scratch ແມ່ນຖືກລວມເຂົ້າໃນການຕັ້ງຄ່າສະພາບແວດລ້ອມເດັສທ໊ອບເລີ່ມຕົ້ນ, ເຊິ່ງສາມາດຂະຫຍາຍອອກໄປໄດ້ຢ່າງງ່າຍດາຍ ແລະ ບໍ່ມີຂີດຈຳກັດຜ່ານຄັງຊອບແວຂອງ Debian.

2.1 ປະຫວັດຄວາມເປັນມາບາງສ່ວນ ແລະ ເປັນຫຍັງຈຶ່ງມີສອງຊື່

Debian Edu / Skolelinux ແມ່ນລະບົບປະຕິບັດການ Linux ທີ່ສ້າງຂຶ້ນໂດຍໂຄງການ Debian Edu. ໃນຖານະທີ່ເປັນການແຈກຢາຍແບບ Debian Pure Blend, ມັນຈຶ່ງເປັນ ໂຄງການຍ່ອຍຢ່າງເປັນທາງການຂອງ Debian.

ສິ່ງທີ່ໝາຍເຖິງສຳລັບໂຮງຮຽນຂອງທ່ານແມ່ນ Skolelinux ເປັນເວີຊັ່ນຂອງ Debian ທີ່ສະໜອງ ສະພາບແວດລ້ອມເຄືອຂ່າຍໂຮງຮຽນທີ່ໄດ້ຮັບການກຳນົດຄ່າຢ່າງສົມບູນ ແລະ ພ້ອມໃຊ້ງານທັນທີ.


ໂຄງການ Skolelinux ໃນປະເທດນອກແວ ໄດ້ຖືກສ້າງຕັ້ງຂຶ້ນໃນວັນທີ 2 ກໍລະກົດ 2001 ແລະ ໃນເວລາດຽວກັນ Raphaël Hertzog ກໍໄດ້ເລີ່ມ Debian-Edu ໃນປະເທດຝຣັ່ງ. ຕັ້ງແຕ່ປີ 2003 ເປັນຕົ້ນມາ, ທັ້ງສອງ ໂຄງການໄດ້ລວມເຂົ້າກັນ, ແຕ່ທັ້ງສອງຊື່ຍັງຄົງຢູ່. "Skole" ແລະ (Debian-) "Education" ແມ່ນພຽງແຕ່ສອງຄຳສັບທີ່ເຂົ້າໃຈກັນດີໃນພາກພື້ນເຫຼົ່ານັ້ນ.

ໃນປັດຈຸບັນ ລະບົບນີ້ໄດ້ຖືກນຳໃຊ້ໃນຫຼາຍປະເທດທົ່ວໂລກ.

3 ສະຖາປັດຕະຍະກຳ

3.1 ເຄືອຂ່າຍ

ພາກສ່ວນນີ ຂອງ ເອກະສານ ຈະ ອະທິບາຍ ກ່ຽວກັບ ສະຖາປັດຕະຍະກຳ ເຄືອ ຂ່າຍ ແລະ ການ ບໍລິການ ຕ່າງໆ ທີ ໃຫ້ ໂດຍ ການ ຕິດຕັ້ງ Skolelinux.



ຮູບ ພາບ ນີ ແມ່ນ ແຜນ ຜັງ ຂອງ ໂຄງ ສ້າງ ເຄືອ ຂ່າຍ ທີ ໄດ້ ກຳ ນົດ ໄວ້. ການ ຕັ້ງ ຄ່າ ເລີ ມ ຕົ ນ ຂອງ ເຄືອ ຂ່າຍ Skolelinux ສົ ມ ມຸ ດ ວ່າ ມີ ເຊີ ເວີ ຫຼັ ກ ພຽງ ແຕ່ ເຄື ອ ງ ດຽວ ເທົ່ ານັ ນ, ໃນ ຂະ ນະ ທີ ອະ ນຸ ຍາ ດ ໃຫ້ ລວມ ເອົ າ ທັ ງ ສະ ຖາ ນິ ວ ຽ ກ ປົ ກ ກະ ຕິ ແລະ ເຊີ ເວີ LTSP (ພ້ ອ ມ ກັ ບ ເຄື ອ ງ ລູ ກ ຂ່ າ ຍ ແບ ບ ບາ ງ ແລະ/ ຫຼື ສະ ຖາ ນິ ວ ຽ ກ ແບ ບ ບໍ່ ມີ ດິ ສ). ຈຳ ນວນ ສະ ຖາ ນິ ວ ຽ ກ ສາ ມ າ ດ ມີ ຫຼາ ຍ ຫຼື ໜ້ ອ ຍ ຕາ ມ ທີ ທ່ ານ ຕ້ ອ ງ ການ (ຕັ ງ ແຕ່ ບໍ່ ມີ ເລີ ຍ ຈົ ນ ເຖິ ງ ມີ ຫຼາ ຍ ໆ). ເຊັ ນ ດຽ ວ ກັ ນ ກັ ບ ເຊີ ເວີ LTSP, ເຊິ ງ ແຕ່ ລະ ເຄື ອ ງ ຈະ ຢູ່ ໃນ ເຄື ອ ຂ່ າ ຍ ແຍ ກ ຕ່ າ ງ ຫາ ກ ເພື ອ ບໍ່ ໃຫ້ ການ ຮັ ບ ສົ ງ ຂໍ້ ມູ ນ ລະ ຫວ່ າ ງ ຄ ລ າ ຍ ແ ອ ນ ແລະ ເຊີ ເ ວ ີ LTSP ສົ ງ ຜົ ນ ກ ະ ທົ ບ ຕໍ່ ກ ານ ບໍ ລ ິ ກ ານ ເ ຄ ື ອ ຂ ່ າ ຍ ອ ື ນ ໆ. LTSP ຖ ື ກ ອ ະ ທ ິ ບ າ ຍ ຢ ່ າ ງ ລ ະ ອ ຽ ດ ໃ ນ ປ ຶ ດ ວ ິ ທ ີ ກ ານ ທ ີ ່ ກ ຽ ວ ຂ ້ ອ ງ (HowTo).

ເຫ ດ ຜົ ນ ທ ີ ມ ີ ເ ຊ ີ ເ ວ ີ ຫ ຼ ັ ກ ໄ ດ ້ ພ ຽ ງ ເ ຄ ື ອ ງ ດ ຽ ວ ໃ ນ ແ ຕ ່ ລ ະ ເ ຄ ື ອ ຂ ່ າ ຍ ໂ ຮ ງ ຮ ຽ ນ ກ ໍ ຄ ື ເ ຊ ີ ເ ວ ີ ຫ ຼ ັ ກ ເ ປ ັ ນ ຜ ູ ້ ໃ ຫ ້ ບ ໍ ລ ິ ກ ານ DHCP, ແ ລ ະ ສ າ ມ າ ດ ມ ີ ພ ຽ ງ ເ ຄ ື ອ ງ ດ ຽ ວ ເ ທ ົ ່ າ ນ ັ ນ ທ ີ ່ ເ ຮ ັ ດ ໜ ້ າ ທ ີ ່ ນ ີ ້ ໃ ນ ແ ຕ ່ ລ ະ ເ ຄ ື ອ ຂ ່ າ ຍ. ມ ັ ນ ເ ປ ັ ນ ໄ ປ ໄ ດ ້ ທ ີ ່ ຈ ະ ຍ ້ າ ຍ ກ ານ ບ ໍ ລ ິ ກ ານ ຈ າ ກ ເ ຊ ີ ເ ວ ີ ຫ ຼ ັ ກ ໄ ປ ຫ າ ເ ຄ ື ອ ງ ອ ື ນ ໂ ດ ຍ ກ ານ ຕ ັ ງ ຄ ່ າ ກ ານ ບ ໍ ລ ິ ກ ານ ນ ັ ນ ໃ ນ ອ ີ ກ ເ ຄ ື ອ ງ ໜ ຶ ່ ງ, ແ ລ ້ ວ ຈ ຶ ່ ງ ອ ັ ບ ເ ດ ດ ກ ານ ກ ຳ ນ ົ ດ ຄ ່ າ DNS ເ ພ ື ່ ອ ໃ ຫ ້ ຊ ື DNS ຂ ອ ງ ກ ານ ບ ໍ ລ ິ ກ ານ ນ ັ ນ ຊ ີ ໄ ປ ຫ າ ເ ຄ ື ອ ງ ຄ ອ ມ ພ ິ ວ ເ ຕ ີ ທ ີ ່ ຖ ື ກ ຕ ້ ອ ງ.

ເ ພ ື ່ ອ ເ ຮ ັ ດ ໃ ຫ ້ ກ ານ ຕ ັ ງ ຄ ່ າ ເ ລ ີ ມ ຕ ົ ນ ຂ ອ ງ Skolelinux ງ ່ າ ຍ ຂ ຶ ້ ນ, ກ ານ ເ ຊ ື ່ ອ ມ ຕ ໍ ່ ອ ິ ນ ເ ຕ ີ ເ ນ ັ ດ ຈ ະ ຜ ່ ານ ຣ າ ວ ເ ຕ ີ ແ ຍ ກ ຕ ່ າ ງ ຫ າ ກ, ເ ຊ ິ ງ ເ ອ ີ ນ ວ ່ າ ເ ກ ດ ເ ວ (gateway). ເ ບ ິ ່ ງ ບ ຶ ດ ຣ າ ວ ເ ຕ ີ ອ ິ ນ ເ ຕ ີ ເ ນ ັ ດ ສ ໍ າ ລ ັ ບ ລ າ ຍ ລ ະ ອ ຽ ດ ວ ິ ທ ີ ກ ານ ຕ ັ ງ ຄ ່ າ ເ ກ ດ ເ ວ ດ ັ ່ ງ ກ ່ າ ວ ຫ າ ກ ບ ໍ ສ າ ມ າ ດ ກ ຳ ນ ົ ດ ຄ ່ າ ຣ າ ວ ເ ຕ ີ ທ ີ ມ ີ ຢ ູ ່ ແ ລ ້ ວ ຕ າ ມ ທ ີ ຕ ້ ອ ງ ກ ານ ໄ ດ ້.

3.1.1 ການຕັ້ງຄ່າເຄືອຂ່າຍເລີ່ມຕົ້ນ

DHCP ໃນເຊີເວີຫຼັກຈະໃຫ້ບໍລິການໃນເຄືອຂ່າຍ 10.0.0.0/8, ໂດຍສະໜອງເມນູບູດ PXE ເຊິ່ງຫ່ານ ສາມາດເລືອກໄດ້ວ່າຈະຕິດຕັ້ງເຊີເວີ/ສະຖານີວຽກໃໝ່, ບູດເຄື່ອງລູກຂ່າຍແບບບາງ ຫຼື ສະຖານີວຽກແບບບໍ່ມີດິສ, ເຮັດວຽກ memtest, ຫຼື ບູດຈາກຮາດດິສພາຍໃນເຄື່ອງ.

ສິ່ງນີ້ຖືກອອກແບບມາໃຫ້ສາມາດປ່ຽນແປງໄດ້; ສຳລັບລາຍລະອຽດ, ໃຫ້ເບິ່ງບົດ ວິທີການທີ່ກ່ຽວຂ້ອງ (HowTo).

DHCP ໃນເຊີເວີ LTSP ຈະໃຫ້ບໍລິການສະເພາະເຄືອຂ່າຍທີ່ກຳນົດໄວ້ໃນອິນເຕີເຟດທີ່ສອງເທົ່ານັ້ນ (192.168.0.0/24 ແລະ 192.168.1.0/24 ແມ່ນທາງເລືອກທີ່ຕັ້ງຄ່າໄວ້ລ່ວງໜ້າ) ແລະ ບໍ່ຄ່ອຍມີຄວາມຈຳເປັນທີ່ຈະຕ້ອງປ່ຽນແປງ.

ການກຳນົດຄ່າຂອງທຸກໆເຄືອຂ່າຍຍ່ອຍ (subnet) ແມ່ນຖືກເກັບໄວ້ໃນ LDAP.

3.1.2 ເຊີເວີຫຼັກ

ເຄືອຂ່າຍ Skolelinux ຕ້ອງການເຊີເວີຫຼັກເຄື່ອງໜຶ່ງ (ຊື່ໂຮສແມ່ນ ”tjener” ເຊິ່ງເປັນພາສານອກແວ ແປວ່າ ”ເຊີເວີ”) ເຊິ່ງໂດຍເລີ່ມຕົ້ນຈະມີທີ່ຢູ່ IP ແມ່ນ 10.0.2.2 ແລະ ຖືກຕິດຕັ້ງໂດຍການເລືອກ ໂປຣໄຟລ໌ Main Server. ມັນເປັນໄປໄດ້ (ແຕ່ບໍ່ບັງຄັບ) ທີ່ຈະເລືອກ ແລະ ຕິດຕັ້ງໂປຣໄຟລ໌ LTSP Server ແລະ Workstation ເພີ່ມເຕີມເຂົ້າກັບໂປຣໄຟລ໌ Main Server ນຳ.

3.1.3 ການບໍລິການຕ່າງໆທີ່ເຮັດວຽກຢູ່ໃນເຊີເວີຫຼັກ

ຍົກເວັ້ນການຄວບຄຸມເຄື່ອງລູກຂ່າຍແບບບາງ, ການບໍລິການທັງໝົດຈະຖືກຕັ້ງຄ່າເລີ່ມຕົ້ນໃນຄອມພິວເຕີ ສູນກາງເຄື່ອງດຽວ (ເຊີເວີຫຼັກ). ເພື່ອປະສິດທິພາບ, ເຊີເວີ LTSP ຄວນແຍກຕ່າງຫາກ (ເຖິງແມ່ນວ່າຈະສາມາດຕິດຕັ້ງທັງໂປຣໄຟລ໌ Main Server ແລະ LTSP Server ໃນເຄື່ອງດຽວກັນໄດ້ກໍຕາມ). ທຸກໆການບໍລິການຈະຖືກກຳນົດຊື່ DNS ສະເພາະ ແລະ ໃຫ້ບໍລິການຜ່ານ IPv4 ເທົ່ານັ້ນ. ຊື່ DNS ທີ່ກຳນົດໄວ້ເຮັດໃຫ້ງ່າຍຕໍ່ການຍ້າຍການບໍລິການແຕ່ລະຢ່າງຈາກເຊີເວີຫຼັກໄປຫາເຄື່ອງອື່ນ, ໂດຍພຽງແຕ່ ຢຸດການບໍລິການໃນເຊີເວີຫຼັກ, ແລະ ປ່ຽນການກຳນົດຄ່າ DNS ໃຫ້ຊີ້ໄປຫາບ່ອນໃໝ່ຂອງການບໍລິການ (ເຊິ່ງແນ່ນອນວ່າຕ້ອງໄດ້ຕັ້ງຄ່າໃນເຄື່ອງນັ້ນກ່ອນ).

ເພື່ອຄວາມປອດໄພ, ທຸກໆການເຊື່ອມຕໍ່ທີ່ມີການສົ່ງລະຫັດຜ່ານຜ່ານເຄືອຂ່າຍຈະຖືກເຂົ້າລະຫັດ, ດັ່ງນັ້ນຈຶ່ງບໍ່ມີການສົ່ງລະຫັດຜ່ານຜ່ານເຄືອຂ່າຍໃນຮູບແບບຂໍ້ຄວາມທຳມະດາ.

ລຸ່ມນີ້ແມ່ນຕາຕະລາງການບໍລິການທີ່ຖືກຕັ້ງຄ່າໂດຍເລີ່ມຕົ້ນໃນເຄືອຂ່າຍ Skolelinux ແລະ ຊື່ DNS ຂອງແຕ່ລະການບໍລິການ. ຖ້າເປັນໄປໄດ້, ໄຟລ໌ການກຳນົດຄ່າທັງໝົດຈະອ້າງອີງເຖິງການບໍລິການດ້ວຍຊື່ (ໂດຍບໍ່ມີຊື່ໂດເມນ) ເພື່ອໃຫ້ໂຮງຮຽນສາມາດປ່ຽນແປງໂດເມນຂອງຕົນເອງ ຫຼື ທີ່ຢູ່ IP ທີ່ໃຊ້ໄດ້ງ່າຍ.

ຕາຕະລາງການບໍລິການ		
ລາຍລະອຽດການບໍລິການ	**ຊື່ທົ່ວໄປ**	**ຊື່ບໍລິການ DNS**
ການບັນທຶກລັອກແບບລວມສູນ	rsyslog	syslog
ການບໍລິການຊື່ໂດເມນ	DNS (BIND)	domain
ການຕັ້ງຄ່າເຄືອຂ່າຍອັດຕະໂນມັດສຳລັບເຄື່ອງຄອມພິວເຕີ	DHCP	bootps
ການປັບເວລາໃຫ້ກົງກັນ	NTP	ntp
ໄດເຣັກທໍຣີຫຼັກຜ່ານລະບົບໄຟລ໌ເຄືອຂ່າຍ	SMB / NFS	homes
ຫ້ອງການໄປສະນີອີເລັກໂທຣນິກ	IMAP (Dovecot)	postoffice
ການບໍລິການໄດເຣັກທໍຣີ	OpenLDAP	ldap
ການຈັດການຜູ້ໃຊ້	GOsa²	---
ເວັບເຊີເວີ	Apache/PHP	www
ການສຳຮອງຂໍ້ມູນແບບລວມສູນ	sl-backup, slbackup-php	backup
ເວັບແຄຊ໌	ພຣັອກຊີ (Squid)	webcache
ການພິມ	CUPS	ipp
ການເຂົ້າສູ່ລະບົບໄລຍະໄກແບບປອດໄພ	OpenSSH	ssh
ການກຳນົດຄ່າອັດຕະໂນມັດ	CFEngine	cfengine
ເຊີເວີ LTSP	LTSP	ltsp

ການຕິດຕາມເຄື່ອງ ແລະ ການບໍລິການ ພ້ອມລາຍງານຂໍ້ຜິດພາດ, ລວມທັ້ງ ສະຖານະ ແລະ ປະຫວັດທົ່ງເວັບ. ລາຍງານຂໍ້ຜິດພາດຜ່ານອີເມລ	Munin, Icinga ແລະ Sitesummary	sitesummary

ໄຟລ໌ສ່ວນຕົວສຳລັບຜູ້ໃຊ້ແຕ່ລະຄົນແມ່ນຖືກເກັບໄວ້ໃນໄດເຣັກທໍຣີຫຼັກ (home directories), ເຊິ່ງ ເຊີເວີເປັນຜູ້ໃຫ້ບໍລິການ. ໄດເຣັກທໍຣີຫຼັກສາມາດເຂົ້າເຖິງໄດ້ຈາກທຸກໆເຄື່ອງ, ເຮັດໃຫ້ຜູ້ໃຊ້ສາມາດ ເຂົ້າເຖິງໄຟລ໌ດຽວກັນໄດ້ ບໍ່ວ່າເຂົາເຈົ້າຈະໃຊ້ເຄື່ອງໃດກໍຕາມ. ເຊີເວີຮອງຮັບລະບົບປະຕິບັດການ ທີ່ຫຼາກຫຼາຍ, ໂດຍໃຫ້ການເຂົ້າເຖິງຜ່ານ NFS ສຳລັບຄລາຍແອນ Unix ແລະ ຜ່ານ SMB2/SMB3 ສຳລັບຄລາຍແອນອື່ນໆ.

ໂດຍເລີ່ມຕົ້ນ, ອີເມລຈະຖືກຕັ້ງຄ່າໃຫ້ສົ່ງພາຍໃນທ້ອງຖິ່ນ (ພາຍໃນໂຮງຮຽນ) ເທົ່ານັ້ນ, ເຖິງແມ່ນວ່າການສົ່ງອີເມລໄປຫາອິນເຕີເນັດ ພາຍນອກສາມາດຕັ້ງຄ່າໄດ້ ຫາກໂຮງຮຽນມີການເຊື່ອມຕໍ່ ອິນເຕີເນັດແບບຖາວອນ. ຄລາຍແອນຖືກຕັ້ງຄ່າໃຫ້ສົ່ງເມລໄປຫາເຊີເວີ (ໂດຍໃຊ້ 'smarthost'), ແລະ ຜູ້ໃຊ້ສາມາດ ເຂົ້າເຖິງເມລສ່ວນຕົວຂອງເຂົາເຈົ້າ ຜ່ານ IMAP.

ທຸກໆການບໍລິການສາມາດເຂົ້າເຖິງໄດ້ໂດຍໃຊ້ຊື່ຜູ້ໃຊ້ ແລະ ລະຫັດຜ່ານດຽວກັນ, ຍ້ອນມີ ຖານຂໍ້ມູນຜູ້ໃຊ້ສູນກາງສຳລັບການຢືນຢັນ ຕົວຕົນ ແລະ ການກຳນົດສິດ.

ເພື່ອເພີ່ມປະສິດທິພາບໃນການເຂົ້າເຖິງເວັບໄຊທ໌ໃຊ້ເລື້ອຍໆ, ຈຶ່ງມີການໃຊ້ເວັບພຣັອກຊີ່ທ໌ ເກັບແຄຊ໌ໄຟລ໌ໄວ້ໃນທ້ອງຖິ່ນ (Squid). ຮ່ວມ ກັບການບລັອກການຮັບສົ່ງຂໍ້ມູນເວັບໃນຣາວເຕີ, ສົ່ງນີ້ຍັງຊ່ວຍໃຫ້ສາມາດຄວບຄຸມການເຂົ້າເຖິງອິນເຕີເນັດໃນແຕ່ລະເຄື່ອງໄດ້.

ການຕັ້ງຄ່າເຄືອຂ່າຍໃນເຄື່ອງລູກຂ່າຍແມ່ນເຮັດໂດຍອັດຕະໂນມັດໂດຍໃຊ້ DHCP. ຄລາຍແອນທຸກປະເພດ ສາມາດເຊື່ອມຕໍ່ກັບເຄືອ ຂ່າຍສ່ວນຕົວ 10.0.0.0/8 ແລະ ຈະໄດ້ຮັບທີ່ຢູ່ IP ທີ່ກ່ຽວຂ້ອງ; ສ່ວນຄລາຍແອນ LTSP ຄວນເຊື່ອມຕໍ່ກັບເຊີເວີ LTSP ທີ່ກ່ຽວຂ້ອງ ຜ່ານເຄືອຂ່າຍແຍກ 192.168.0.0/24 (ເພື່ອໃຫ້ແນ່ໃຈວ່າການຮັບສົ່ງຂໍ້ມູນເຄືອຂ່າຍຂອງຄລາຍແອນ LTSP ຈະບໍ່ໄປລົບກວນ ການ ບໍລິການເຄືອຂ່າຍອື່ນໆ).

ການບັນທຶກລັອກແບບລວມສູນຖືກຕັ້ງຄ່າເພື່ອໃຫ້ທຸກໆເຄື່ອງສົ່ງຂໍ້ຄວາມ syslog ໄປຫາເຊີເວີ. ການບໍລິການ syslog ຖືກຕັ້ງຄ່າໃຫ້ຮັບ ຂໍ້ຄວາມທີ່ສົ່ງມາຈາກເຄືອຂ່າຍພາຍໃນເທົ່ານັ້ນ.

ໂດຍເລີ່ມຕົ້ນ, ເຊີເວີ DNS ຈະຖືກຕັ້ງຄ່າດ້ວຍໂດເມນສຳລັບໃຊ້ພາຍໃນເທົ່ານັ້ນ (*.intern), ຈົນກວ່າຈະມີການຕັ້ງຄ່າໂດເມນ DNS ຈິງ (”ພາຍນອກ”). ເຊີເວີ DNS ຖືກຕັ້ງຄ່າເປັນ ເຊີເວີ DNS ແບບແຄຊ໌ ເພື່ອໃຫ້ທຸກໆເຄື່ອງໃນເຄືອຂ່າຍສາມາດໃຊ້ເປັນເຊີເວີ DNS ຫຼັກ ໄດ້.

ນັກຮຽນ ແລະ ຄູສາມາດເຜີຍແຜ່ເວັບໄຊໄດ້. ເວັບເຊີເວີມີກົນໄກສຳລັບການຢືນຢັນຕົວຕົນຜູ້ໃຊ້, ແລະ ສຳລັບການຈຳກັດການເຂົ້າເຖິງ ແຕ່ລະໜ້າ ແລະ ໄດເຣັກທໍຣີຍ່ອຍໃຫ້ກັບຜູ້ໃຊ້ ແລະ ກຸ່ມ ທີ່ກຳນົດໄວ້. ຜູ້ໃຊ້ຈະສາມາດສ້າງເວັບໄຊແບບໄດນາມິກໄດ້ ເນື່ອງຈາກເວັບ ເຊີເວີສາມາດ ຂຽນໂປຣແກຣມໄດ້ຈາກຝັ່ງເຊີເວີ.

ຂໍ້ມູນກ່ຽວກັບຜູ້ໃຊ້ ແລະ ເຄື່ອງຄອມພິວເຕີສາມາດປ່ຽນແປງໄດ້ໃນບ່ອນສູນກາງດຽວ, ແລະ ຈະຖືກເຮັດໃຫ້ເຂົ້າເຖິງ ໄດ້ໂດຍທຸກໆ ຄອມພິວເຕີໃນເຄືອຂ່າຍໂດຍອັດຕະໂນມັດ. ເພື່ອບັນລຸ ສິ່ງນີ້, ຈຶ່ງມີການຕັ້ງຄ່າເຊີເວີໄດເຣັກທໍຣີແບບລວມສູນ. ໄດເຣັກທໍຣີຈະມີ ຂໍ້ມູນກ່ຽວກັບ ຜູ້ໃຊ້, ກຸ່ມຜູ້ໃຊ້, ເຄື່ອງຄອມພິວເຕີ ແລະ ກຸ່ມຂອງເຄື່ອງຄອມພິວເຕີ. ເພື່ອຫຼີກເວັ້ນຄວາມສັບສົນ ຂອງຜູ້ໃຊ້, ຈະບໍ່ມີ ຄວາມແຕກຕ່າງລະຫວ່າງກຸ່ມໄຟລ໌ ແລະ ກຸ່ມເຄືອຂ່າຍ. ສິ່ງນີ້ໝາຍເຖິງ ກຸ່ມຂອງເຄື່ອງຄອມພິວເຕີທີ່ຈະສ້າງເປັນກຸ່ມເຄືອຂ່າຍຈະໃຊ້ ພື້ນທີ່ຊື່ (namespace) ດຽວກັນກັບກຸ່ມຜູ້ໃຊ້.

ການ ຈັດການ ການ ບໍລິການ ແລະ ຜູ້ ໃຊ້ ສ່ວນ ໃຫຍ່ ຈະ ຜ່ານ ເວັບ, ແລະ ເປັນ ໄປ ຕາມ ມາດ ຕະ ຖານ ທີ່ ກຳ ນົດ ໄວ້, ເຮັດ ວຽກ ໄດ້ ດີ ໃນ ເວັບ ບຣາ ວເຊີ ທີ່ ເປັນ ສ່ວນ ໜຶ່ ງ ຂອງ Skolelinux. ການ ມອບ ໝາຍ ວຽກ ບາງ ຢ່ າ ງ ໃຫ້ ກັບ ຜູ້ ໃຊ້ ແຕ່ ລະ ຄົນ ຫຼື ກຸ່ ມ ຜູ້ ໃຊ້ ຈະ ສາ ມາດ ເຮັດ ໄດ້ ຜ່ ານ ລະ ບົບ ການ ຈັດ ການ.

ເພື່ອຫຼີກເວັ້ນບັນຫາບາງຢ່າງກັບ NFS, ແລະ ເພື່ອໃຫ້ງ່າຍຕໍ່ການກວດສອບບັນຫາ, ເຄື່ອງຕ່າງໆ ຈຳເປັນຕ້ອງມີການປັບເວລາໃຫ້ກົງກັນ. ເພື່ອບັນລຸສິ່ງນີ້, ເຊີເວີ Skolelinux ຈະຖືກຕັ້ງຄ່າເປັນ ເຊີເວີ Network Time Protocol (NTP) ພາຍໃນ, ແລະ ສະຖານີວຽກ ແລະ ຄລາຍແອນທັງໝົດ ຈະຖືກຕັ້ງຄ່າໃຫ້ຊິ້ງໂຄຣໄນຊ໌ເວລາກັບເຊີເວີ. ເຊີເວີເອງຄວນຊິ້ງໂຄຣໄນຊ໌ເວລາກັບເຄື່ອງ ໃນອິນເຕີເນັດຜ່ານ NTP ເພື່ອໃຫ້ແນ່ໃຈວ່າທັ້ງເຄືອຂ່າຍມີເວລາທີ່ຖືກຕ້ອງ.

ເຄື່ອງພິມຈະຖືກເຊື່ອມຕໍ່ໃນບ່ອນທີ່ສະດວກ, ບໍ່ວ່າຈະເປັນການເຊື່ອມຕໍ່ໂດຍກົງກັບເຄືອຂ່າຍຫຼັກ, ຫຼື ເຊື່ອມຕໍ່ກັບເຊີເວີ, ສະຖານີວຽກ ຫຼື ເຊີເວີ LTSP. ການເຂົ້າເຖິງເຄື່ອງພິມສາມາດ ຄວບຄຸມໄດ້ສຳລັບຜູ້ໃຊ້ແຕ່ລະຄົນຕາມກຸ່ມທີ່ເຂົາເຈົ້າສັງກັດ; ສົ່ງນີ້ຈະເຮັດໄດ້ໂດຍການໃຊ້ ໂຄຕ້າ (quota) ແລະ ການຄວບຄຸມການເຂົ້າເຖິງສຳລັບເຄື່ອງພິມ.

3.1.4 ເຊີເວີ LTSP

ເຄືອຂ່າຍ Skolelinux ສາມາດມີເຊີເວີ LTSP ໄດ້ຫຼາຍເຄື່ອງ, ເຊິ່ງຕິດຕັ້ງໄດ້ໂດຍການເລືອກ ໂປຣໄຟລ໌ LTSP Server.

ເຊີເວີ LTSP ຖືກຕັ້ງຄ່າໃຫ້ຮັບ syslog ຈາກເຄື່ອງລູກຂ່າຍແບບບາງ ແລະ ສະຖານີວຽກ, ແລ້ວສົ່ງຂໍ້ຄວາມເຫຼົ່ານີ້ໄປຫາຜູ້ຮັບ syslog ສູນກາງ.

ກະລຸນາໝາຍເຫດ:

- ສະຖານີວຽກແບບບໍ່ມີດິສ LTSP ແມ່ນໃຊ້ໂປຣແກຣມທີ່ຕິດຕັ້ງຢູ່ໃນເຊີເວີ.
- ລະບົບ ໄຟລ໌ ຣາກ (root filesystem) ຂອງ ຄລາຍ ແອນ ແມ່ນ ໃຫ້ ບໍລິການ ໂດຍ ໃຊ້ NFS. ຫຼັງ ຈາກ ການ ປ່ຽນ ແປງ ແຕ່ ລະ ຄັ້ງ ໃນ ເຊີ ເວີ LTSP, ອິ ເມ ຈ (image) ທີ ກ່ ຽວ ຂ້ ອງ ຈະ ຕ້ ອງ ຖືກ ສ້ າ ງ ໃໝ່; ໃຫ້ ແລ່ ນ ຄຳ ສັ່ ງ `debian-edu-ltsp-install --diskless_workstation yes` ໃນ ເຊີ ເວີ LTSP.

3.1.5 ເຄື່ອງລູກຂ່າຍແບບບາງ (Thin clients)

ການຕັ້ງຄ່າເຄື່ອງລູກຂ່າຍແບບບາງ ຊ່ວຍໃຫ້ PC ທຳມະດາສາມາດເຮັດໜ້າທີ່ເປັນ (X-)terminals ໄດ້. ສິ່ງນີ້ໝາຍຄວາມວ່າເຄື່ອງຈະບູດໂດຍກົງຈາກເຊີເວີໂດຍໃຊ້ PXE ໂດຍບໍ່ຕ້ອງໃຊ້ຮາດດິສ ໃນເຄື່ອງ. ປັດຈຸບັນການຕັ້ງຄ່າເຄື່ອງລູກຂ່າຍແບບບາງໃຊ້ X2Go, ເນື່ອງຈາກ LTSP ໄດ້ເລີກຮອງຮັບແລ້ວ.

ເຄື່ອງລູກຂ່າຍແບບບາງແມ່ນວິທີທີ່ດີໃນການນຳໃຊ້ເຄື່ອງເກົ່າໆ (ສ່ວນຫຼາຍແມ່ນ 32-ບິດ) ເພາະວ່າພວກມັນຈະແລ່ນໂປຣແກຣມທັງໝົດໃນເຊີເວີ LTSP. ມັນເຮັດວຽກດັ່ງນີ້: ບໍລິການ ຈະໃຊ້ DHCP ແລະ TFTP ເພື່ອເຊື່ອມຕໍ່ກັບເຄືອຂ່າຍ ແລະ ບູດຈາກເຄືອຂ່າຍ. ຈາກນັ້ນ, ລະບົບໄຟລ໌ຈະຖືກເມົານ໌ (mount) ຈາກເຊີເວີ LTSP ໂດຍໃຊ້ NFS, ແລະ ສຸດທ້າຍ ຄລາຍແອນ X2Go ກໍຈະເລີ່ມເຮັດວຽກ.

3.1.6 ສະຖານີວຽກແບບບໍ່ມີດິສ (Diskless workstations)

ສະຖານີວຽກແບບບໍ່ມີດິສຈະແລ່ນຊອບແວທັງໝົດໃນເຄື່ອງ PC ໂດຍບໍ່ຕ້ອງມີລະບົບປະຕິບັດການ ຕິດຕັ້ງຢູ່ໃນເຄື່ອງ. ສິ່ງນີ້ໝາຍຄວາມວ່າເຄື່ອງລູກຂ່າຍຈະບູດຜ່ານ PXE ໂດຍບໍ່ຕ້ອງ ແລ່ນຊອບແວທີ່ຕິດຕັ້ງຢູ່ໃນຮາດດິສພາຍໃນ.

ສະຖານີວຽກແບບບໍ່ມີດິສແມ່ນວິທີທີ່ດີເລີດໃນການນຳໃຊ້ຮາດແວທີ່ມີປະສິດທິພາບສູງ ໂດຍມີຄ່າໃຊ້ຈ່າຍ ໃນການບຳລຸງຮັກສາຕ່ຳຄືກັນ ກັບເຄື່ອງລູກຂ່າຍແບບບາງ. ຊອບແວຈະຖືກຈັດການ ແລະ ບຳລຸງຮັກສາ ຢູ່ໃນເຊີເວີ ໂດຍບໍ່ຈຳເປັນຕ້ອງມີຊອບແວຕິດຕັ້ງຢູ່ໃນຄລາຍ ແອນ. ໄດເຣັກທໍຣີຫຼັກ ແລະ ການຕັ້ງຄ່າລະບົບກໍຖືກເກັບໄວ້ໃນເຊີເວີຄືກັນ.

3.1.7 ເຄື່ອງລູກຂ່າຍໃນເຄືອຂ່າຍ

ຄຳວ່າ ”ເຄື່ອງລູກຂ່າຍໃນເຄືອຂ່າຍ” ທີ່ໃຊ້ໃນຄູ່ມືນີ້ ໝາຍເຖິງທັງເຄື່ອງລູກຂ່າຍແບບບາງ ແລະ ສະຖານີວຽກແບບບໍ່ມີດິສ, ລວມທັງ ຄອມພິວເຕີທີ່ໃຊ້ macOS ຫຼື Windows.

3.2 ການບໍລິຫານຈັດການ

ເຄື່ອງ Linux ທັງໝົດທີ່ຕິດຕັ້ງດ້ວຍຕົວຕິດຕັ້ງ Skolelinux ຈະສາມາດຈັດການໄດ້ຈາກ ຄອມພິວເຕີສູນກາງ, ເຊິ່ງສ່ວນຫຼາຍແມ່ນເຊີເວີ. ມັນເປັນໄປໄດ້ທີ່ຈະເຂົ້າສູ່ລະບົບທຸກໆເຄື່ອງ ຜ່ານ SSH, ແລະ ເຂົ້າເຖິງເຄື່ອງໄດ້ຢ່າງສົມບູນ. ໃນຖານະ root ທ່ານຈຳເປັນຕ້ອງແລ່ນ `kinit` ກ່ອນເພື່ອຮັບ Kerberos TGT.

ຂໍ້ມູນຜູ້ໃຊ້ທັງໝົດຖືກເກັບໄວ້ໃນໄດເຣັກທໍຣີ LDAP. ການອັບເດດບັນຊີຜູ້ໃຊ້ແມ່ນເຮັດຜ່ານ ຖານຂໍ້ມູນນີ້, ເຊິ່ງຄລາຍແອນຈະໃຊ້ສຳລັບ ການຢືນຢັນຕົວຕົນຜູ້ໃຊ້.

3.2.1 ການຕິດຕັ້ງ

ປັດຈຸບັນມີອິເມຈສຳລັບການຕິດຕັ້ງສອງປະເພດ: netinst ແລະ BD. ທັງສອງອິເມຈ ສາມາດບູດຈາກ USB sticks ໄດ້.

ເປົ້າໝາຍຄືການສາມາດຕິດຕັ້ງເຊີເວີຈາກສື່ປະເພດໃດກໍໄດ້ພຽງຄັ້ງດຽວ, ແລະ ຕິດຕັ້ງ ຄລາຍແອນອື່ນໆທັງໝົດຜ່ານເຄືອຂ່າຍໂດຍ ການບູດຈາກເຄືອຂ່າຍ.

ສະເພາະອີເມຈ netinstall ເທົ່ານັ້ນທີ່ຕ້ອງການການເຂົ້າເຖິງອິນເຕີເນັດໃນລະຫວ່າງການຕິດຕັ້ງ.

ການຕິດຕັ້ງບໍ່ຄວນມີການຖາມຄໍາຖາມໃດໆ, ຍົກເວັ້ນພາສາທີ່ຕ້ອງການ, ສະຖານທີ, ຜັງແປ້ນພິມ ແລະ ໂປຣໄຟລ໌ຂອງເຄື່ອງ (Main Server, Workstation, LTSP Server, ...). ການກໍານົດຄ່າອື່ນໆທັງໝົດຈະຖືກຕັ້ງຄ່າໂດຍອັດຕະໂນມັດດ້ວຍຄ່າທີ່ເໝາະສົມ, ເຊິ່ງຜູ້ດູແລລະບົບສາມາດປ່ຽນແປງໄດ້ຈາກບ່ອນສູນກາງຫຼັງຈາກການຕິດຕັ້ງ.

3.2.2 ການກໍານົດຄ່າການເຂົ້າເຖິງລະບົບໄຟລ໌

ບັນຊີຜູ້ໃຊ້ Skolelinux ແຕ່ລະບັນຊີຈະຖືກກໍານົດສ່ວນຂອງລະບົບໄຟລ໌ໃນໄຟລ໌ເຊີເວີ. ສ່ວນນີ (ໄດເຣັກທໍຣີຫຼັກ) ຈະມີໄຟລ໌ການກໍານົດຄ່າຂອງຜູ້ໃຊ້, ເອກະສານ, ອີເມລ ແລະ ໜ້າເວັບ. ບາງໄຟລ໌ຄວນຖືກຕັ້ງຄ່າໃຫ້ຜູ້ໃຊ້ອື່ນໃນລະບົບສາມາດອ່ານໄດ້, ບາງໄຟລ໌ ຄວນໃຫ້ທຸກຄົນໃນອິນເຕີເນັດອ່ານໄດ້, ແລະ ບາງໄຟລ໌ກໍບໍ່ຄວນໃຫ້ໃຜອ່ານໄດ້ເລີຍ ນອກຈາກຕົວຜູ້ໃຊ້ເອງ.

ເພື່ອໃຫ້ແນ່ໃຈວ່າດິສທັງໝົດທີ່ໃຊ້ສໍາລັບໄດເຣັກທໍຣີຜູ້ໃຊ້ ຫຼື ໄດເຣັກທໍຣີທີ່ໃຊ້ຮ່ວມກັນ ສາມາດຕັ້ງຊື່ໃຫ້ບໍ່ຊ້ໍາກັນໃນທຸກໆຄອມພິວເຕີທີ່ຕິດຕັ້ງ, ພວກມັນສາມາດຖືກເມົານ໌ເປັນ `/skole/host/directory/`. ໃນເບື້ອງຕົ້ນ, ໄດເຣັກທໍຣີໜຶ່ງຈະຖືກສ້າງຂຶ້ນໃນໄຟລ໌ເຊີເວີ, `/skole/tjener/home0/`, ເຊິ່ງບັນຊີຜູ້ໃຊ້ທັງໝົດຈະຖືກສ້າງໄວ້ໃນນັ້ນ. ຈາກນັ້ນສາມາດສ້າງ ໄດເຣັກທໍຣີເພີ່ມເຕີມໄດ້ເມື່ອຈໍາເປັນ ເພື່ອຮອງຮັບກຸ່ມຜູ້ໃຊ້ສະເພາະ ຫຼື ຮູບແບບການໃຊ້ງານສະເພາະ.

ເພື່ອໃຫ້ສາມາດໃຊ້ໄຟລ໌ຮ່ວມກັນພາຍໃຕ້ລະບົບສິດຂອງ UNIX ປົກກະຕິ, ຜູ້ໃຊ້ຈໍາເປັນຕ້ອງ ຢູ່ໃນກຸ່ມທີ່ໃຊ້ຮ່ວມກັນເພີ່ມເຕີມ (ເຊັ່ນ ”students”) ນອກເໜືອຈາກກຸ່ມຫຼັກສ່ວນຕົວ ທີ່ເຂົາເຈົ້າຢູ່ໂດຍເລີ່ມຕົ້ນ. ຖ້າຜູ້ໃຊ້ມີ umask ທີ່ເໝາະສົມເພື່ອເຮັດໃຫ້ສິ່ງທີ່ສ້າງຂຶ້ນໃໝ່ ສາມາດເຂົ້າເຖິງໄດ້ໂດຍກຸ່ມ (002 ຫຼື 007), ແລະ ຖ້າໄດເຣັກທໍຣີທີ່ເຂົາເຈົ້າເຮັດວຽກຢູ່ ຖືກຕັ້ງເປັນ setgid ເພື່ອໃຫ້ແນ່ໃຈວ່າ ໄຟລ໌ຈະສືບທອດຄວາມເປັນເຈົ້າຂອງກຸ່ມທີ່ຖືກຕ້ອງ, ຜົນທີ່ໄດ້ກໍຄືການແບ່ງປັນໄຟລ໌ທີ່ຖືກຄວບຄຸມລະຫວ່າງສະມາຊິກໃນກຸ່ມ.

ການຕັ້ງຄ່າການເຂົ້າເຖິງເລີ່ມຕົ້ນສໍາລັບໄຟລ໌ທີ່ສ້າງຂຶ້ນໃໝ່ແມ່ນຂຶ້ນກັບນະໂຍບາຍ. umask ເລີ່ມຕົ້ນຂອງ Debian ແມ່ນ 022 (ເຊິ່ງ ຈະບໍ່ອະນຸຍາດໃຫ້ເຂົ້າເຖິງກຸ່ມດັ່ງທີ່ໄດ້ອະທິບາຍຂ້າງເທິງ), ແຕ່ Debian Edu ໃຊ້ຄ່າເລີ່ມຕົ້ນແມ່ນ 002 - ໝາຍຄວາມວ່າໄຟລ໌ຖືກ ສ້າງຂຶ້ນໂດຍໃຜ ທຸກຄົນສາມາດອ່ານໄດ້, ເຊິ່ງສາມາດຖອນອອກໄດ້ພາຍຫຼັງໂດຍການກະທໍາຂອງຜູ້ໃຊ້ເອງ. ອີກທາງເລືອກໜຶ່ງສາມາດ ປ່ຽນໄດ້ (ໂດຍການແກ້ໄຂ `/etc/pam.d/common-session`) ໃຫ້ເປັນ umask 007 - ໝາຍຄວາມວ່າການເຂົ້າເຖິງເພື່ອອ່ານຈະ ຖືກຍົກເວັ້ນໄວ້ໃນເບື້ອງຕົ້ນ, ແລະ ຜູ້ໃຊ້ຕ້ອງເປັນຜູ້ເປີດໃຫ້ເຂົ້າເຖິງເອງ. ວິທີທໍາອິດສົ່ງເສີມການແບ່ງປັນຄວາມຮູ້, ແລະ ເຮັດໃຫ້ລະບົບ ມີຄວາມໂປ່ງໃສຫຼາຍຂຶ້ນ, ໃນຂະນະທີ່ວິທີທີສອງຈະຊ່ວຍຫຼຸດຜ່ອນຄວາມສ່ຽງ ຂອງການແຜ່ກະຈາຍຂໍ້ມູນທີ່ລະອຽດອ່ອນໂດຍບໍ່ຕັ້ງໃຈ. ບັນຫາຂອງວິທີທໍາອິດຄືຜູ້ໃຊ້ ອາດຈະບໍ່ຮູ້ວ່າສິ່ງທີ່ເຂົາເຈົ້າສ້າງຂຶ້ນນັ້ນຜູ້ໃຊ້ອື່ນໆທຸກຄົນສາມາດເຂົ້າເຖິງໄດ້. ພວກເຂົາສາມາດຮູ້ໄດ້ກໍ ຕໍ່ເມື່ອໄປກວດເບິ່ງໄດເຣັກທໍຣີຂອງຜູ້ໃຊ້ອື່ນ ແລະ ເຫັນວ່າໄຟລ໌ ຂອງເຂົາເຈົ້າສາມາດອ່ານໄດ້. ສ່ວນບັນຫາຂອງວິທີທີສອງຄືມີໜ້ອຍ ຄົນທີ່ຈະເປີດ ໃຫ້ເຂົ້າເຖິງໄຟລ໌ຂອງຕົນ, ເຖິງແມ່ນວ່າໄຟລ໌ນັ້ນຈະບໍ່ມີຂໍ້ມູນທີ່ລະອຽດອ່ອນ ແລະ ເນື່ອໃນຈະເປັນປະໂຫຍດຕໍ່ຜູ້ໃຊ້ອື່ນທີ ຢາກຮຽນຮູ້ວິທີແກ້ໄຂບັນຫາບາງຢ່າງ (ໂດຍສະເພາະ ບັນຫາການກໍານົດຄ່າ).

4 ຄວາມຕ້ອງການຂອງລະບົບ

ມີຫຼາຍວິທີໃນການຕັ້ງຄ່າ Skolelinux. ມັນສາມາດຕິດຕັ້ງໃນ PC ເຄື່ອງດຽວແບບ Standalone, ຫຼື ເປັນວິທີການແກ້ໄຂໃນລະດັບ ພາກພື້ນສໍາລັບຫຼາຍໆໂຮງຮຽນທີ່ດໍາເນີນການແບບລວມສູນ. ຄວາມຍືດຢຸ່ນນີ້ເຮັດໃຫ້ເກີດຄວາມແຕກຕ່າງຢ່າງຫຼວງຫຼາຍຕໍ່ການກໍານົດ ຄ່າຂອງອຸປະກອນເຄືອຂ່າຍ, ເຊີເວີ ແລະ ເຄື່ອງລູກຂ່າຍ.

4.1 ຄວາມຕ້ອງການດ້ານຮາດແວ

ຈຸດປະສົງຂອງໂປຣໄຟລ໌ຕ່າງໆແມ່ນໄດ້ຖືກອະທິບາຍໄວ້ໃນບົດ ສະຖາປັດຕະຍະກໍາເຄືອຂ່າຍ.

ຫາກມີຈຸດປະສົງທີ່ຈະໃຊ້ LTSP, ໃຫ້ເຂົ້າໄປເບິ່ງທີ່ໜ້າ ຄວາມຕ້ອງການດ້ານຮາດແວຂອງ LTSP ໃນວິກິ.

- ຄອມພິວເຕີທີ່ແລ່ນ Debian Edu / Skolelinux ຕ້ອງໃຊ້ໂປຣເຊດເຊີ x86 ແບບ 32 ບິດ (ສະຖາປັດຕະຍະກໍາ Debian ’i386’, ໂປຣເຊດເຊີເກົ່າສຸດທີ່ຮອງຮັບຄືລະດັບ 686) ຫຼື ແບບ 64 ບິດ (ສະຖາປັດຕະຍະກໍາ Debian ’amd64’).
- ເຄື່ອງລູກຂ່າຍແບບບາງທີ່ມີ RAM ພຽງ 256 MiB ແລະ 400 MHz ກໍສາມາດໃຊ້ໄດ້, ແຕ່ແນະນໍາໃຫ້ມີ RAM ຫຼາຍຂຶ້ນ ແລະ ໂປຣ ເຊດເຊີທີ່ໄວກວ່າ.

- For workstations, diskless workstations and standalone systems, a SSE2 capable processor (Intel Pentium 4 or higher, AMD Athlon 64 or higher), 1500 MHz and 1024 MiB RAM are the absolute minimum requirements. For running modern webbrowsers and LibreOffice at least 2048 MiB RAM is recommended.
- ຄວາມຕ້ອງການພື້ນທີ່ວ່າງໃນດິສຂັ້ນຕ່ຳແມ່ນຂຶ້ນກັບໂປຣໄຟລ໌ທີ່ຕິດຕັ້ງ:
  - ເຊີເວີຫຼັກແບບລວມ + ເຊີເວີ LTSP + ສະຖານີວຽກ (ຫາກຕ້ອງການ GUI ໃນເຊີເວີ): 60 GiB (ບວກກັບພື້ນທີ່ເພີ່ມເຕີມສຳລັບບັນຊີຜູ້ໃຊ້).
  - ເຊີເວີ LTSP: 40 GiB.
  - ສະຖານີວຽກ ຫຼື Standalone: 30 GiB.
  - ການຕິດຕັ້ງເຄື່ອງໃນເຄືອຂ່າຍແບບຕ່ຳສຸດ: 4 GiB.
- ເຊີເວີ LTSP ຕ້ອງການກາດເຄືອຂ່າຍສອງໃບ ເມື່ອໃຊ້ສະຖາປັດຕະຍະກຳເຄືອຂ່າຍເລີ່ມຕົ້ນ:
  - eth0 ເຊື່ອມຕໍ່ກັບເຄືອຂ່າຍຫຼັກ (10.0.0.0/8),
  - eth1 ໃຊ້ສຳລັບໃຫ້ບໍລິການຄລາຍແອນ LTSP.
- ແລັບທັອບແມ່ນສະຖານີວຽກທີ່ເຄື່ອນຍ້າຍໄດ້, ດັ່ງນັ້ນພວກມັນຈຶ່ງມີຄວາມຕ້ອງການຄືກັນກັບສະຖານີວຽກ.

4.2 ຮາດແວທີ່ຢືນຢັນແລ້ວວ່າໃຊ້ງານໄດ້

ລາຍຊື່ຮາດແວທີ່ຜ່ານການທົດສອບແລ້ວແມ່ນມີໃຫ້ຢູ່ທີ່ https://wiki.debian.org/DebianEdu/Hardware/. ລາຍຊື່ນີ້ຍັງບໍ່ທັນສົມບູນເທື່ອ.

https://wiki.debian.org/InstallingDebianOn ແມ່ນຄວາມພະຍາຍາມໃນການ ບັນທຶກວິທີການຕິດຕັ້ງ, ກຳນົດຄ່າ ແລະ ນຳໃຊ້ Debian ໃນຮາດແວສະເພາະບາງຢ່າງ, ເພື່ອໃຫ້ຜູ້ທີ່ອາດຈະຊື້ໄດ້ຮູ້ວ່າຮາດແວນັ້ນຮອງຮັບຫຼືບໍ່ ແລະ ໃຫ້ເຈົ້າຂອງທີ່ມີຢູ່ແລ້ວ ໄດ້ຮູ້ວິທີນຳໃຊ້ຮາດແວນັ້ນໃຫ້ເກີດປະໂຫຍດສູງສຸດ.

5 ຄວາມຕ້ອງການສຳລັບການຕັ້ງຄ່າເຄືອຂ່າຍ

5.1 ການຕັ້ງຄ່າເລີ່ມຕົ້ນ

ເມື່ອໃຊ້ສະຖາປັດຕະຍະກຳເຄືອຂ່າຍເລີ່ມຕົ້ນ, ກົດເກນີ້ຈະຖືກນຳໃຊ້:

- ທ່ານຕ້ອງການເຊີເວີຫຼັກພຽງເຄື່ອງດຽວເທົ່ານັ້ນ.
- ທ່ານສາມາດມີສະຖານີວຽກຫຼາຍຮ້ອຍເຄື່ອງໃນເຄືອຂ່າຍຫຼັກ.
- ທ່ານສາມາດມີເຊີເວີ LTSP ໄດ້ຫຼາຍເຄື່ອງໃນເຄືອຂ່າຍຫຼັກ; ສອງເຄືອຂ່າຍຍ່ອຍທີ່ແຕກຕ່າງກັນ ແມ່ນຖືກຕັ້ງຄ່າໄວ້ລ່ວງໜ້າ (DNS, DHCP) ໃນ LDAP, ແລະ ສາມາດເພີ່ມໄດ້ອີກ.
- ທ່ານສາມາດມີເຄື່ອງລູກຂ່າຍແບບບາງ ແລະ/ຫຼື ສະຖານີວຽກແບບບໍ່ມີດິສ ຫຼາຍຮ້ອຍເຄື່ອງ ໃນແຕ່ລະເຄືອຂ່າຍເຊີເວີ LTSP.
- ທ່ານສາມາດມີເຄື່ອງອື່ນໆອີກຫຼາຍຮ້ອຍເຄື່ອງທີ່ຈະໄດ້ຮັບທີ່ຢູ່ IP ແບບໄດນາມິກ.
- ສຳລັບການເຂົ້າເຖິງອິນເຕີເນັດ ທ່ານຕ້ອງການຣາວເຕີ/ເກດເວ (ເບິ່ງດ້ານລຸ່ມ).

5.2 ຣາວເຕີອິນເຕີເນັດ

ຣາວເຕີ/ເກດເວ ທີ່ເຊື່ອມຕໍ່ກັບອິນເຕີເນັດໃນອິນເຕີເຟດພາຍນອກ ແລະ ເຮັດວຽກຢູ່ທີ ທີ່ຢູ່ IP 10.0.0.1 ດ້ວຍ netmask 255.0.0.0 ໃນອິນເຕີເຟດພາຍໃນ, ແມ່ນຈຳເປັນສຳລັບການເຊື່ອມຕໍ່ອິນເຕີເນັດ.

ຣາວເຕີບໍ່ຄວນແລ່ນເຊີເວີ DHCP, ມັນສາມາດແລ່ນເຊີເວີ DNS ໄດ້, ເຖິງແມ່ນວ່າສິ່ງນີ ຈະບໍ່ຈຳເປັນ ແລະ ຈະບໍ່ໄດ້ຖືກນຳໃຊ້ກໍຕາມ.

ໃນກໍລະນີທີ່ທ່ານຍັງບໍ່ມີຣາວເຕີ ຫຼື ຣາວເຕີທີ່ມີຢູ່ບໍ່ສາມາດຕັ້ງຄ່າຕາມນັ້ນໄດ້, ເຄື່ອງໃດກໍຕາມທີ່ຜ່ານຄວາມຕ້ອງການສຳລັບການຕິດຕັ້ງ Debian ແບບຕ່ຳສຸດ ແລະ ມີອິນເຕີເຟດ ເຄືອຂ່າຍຢ່າງໜ້ອຍສອງອັນ ສາມາດປ່ຽນເປັນເກດເວລະຫວ່າງເຄືອຂ່າຍທີ່ມີຢູ່ ແລະ ເຄືອຂ່າຍ Debian Edu ໄດ້. ເບິ່ງ ເອກະສານການຕິດຕັ້ງ ສຳລັບວິທີ່ງ່າຍໆໃນການຕິດຕັ້ງ ແລະ ຕັ້ງຄ່າເຄື່ອງ Debian ໂດຍໃຊ້ `debian-edu-router-config`.

ຫາກທ່ານຕ້ອງການບາງຢ່າງສຳລັບ embedded router ຫຼື accesspoint ພວກເຮົາແນະນຳໃຫ້ໃຊ້ OpenWRT, ເຖິງແມ່ນວ່າ ແມ່ນອນວ່າທ່ານ ຍັງສາມາດໃຊ້ firmware ດ້ັງເດີມໄດ້. ການໃຊ້ firmware ດ້ັງເດີມແມ່ນງ່າຍກວ່າ; ແຕ່ການໃຊ້ OpenWRT ຈະໃຫ້ທາງເລືອກ ແລະ ການຄວບຄຸມຫຼາຍກວ່າ. ກວດເບິ່ງເວັບໄຊ OpenWRT ສຳລັບລາຍຊື ຮາດແວທີ່ຮອງຮັບ.

ມັນເປັນໄປໄດ້ທີ່ຈະໃຊ້ການຕັ້ງຄ່າເຄືອຂ່າຍທີ່ແຕກຕ່າງອອກໄປ (ມີ ຂັ້ນຕອນທີ່ມີການບັນທຶກໄວ້ ເພື່ອເຮັດສິ່ງນີ), ແຕ່ຫາກທ່ານບໍ່ໄດ້ຖືກບັງຄັບໂດຍໂຄງສ້າງເຄືອຂ່າຍທີ່ມີຢູ່ແລ້ວ, ພວກເຮົາແນະນຳໃຫ້ຫຼີກເວັ້ນ ແລະ ແນະນຳໃຫ້ທ່ານໃຊ້ຕາມ ສະຖາປັດຕະຍະກຳເຄືອຂ່າຍ ເລີ່ມຕົ້ນ.

6 ທາງເລືອກໃນການຕິດຕັ້ງ ແລະ ການດາວໂຫຼດ

6.1 ບ່ອນທີ່ສາມາດຊອກຫາຂ້ໍມູນເພີ່ມເຕີ່ມ

We recommend that you read or at least take a look at the release notes for Debian Bookworm before you start installing a system for production use. There is more information about the Debian Bookworm release available in its installation manual.

ກະລຸນາລອງໃຊ້ Debian Edu/Skolelinux, ມັນຄວນຈະເຮັດວຽກໄດ້ທັນທີ.

ແນວໃດກໍຕາມ, ແນະນຳໃຫ້ອ່ານບົດກ່ຽວກັບ ຄວາມຕ້ອງການ ດ້ານຮາດແວ ແລະ ເຄືອຂ່າຍ ແລະ ກ່ຽວກັບ ສະຖາປັດຕະຍະກຳ ກ່ອນທີ່ຈະເລີ່ມຕິດຕັ້ງເຊີເວີຫຼັກ.

ຢ່າລືມອ່ານບົດ ການເລີ່ມຕົ້ນໃຊ້ງານ ຂອງຄູ່ມືນີ, ເພາະມັນຈະອະທິບາຍວິທີການເຂົ້າສູ່ລະບົບເປັນຄັ້ງທຳອິດ.

6.2 Download the installation media for Debian Edu 12 Codename bookworm

6.2.1 amd64 ຫຼື i386

amd64 ແລະ i386 ແມ່ນຊື່ຂອງສອງສະຖາປັດຕະຍະກຳ Debian ສຳລັບ CPU x86, ທັ້ງສອງ ຖືກສ້ໍາງຂຶ້ນໂດຍ AMD, Intel ແລະ ຜູ້ຜະລິດອື່ນໆ. amd64 ແມ່ນສະຖາປັດຕະຍະກຳແບບ 64-ບິດ ແລະ i386 ແມ່ນສະຖາປັດຕະຍະກຳແບບ 32-ບິດ. ການຕິດຕັ້ງໃໝ່ ໃນປັດຈຸບັນຄວນເຮັດໂດຍໃຊ້ amd64. ສ່ວນ i386 ຄວນໃຊ້ກັບຮາດແວທີ່ເກົ່າຫຼາຍໆເທົ່ານັ້ນ.

6.2.2 ອິເມຈ ISO ແບບ netinst ສຳລັບ amd64 ຫຼື i386

ອິເມຈ ISO ແບບ netinst ສາມາດໃຊ້ສຳລັບການຕິດຕັ້ງຈາກ CD/DVD ແລະ USB flash drives ແລະ ມີໃຫ້ສຳລັບສອງ ສະຖາປັດຕະຍະກຳ Debian: amd64 ຫຼື i386. ຕາມຊື່ຂອງມັນ, ການຕິດຕັ້ງແບບນີ້ຕ້ອງມີການເຂົ້າເຖິງອິນເຕີເນັດ.

Once Bookworm has been released these images will be available for download from:

- https://cdimage.debian.org/cdimage/archive/12.15.0/amd64/iso-cd/
- https://cdimage.debian.org/cdimage/archive/12.15.0/i386/iso-cd/

6.2.3 ອິເມຈ ISO ແບບ BD ສຳລັບ amd64 ຫຼື i386

ອິເມຈ ISO ເຫຼົ່ານີ້ມີຂະໜາດປະມານ 7.5 GB ແລະ ສາມາດໃຊ້ຕິດຕັ້ງເຄື່ອງ amd64 ຫຼື i386 ໄດ້ ໂດຍບໍ່ຕ້ອງມີການເຂົ້າເຖິງອິນເຕີເນັດ. ເຊັ່ນດຽວກັບອິເມຈ netinst, ມັນສາມາດໃຊ້ໃນ USB flash drives ຫຼື ສື່ບັນທຶກຂໍ້ມູນທີ່ມີຂະໜາດພຽງພໍ.

Once Bookworm has been released these images will be available for download from:

- https://cdimage.debian.org/cdimage/archive/12.15.0/amd64/iso-bd/
- https://cdimage.debian.org/cdimage/archive/12.15.0/i386/iso-bd/

6.2.4 ການກວດສອບຄວາມຖືກຕ້ອງຂອງໄຟລ໌ອິເມຈທີ່ດາວໂຫຼດມາ

ຄຳແນະນຳຢ່າງລະອຽດສຳລັບການກວດສອບ ແລະ ການໃຊ້ອິເມຈເຫຼົ່ານີ້ແມ່ນເປັນສ່ວນໜຶ່ງຂອງ Debian-CD FAQ.

6.2.5 ຊອຣ໌ສໂຄ້ດ (Sources)

ຊອຣ໌ສໂຄ້ດມີໃຫ້ຈາກຄັງເກັບຂອງ Debian ໃນບ່ອນປົກກະຕິ, ສື່ຕ່າງໆມີລິ້ງຢູ່ທີ່ https://get.debian.org/cdimage/release/current/source/

6.3 ການຕິດຕັ້ງ Debian Edu

ເມື່ອທ່ານທຳການຕິດຕັ້ງ Debian Edu, ທ່ານຈະມີທາງເລືອກບໍ່ເທົ່າໃດຢ່າງໃຫ້ເລືອກ. ບໍ່ຕ້ອງກັງວົນ; ມັນບໍ່ໄດ້ມີຫຼາຍເກີນໄປ. ພວກເຮົາໄດ້ພະຍາຍາມປົກປິດຄວາມຊັບຊ້ອນ ຂອງ Debian ໃນລະຫວ່າງການຕິດຕັ້ງ ແລະ ຫຼັງຈາກນັ້ນ. ແນວໃດກໍຕາມ, Debian Edu ກໍຄື Debian, ແລະ ຫາກທ່ານຕ້ອງການ ມັນກໍມີແພັກເກັດໃຫ້ເລືອກຫຼາຍກວ່າ 59,000 ແພັກເກັດ ແລະ ທາງເລືອກການກຳນົດຄ່າອີກມະຫາສານ. ສຳລັບຜູ້ໃຊ້ສ່ວນໃຫຍ່, ຄ່າເລີ່ມຕົ້ນຂອງພວກເຮົາກໍຖືວ່າພຽງພໍແລ້ວ. ກະລຸນາໝາຍເຫດ: ຫາກມີຈຸດປະສົງ ທີ່ຈະໃຊ້ LTSP, ໃຫ້ເລືອກສະພາບແວດລ້ອມເດັສທັອບທີ່ມີນ້ຳໜັກເບົາ.

6.3.1 ຮູບແບບການຕິດຕັ້ງເຊີເວີຫຼັກ

A. ເຄືອຂ່າຍໂຮງຮຽນ ຫຼື ເຮືອນທົ່ວໄປທີ່ມີການເຂົ້າເຖິງອິນເຕີເນັດຜ່ານຣາວເຕີ ທີ່ໃຫ້ບໍລິການ DHCP:

- ການຕິດຕັ້ງເຊີເວີຫຼັກແມ່ນສາມາດເຮັດໄດ້, ແຕ່ຫຼັງຈາກບູດເຄື່ອງໃໝ່ຈະບໍ່ມີ ການເຂົ້າເຖິງອິນເຕີເນັດ (ເນື່ອງຈາກ IP ຂອງອິນເຕີເຟດເຄືອຂ່າຍຫຼັກແມ່ນ 10.0.2.2/8).
- ເບິ່ງບົດ ຣາວເຕີອິນເຕີເນັດ ສຳລັບລາຍລະອຽດວິທີການຕັ້ງຄ່າເກດເວ ຫາກບໍ່ສາມາດກຳນົດຄ່າຣາວເຕີທີ່ມີຢູ່ຕາມທີ່ຕ້ອງການໄດ້.
- ເຊື່ອມຕໍ່ອຸປະກອນທັງໝົດຕາມທີ່ສະແດງໃນບົດ ສະຖາປັດຕະຍະກຳ.
- ເຊີເວີຫຼັກຄວນຈະມີການເຊື່ອມຕໍ່ອິນເຕີເນັດເມື່ອບູດເປັນຄັ້ງທຳອິດໃນສະພາບແວດລ້ອມທີ່ຖືກຕ້ອງ.

B. ເຄືອຂ່າຍໂຮງຮຽນ ຫຼື ສະຖາບັນທົ່ວໄປ, ຄ້າຍຄືກັບດ້ານເທິງ, ແຕ່ຕ້ອງມີການໃຊ້ພຣັອກຊີ.

- ເພີ່ມ 'debian-edu-expert' ໃນບັນທັດຄຳສັ່ງ kernel (kernel command line); ເບິ່ງລາຍລະອຽດວິທີການເຮັດຢູ່ດ້ານລຸ່ມ.
- ຕ້ອງຕອບຄຳຖາມເພີ່ມເຕີມບາງຢ່າງ, ລວມທັງຄຳຖາມທີ່ກ່ຽວກັບເຊີເວີພຣັອກຊີ.

C. ເຄືອຂ່າຍທີ່ມີຣາວເຕີ/ເກດເວ IP 10.0.0.1/8 (ເຊິ່ງບໍ່ມີເຊີເວີ DHCP) ແລະ ສາມາດເຂົ້າເຖິງອິນເຕີເນັດໄດ້:

- ທັນທີທີ່ການຕັ້ງຄ່າເຄືອຂ່າຍອັດຕະໂນມັດຫຼົ້ມເຫຼວ (ເນື່ອງຈາກບໍ່ມີ DHCP), ໃຫ້ເລືອກການຕັ້ງຄ່າເຄືອຂ່າຍດ້ວຍຕົນເອງ.
  - ປ້ອນ 10.0.2.2/8 ເປັນ IP ຂອງໂຮສ
  - ປ້ອນ 10.0.0.1 ເປັນ IP ຂອງເກດເວ

  - ປ້ອນ 8.8.8.8 ເປັນ IP ຂອງເນມເຊີເວີ (nameserver) ຫາກທ່ານບໍ່ມີອັນອື່ນທີ່ດີກວ່າ
- ເຊີເວີຫຼັກຄວນຈະເຮັດວຽກໄດ້ທັນທີຫຼັງຈາກບູດຄັ້ງທຳອິດ.

D. ອອຟລາຍ (ບໍ່ມີການເຊື່ອມຕໍ່ອິນເຕີເນັດ):

- ໃຊ້ອີເມຈ BD ISO.
- ກວດເບິ່ງໃຫ້ແນ່ໃຈວ່າສາຍເຄືອຂ່າຍທັງໝົດ (ຈີງ/ສະເໜີອນ) ຖືກຖອດອອກແລ້ວ.
- ເລືອກ 'ຢ່າຕັ້ງຄ່າເຄືອຂ່າຍໃນເວລານີ້' (ຫຼັງຈາກ DHCP ຕັ້ງຄ່າເຄືອຂ່າຍຫຼົ້ມເຫຼວ ແລະ ທ່ານກົດ 'ສືບຕໍ່').
- Update the system once bootet the first time in the correct environment with Internet access.

6.3.2 ສະພາບແວດລ້ອມເດັສທັອບ

ມີຫຼາຍສະພາບແວດລ້ອມເດັສທັອບໃຫ້ເລືອກ:

- Xfce ໃຊ້ຊັບພະຍາກອນຫຼາຍກວ່າ LXDE ເລັກໜ້ອຍ ແຕ່ຮອງຮັບພາສາໄດ້ດີຫຼາຍ (106 ພາສາ).
- KDE ແລະ GNOME ທັງສອງຮອງຮັບພາສາໄດ້ດີ, ແຕ່ໃຊ້ຊັບພະຍາກອນຫຼາຍເກີນໄປ ສຳລັບທັງຄອມພິວເຕີເກົ່າ ແລະ ຄລາຍແອນ LTSP.
- Cinnamon ແມ່ນທາງເລືອກທີ່ເບົາກວ່າ GNOME.
- MATE ແມ່ນເບົາກວ່າສາມຢ່າງຂ້າງເທິງ, ແຕ່ຍັງຂາດການຮອງຮັບພາສາທີ່ດີສຳລັບຫຼາຍປະເທດ.
- LXDE ໃຊ້ຊັບພະຍາກອນໜ້ອຍທີ່ສຸດ ແລະ ຮອງຮັບ 35 ພາສາ.
- LXQt ແມ່ນສະພາບແວດລ້ອມເດັສທັອບທີ່ມີນ້ຳໜັກເບົາ (ຮອງຮັບພາສາຄ້າຍກັບ LXDE) ພ້ອມກັບຮູບລັກສະນະທີ່ທັນສະໄໝກວ່າ (ອີງໃສ່ Qt ຄືກັນກັບ KDE).


Debian Edu ໃນຖານະໂຄງການລະດັບສາກົນ ໄດ້ເລືອກໃຊ້ Xfce ເປັນສະພາບແວດລ້ອມເດັສທັອບ ເລີ່ມຕົ້ນ; ເບິ່ງວິທີການຕັ້ງຄ່າເປັນອັນອື່ນຢູ່ດ້ານລຸ່ມ.

6.3.3 ການຕິດຕັ້ງແບບແຍກສ່ວນ

- ເມື່ອຕິດຕັ້ງລະບົບທີ່ລວມເອົາໂປຣແກຣມທີ່ກ່ຽວກັບການສຶກສາຈຳນວນຫຼາຍຈະຖືກຕິດຕັ້ງ. ເພື່ອຕິດຕັ້ງສະເພາະໂປຣແກຣມພື້ນຖານ, ໃຫ້ຖອນພາຣາມິເຕີ desktop=xxxx ໃນບັນທັດຄຳສັ່ງ kernel ກ່ອນເລີ່ມການຕິດຕັ້ງ; ເບິ່ງລາຍລະອຽດວິທີເຮັດຢູ່ດ້ານລຸ່ມ. ສິ່ງນີ້ຊ່ວຍໃຫ້ສາມາດ ຕິດຕັ້ງລະບົບສະເພາະບ່ອນ ແລະ ສາມາດໃຊ້ເພື່ອເລັ່ງການຕິດຕັ້ງເພື່ອທົດສອບໄດ້.
- ກະລຸນາໝາຍເຫດ: ຫາກທ່ານຕ້ອງການຕິດຕັ້ງສະພາບແວດລ້ອມເດັສທັອບພາຍຫຼັງ, ຢ່າໃຊ້ meta-packages ຂອງ Debian Edu ເຊັ່ນ education-desktop-xfce ເພາະມັນ ຈະ ດຶງ ເອົາ ໂປຣ ແກຣມ ການ ສຶກ ສາ ທັງ ໝົດ ມາ; ແຕ່ ໃຫ້ ຕິດ ຕັ້ງ ເຊັ່ນ task-xfce-desktop ແທນ. ສາມາດຕິດຕັ້ງ meta-packages ທີ່ກ່ຽວຂ້ອງກັບລະດັບ ການສຶກສາໃໝ່ໜຶ່ງຢ່າງ ຫຼື ຫຼາຍກວ່າເຊັ່ນ education-preschool, education-primaryschool, education-secondaryschool, education-highschool ໃຫ້ກົງກັບການໃຊ້ງານ.
- ສຳລັບລາຍລະອຽດກ່ຽວກັບ meta-packages ຂອງ Debian Edu, ໃຫ້ເບິ່ງໜ້າ ພາບລວມຂອງແພັກເກັດ Debian Edu.

6.3.4 ປະເພດ ແລະ ທາງເລືອກໃນການຕິດຕັ້ງ

ເມນູບູດຕົວຕິດຕັ້ງໃນຮາດແວ 64-ບິດ - ໂໝດ BIOS




Graphical install ໃຊ້ຕົວຕິດຕັ້ງແບບກຣາຟິກ ທີ່ທ່ານສາມາດໃຊ້ເມົ້າສ໌ໄດ້.

Install ໃຊ້ໂໝດຂໍ້ຄວາມ (text mode).

Advanced options > ຈະສະແດງເມນູຍ່ອຍ ພ້ອມທາງເລືອກທີ່ລະອຽດກວ່າໃຫ້ເລືອກ.

Help ໃຫ້ຄຳແນະນຳບາງຢ່າງກ່ຽວກັບການໃຊ້ ຕົວຕິດຕັ້ງ; ເບິ່ງພາບໜ້າຈໍດ້ານລຸ່ມ.



Back.. ກັບຄືນໄປຫາເມນູຫຼັກ.

Graphical expert install ໃຫ້ການເຂົ້າເຖິງ ທຸກຄໍາຖາມທີ່ມີ, ສາມາດໃຊ້ເມົ້າສ໌ໄດ້.

Graphical rescue mode ເຮັດໃຫ້ສິການຕິດຕັ້ງນີ ກາຍເປັນແຜ່ນກູ້ໄພສໍາລັບວຽກງານສຸກເສີນ.

Graphical automated install ຕ້ອງການໄຟລ໌ preseed.


Expert install ໃຫ້ການເຂົ້າເຖິງທຸກຄໍາຖາມທີ່ມີ ໃນໂໝດຂໍ້ຄວາມ.

Rescue mode ໂໝດຂໍ້ຄວາມ; ເຮັດໃຫ້ສິການຕິດຕັ້ງນີ ກາຍເປັນແຜ່ນກູ້ໄພສໍາລັບວຽກງານສຸກເສີນ.

Automated install ໂໝດຂໍ້ຄວາມ; ຕ້ອງການໄຟລ໌ preseed.

ຢ່າໃຊ້ `Graphical expert install` ຫຼື `Expert install`, ແຕ່ໃຫ້ໃຊ້ `debian-edu-expert` ແທນ ເປັນພາຣາມິເຕີ kernel ເພີ່ມເຕີມໃນກໍລະນີພິເສດ.

ໜ້າຈໍຊ່ວຍເຫຼືອ




ໜ້າຈໍຊ່ວຍເຫຼືອນີ້ອະທິບາຍໃນຕົວມັນເອງ ແລະ ຊ່ວຍໃຫ້ສາມາດໃຊ້ປຸ່ມ <F> ໃນແປ້ນພິມ ເພື່ອຮັບການຊ່ວຍເຫຼືອທີ່ລະອຽດກວ່າ ກ່ຽວກັບຫົວຂໍ້ທີ່ໄດ້ອະທິບາຍໄວ້.

ເມນູບູດຕົວຕິດຕັ້ງໃນຮາດແວ 64-ບິດ - ໂໝດ UEFI



ເພີ່ມ ຫຼື ປ່ຽນພາຣາມິເຕີການບູດສຳລັບການຕິດຕັ້ງ

ໃນທັ້ງສອງກໍລະນີ, ທາງເລືອກການບູດສາມາດແກ້ໄຂໄດ້ໂດຍການກົດປຸ່ມ **TAB** ຫຼື **E** ໃນເມນູບູດ; ພາບໜ້າຈໍສະແດງບັນທັດຄຳສັ່ງສຳລັບ **Graphical install**.


debianedu 12
Skolelinux
_Debian GNU/Linux installer menu (BIOS mode)
Graphical install
Install
Advanced options >
Accessible dark contrast installer menu >
Help
Install with speech synthesis
> /install.amd/vmlinuz modules=debian-edu-install-udeb desktop=xfce vga=788 in
itrd=/install.amd/gtk/initrd.gz --- quiet _



- ທ່ານສາມາດໃຊ້ບໍລິການ HTTP ພຣັອກຊີທີ່ມີຢູ່ໃນເຄືອຂ່າຍເພື່ອເລັ່ງການຕິດຕັ້ງ ໂປຣໄຟລ໌ Main Server ຈາກ CD. ເພີ່ມເຊັ່ນ: `mirror/http/proxy=http://10.0.2.2:3128` ເປັນພາຣາມິເຕີການບູດເພີ່ມເຕີມ.
- ຫາກທ່ານໄດ້ຕິດຕັ້ງໂປຣໄຟລ໌ Main Server ໃນເຄື່ອງໜຶ່ງແລ້ວ, ການຕິດຕັ້ງຄັ້ງຕໍ່ໄປຄວນເຮັດຜ່ານ PXE, ເພາະມັນຈະໃຊ້ພຣັອກຊີຂອງເຊີເວີຫຼັກໂດຍອັດຕະໂນມັດ.
- ເພື່ອຕິດຕັ້ງສະພາບແວດລ້ອມເດັສທັອບ **GNOME** ແທນທີ **Xfce** ທີ່ເປັນຄ່າເລີ່ມຕົ້ນ, ໃຫ້ປ່ຽນ `xfce` ເປັນ gnome ໃນພາຣາມິເຕີ `desktop=xfce`.
- ເພື່ອຕິດຕັ້ງສະພາບແວດລ້ອມເດັສທັອບ **LXDE** ແທນ, ໃຫ້ໃຊ້ `desktop=lxde`.
- ເພື່ອຕິດຕັ້ງສະພາບແວດລ້ອມເດັສທັອບ **LXQt** ແທນ, ໃຫ້ໃຊ້ `desktop=lxqt`.
- ເພື່ອຕິດຕັ້ງສະພາບແວດລ້ອມເດັສທັອບ **KDE Plasma** ແທນ, ໃຫ້ໃຊ້ `desktop=kde`.
- ເພື່ອຕິດຕັ້ງສະພາບແວດລ້ອມເດັສທັອບ **Cinnamon** ແທນ, ໃຫ້ໃຊ້ `desktop=cinnamon`.
- ແລະ ເພື່ອຕິດຕັ້ງສະພາບແວດລ້ອມເດັສທັອບ **MATE** ແທນ, ໃຫ້ໃຊ້ `desktop=mate`.

6.3.5 ຂະບວນການຕິດຕັ້ງ

ຢ່າລືມກວດເບິ່ງ ຄວາມຕ້ອງການຂອງລະບົບ ແລະ ໃຫ້ແນ່ໃຈວ່າທ່ານມີກາດເຄືອຂ່າຍ (NIC) ຢ່າງໜ້ອຍສອງໃບ ຫາກທ່ານວາງແຜນຈະຕັ້ງຄ່າເຊີເວີ LTSP.

- ເລືອກພາສາ (ສຳລັບການຕິດຕັ້ງ ແລະ ສຳລັບລະບົບທີ່ຈະຕິດຕັ້ງ).

- ເລືອກສະຖານທີ ເຊິ່ງປົກກະຕິຄວນຈະແມ່ນບ່ອນທີ່ທ່ານອາໄສຢູ່.
- ເລືອກຜັງແປ້ນພິມ (ຄ່າເລີ່ມຕົ້ນຂອງປະເທດມັກຈະໃຊ້ໄດ້ດີ).
- ເລືອກໂປຣໄຟລ໌ຈາກລາຍຊື່ຕໍ່ໄປນີ້:

  – Main Server (ເຊີເວີຫຼັກ)

  * ນີ້ແມ່ນເຊີເວີຫຼັກ (tjener) ສຳລັບໂຮງຮຽນຂອງທ່ານ ເຊິ່ງໃຫ້ບໍລິການທັງໝົດທີ່ຖືກ ຕັ້ງຄ່າໄວ້ລ່ວງໜ້າໃຫ້ພ້ອມໃຊ້ງານທັນທີ. ທ່ານຕ້ອງຕິດຕັ້ງເຊີເວີຫຼັກພຽງເຄື່ອງດຽວຕໍ່ໜຶ່ງໂຮງຮຽນ! ໂປຣໄຟລ໌ນີ້ບໍ່ໄດ້ລວມເອົາສ່ວນຕິດຕໍ່ຜູ້ໃຊ້ແບບກຣາຟິກ (GUI). ຫາກທ່ານຕ້ອງການ GUI, ໃຫ້ເລືອກ Workstation ຫຼື LTSP Server ເພີ່ມເຕີມຈາກອັນນີ້.

  – Workstation (ສະຖານີວຽກ)

  * ຄອມພິວເຕີທີ່ບູດຈາກຮາດດິສພາຍໃນ, ແລະ ແລ່ນຊອບແວ ແລະ ອຸປະກອນທັງໝົດໃນເຄື່ອງ ຄືກັບຄອມພິວເຕີທົ່ວໄປ, ຍົກເວັ້ນແຕ່ການເຂົ້າສູ່ລະບົບຂອງຜູ້ໃຊ້ຈະຖືກຢືນຢັນຕົວຕົນ ໂດຍເຊີເວີຫຼັກ, ເຊິ່ງເປັນບ່ອນເກັບໄຟລ໌ ແລະ ໂປຣໄຟລ໌ເດັສທັອບຂອງຜູ້ໃຊ້.

  – Roaming workstation (ສະຖານີວຽກແບບໂຮມມິ່ງ)

  * ຄືກັນກັບສະຖານີວຽກ ແຕ່ສາມາດຢືນຢັນຕົວຕົນໂດຍໃຊ້ຂໍ້ມູນທີ່ເກັບໄວ້ໃນແຄຊ (cached credentials), ໝາຍຄວາມວ່າ ສາມາດໃຊ້ນອກເຄືອຂ່າຍໂຮງຮຽນໄດ້. ໄຟລ໌ ແລະ ໂປຣໄຟລ໌ຂອງຜູ້ໃຊ້ຈະຖືກເກັບໄວ້ ໃນດິສພາຍໃນເຄື່ອງ. ສຳລັບໂນ້ດບຸກ ແລະ ແລັບທັອບທີ່ມີຜູ້ໃຊ້ຄົນດຽວ ຄວນເລືອກໂປຣໄຟລ໌ນີ້ ແລະ ບໍ່ແມ່ນ 'Workstation' ຫຼື 'Standalone' ຕາມທີ່ເຄີຍແນະນຳໃນລຸ້ນກ່ອນໆ.

  – LTSP Server (ເຊີເວີ LTSP)

  * ເຊີເວີສຳລັບເຄື່ອງລູກຂ່າຍແບບບາງ (ແລະ ສະຖານີວຽກແບບບໍ່ມີດິສ) ເອີ້ນວ່າ ເຊີເວີ LTSP. ຄລາຍແອນທີ່ບໍ່ມີຮາດດິສຈະບູດ ແລະ ແລ່ນຊອບແວຈາກເຊີເວີນີ້. ຄອມພິວເຕີເຄື່ອງນີ້ ຕ້ອງການອິນເຕີເຟດເຄືອຂ່າຍສອງອັນ, ໜ່ວຍຄວາມຈຳຫຼາຍ, ແລະ ຖ້າຈະໃຫ້ດີຄວນມີ ຫຼາຍກວ່າໜຶ່ງໂປຣເຊດເຊີ ຫຼື ຄໍຣ໌ (core). ເບິ່ງບົດກ່ຽວກັບ ເຄື່ອງລູກຂ່າຍໃນເຄືອຂ່າຍ ສຳລັບຂໍ້ມູນເພີ່ມເຕີມ. ການເລືອກໂປຣໄຟລ໌ນີ້ຍັງຈະເປີດໃຊ້ໂປຣໄຟລ໌ workstation ນຳ (ເຖິງແມ່ນວ່າຈະບໍ່ໄດ້ເລືອກກໍຕາມ) - ເຊີເວີ LTSP ສາມາດໃຊ້ເປັນສະຖານີວຽກໄດ້ສະເໝີ.

  – Standalone (ເຄື່ອງດ່ຽວ)

  * ຄອມພິວເຕີທົ່ວໄປທີ່ສາມາດເຮັດວຽກໄດ້ໂດຍບໍ່ຕ້ອງມີເຊີເວີຫຼັກ (ນັ່ນຄື ບໍ່ຈຳເປັນຕ້ອງ ຢູ່ໃນເຄືອຂ່າຍ). ລວມທັງແລັບທັອບ.

  – Minimal (ແບບຕ່ຳສຸດ)

  * ໂປຣໄຟລ໌ນີ້ຈະຕິດຕັ້ງແພັກເກັດພື້ນຖານ ແລະ ຕັ້ງຄ່າເຄື່ອງໃຫ້ລວມເຂົ້າໃນເຄືອຂ່າຍ Debian Edu, ແຕ່ຈະບໍ່ມີການບໍລິການ ຫຼື ແອັບພລິເຄຊັ່ນໃດໆ. ມັນມີປະໂຫຍດ ໃນຖານະເປັນແພລັດຟອມສຳລັບການບໍລິການດ່ຽວໆທີ່ຖືກຍ້າຍອອກມາຈາກເຊີເວີຫຼັກດ້ວຍຕົນເອງ.
    ໃນກໍລະນີທີ່ຜູ້ໃຊ້ທົ່ວໄປຄວນຈະສາມາດໃຊ້ລະບົບດັ່ງກ່າວໄດ້, ມັນຈຳເປັນຕ້ອງໄດ້ຮັບການ ເພີ່ມໂດຍໃຊ້ GOsa² (ຄ້າຍກັບ ສະຖານີວຽກ) ແລະ ຕ້ອງຕິດຕັ້ງແພັກເກັດ libpam-krb5.

  ໂປຣໄຟລ໌ **Main Server**, **Workstation** ແລະ **LTSP Server** ແມ່ນຖືກເລືອກໄວ້ລ່ວງໜ້າແລ້ວ. ໂປຣໄຟລ໌ເຫຼົ່ານີ້ສາມາດຕິດຕັ້ງ ໃນເຄື່ອງດຽວກັນ ໄດ້ ຫາກທ່ານຕ້ອງການຕິດຕັ້ງສິ່ງທີ່ເອີ້ນວ່າ ເຊີເວີຫຼັກແບບລວມ (combined main server). ນີ້ໝາຍຄວາມວ່າເຊີເວີຫຼັກຈະເປັນທັງເຊີເວີ LTSP ແລະ ໃຊ້ເປັນສະຖານີວຽກນຳ. ນີ້ແມ່ນ ທາງເລືອກເລີ່ມຕົ້ນ, ເພາະພວກເຮົາສົມມຸດວ່າຄົນສ່ວນໃຫຍ່ຕ້ອງການແບບນັ້ນ. ກະລຸນາໝາຍເຫດ ວ່າທ່ານຕ້ອງມີກາດເຄືອຂ່າຍ 2 ໃບຕິດຕັ້ງໃນເຄື່ອງທີ່ຈະຕິດຕັ້ງເປັນເຊີເວີຫຼັກແບບລວມ ຫຼື ເປັນເຊີເວີ LTSP ເພື່ອໃຫ້ສາມາດໃຊ້ງານໄດ້ຫຼັງຈາກການຕິດຕັ້ງ.

- ເລືອກ "yes" (ແມ່ນ) ຫຼື "no" (ບໍ່) ສຳລັບການແບ່ງພາກສ່ວນດິສອັດຕະໂນມັດ (automatic partitioning). ໃຫ້ລະວັງວ່າການເລືອກ "yes" ຈະທຳລາຍຂໍ້ມູນທັງໝົດໃນຮາດດິສ! ໃນທາງກົງກັນຂ້າມ, ການເລືອກ "no" ຈະຕ້ອງໄດ້ເຮັດວຽກເພີ່ມເຕີມ - ທ່ານຈະຕ້ອງໝັ້ນໃຈວ່າພາກສ່ວນດິສ (partitions) ທີ່ຈຳເປັນໄດ້ຖືກສ້າງຂຶ້ນ ແລະ ມີຂະໜາດໃຫຍ່ພໍ.
- ກະລຸນາເລືອກ "yes" ເພື່ອສົ່ງຂໍ້ມູນໄປຫາ https://popcon.debian.org/ ເພື່ອໃຫ້ພວກເຮົາຮູ້ວ່າແພັກເກັດໃດທີ່ໄດ້ຮັບຄວາມນິຍົມ ແລະ ຄວນເກັບໄວ້ສຳລັບລຸ້ນ ໃນອະນາຄົດ. ເຖິງແມ່ນວ່າທ່ານບໍ່ຈຳເປັນຕ້ອງເຮັດ, ແຕ່ມັນກໍເປັນວິທີງ່າຍໆທີ່ທ່ານຈະຊ່ວຍໄດ້. 
- ລໍຖ້າ. ຫາກໂປຣໄຟລ໌ທີ່ເລືອກລວມມີ LTSP Server, ຕົວຕິດຕັ້ງຈະໃຊ້ເວລາຂ້ອນຂ້າງດົນ ໃນຕອນທ້າຍ, "ກຳລັງສິ້ນສຸດການຕິດຕັ້ງ - ກຳລັງແລ່ນ debian-edu-profile-udeb...".

- ຫຼັງຈາກກຳນົດລະຫັດຜ່ານ root ແລ້ວ, ທ່ານຈະຖືກຖາມໃຫ້ສ້າງບັນຊີຜູ້ໃຊ້ຫົວໄປ "ສຳລັບວຽກງານທີ່ບໍ່ແມ່ນການບໍລິຫານ". ສຳລັບ Debian Edu ບັນຊີນີ້ແມ່ນ ສຳຄັນຫຼາຍ: ມັນແມ່ນບັນຊີທີ່ທ່ານຈະໃຊ້ເພື່ອຈັດການເຄືອຂ່າຍ Skolelinux.

  ⚠ ລະຫັດຜ່ານສຳລັບຜູ້ໃຊ້ນີ້ **ຕ້ອງ** ມີຄວາມຍາວ **ຢ່າງໜ້ອຍ 5 ຕົວອັກສອນ** ແລະ **ຕ້ອງແຕກຕ່າງ** ຈາກ **ຊື່ຜູ້ໃຊ້ (username)** - ຖ້າບໍ່ດັ່ງນັ້ນຈະບໍ່ສາມາດເຂົ້າສູ່ລະບົບໄດ້ (ເຖິງແມ່ນວ່າລະຫັດຜ່ານທີ່ສັ້ນກວ່າ ຫຼື ລະຫັດຜ່ານທີ່ກົງກັບຊື່ຜູ້ໃຊ້ຈະຖືກຍອມຮັບໂດຍຕົວຕິດຕັ້ງກໍຕາມ).

- ລໍຖ້າອີກຄັ້ງໃນກໍລະນີຂອງ ເຊີເວີຫຼັກແບບລວມ (combined main server) ຫຼັງຈາກຍຸດລະບົບໃໝ່. ມັນຈະໃຊ້ເວລາຂ້ອນຂ້າງດົນໃນການສ້າງອີເມຈ SquashFS ສຳລັບສະຖານີວຽກແບບບໍ່ມີດີສ.

- ໃນກໍລະນີທີ່ເປັນເຊີເວີ LTSP ແຍກຕ່າງຫາກ, ການຕັ້ງຄ່າສະຖານີວຽກແບບບໍ່ມີດີສ ແລະ/ຫຼື ເຄືອງລູກຂ່າຍແບບບາງ ຈະຕ້ອງມີຂັ້ນຕອນການເຮັດດ້ວຍຕົນເອງບາງຢ່າງ. ສຳລັບລາຍລະອຽດ, ໃຫ້ເບິ່ງບົດ ວິທີການເຄືອງລູກຂ່າຍໃນເຄືອຂ່າຍ (HowTo).

6.3.6 ການຕິດຕັ້ງເກດເວໂດຍໃຊ້ debian-edu-router

The `debian-edu-router-config` package simplifies the the setup of a gateway for a Debian Edu network through an interactive configuration process where the necessary information is obtained through a series of dialogues.

ເພື່ອທີ່ຈະນຳໃຊ້ມັນ, ໃຫ້ທຳການຕິດຕັ້ງ Debian ແບບຕ່ຳສຸດ (minimal). ໃຫ້ແນ່ໃຈວ່າ ໃຊ້ຕົວຕິດຕັ້ງ Debian ປົກກະຕິ ແລະ ບໍ່ແມ່ນຕົວຕິດຕັ້ງ Debian Edu ເພາະວ່າ ການຕິດຕັ້ງ Debian Edu ບໍ່ຖືກຮອງຮັບໂດຍ `debian-edu-router-config`.

ຕິດຕັ້ງແພັກເກັດ `debian-edu-router-config` ໂດຍໃຊ້

```
DEBIAN_FRONTEND=noninteractive apt install -y -q debian-edu-router-config
```

ຂ້ຄວາມສະແດງຂ້ຜິດພາດກ່ຽວກັບການກຳນົດຄ່າແມ່ນເປັນເລື່ອງປົກກະຕິ ແລະ ສາມາດຂ້າມໄປກ່ອນໄດ້.

ສຳລັບຂະບວນການກຳນົດຄ່າຫຼັງຈາກການຕິດຕັ້ງ `debian-edu-router-config`, ຈຳເປັນຕ້ອງມີການເຂົ້າເຖິງເຄື່ອງຄອມພິວເຕີໂດຍກົງ.

ອິນເຕີເຟດເຄືອຂ່າຍອາດຈະຖືກເຊື່ອມຕໍ່ກັບເຄືອຂ່າຍທີ່ກ່ຽວຂ້ອງແລ້ວ ຫຼື ຍັງບໍ່ທັນໄດ້ເຊື່ອມຕໍ່ກໍໄດ້. ແນວໃດກໍຕາມ, ຈຳເປັນຕ້ອງຮູ້ວ່າອິນເຕີເຟດໃດຈະຖືກເຊື່ອມຕໍ່ກັບເຄືອຂ່າຍໃດ. ເພື່ອໃຫ້ໄດ້ ຂ້ມູນເພີ່ມເຕີມກ່ຽວກັບຮາດແວເຄືອຂ່າຍ

```
lshw -class network
```


ສາມາດຖືກນຳໃຊ້ໄດ້.


ລຶບການກຳນົດຄ່າຂອງອິນເຕີເຟດເຄືອຂ່າຍສອງອັນທີ່ຈະໃຊ້ຈາກ `/etc/network/interfaces` ຫຼື ໄຟລ໌ໃນ `/etc/network/interfaces.d/` ແລະ ຍົກເລີກການກຳນົດຄ່າຂອງສອງອິນເຕີເຟດນັ້ນໂດຍໃຊ້

```
ip addr flush <interface>
```


ຂະບວນການກຳນົດຄ່າຕົວຈິງຈະເລີ່ມຕົ້ນດ້ວຍ


```
dpkg-reconfigure --force uif debian-edu-router-config
```


Package configuration
Configuring uif
Please choose whether the firewall should be configured now with a simple "workstation" setup, given a specialized Debian Edu Router configuration, or left unconfigured so that you can manually edit /etc/uif/uif.conf.
Firewall configuration method
don't touch
workstation
debian-edu-router
<Ok>




ເມື່ອຖືກຖາມກ່ຽວກັບວິທີການກໍານົດຄ່າໄຟວໍ uif ໃຫ້ເລືອກ ”debian-edu-router”. ຢືນຢັນວ່າທ່ານຕ້ອງການຕັ້ງຄ່າໄຟວໍສໍາລັບ Debian Edu Router.



Package configuration
Configuring uif
Normally an Internet host should be reachable with "pings" (ICMP Echo requests). Rejecting this option will disable this, which might be somewhat confusing when analyzing network problems.
Allow ping?
<Yes>
<No>




ຕັດສິນໃຈວ່າທ່ານຕ້ອງການຕອບສະໜອງຕໍ ping ແລະ traceroute ຫຼືບໍ. ຫາກບໍ່ແນ່ໃຈ ໃຫ້ຕອບ yes ເພາະມັນເປັນປະໂຫຍດໃນການກວດສອບບັນຫາເຄືອຂ່າຍ.




ຍືນຍັນວ່າທ່ານຕ້ອງການເປີດໃຊ້ງານ IP packet forwarding.




ລະບົບລາຍງານແນວໂນ້ມ Munin ສາມາດເຂົ້າເຖິງໄດ້ຈາກ https://www/munin/. ມັນສະໜອງກຣາຟວັດແທກສະຖານະຂອງລະບົບເປັນລາຍວັນ, ລາຍອາທິດ, ລາຍເດືອນ ແລະ ລາຍປີ, ແລະ ຊ່ວຍໃຫ້ຜູ້ດູແລລະບົບຊອກຫາຈຸດຄໍຂວດ (bottlenecks) ແລະ ສາເຫດຂອງບັນຫາໃນລະບົບ.

ລາຍຊື່ເຄື່ອງທີ່ຖືກຕິດຕາມດ້ວຍ Munin ແມ່ນຖືກສ້າງຂຶ້ນໂດຍອັດຕະໂນມັດ ໂດຍອີງຕາມລາຍຊື່ໂຮສທ໌ ທີ່ລາຍງານໄປຍັງ sitesummary. ທຸກໆ ໂຮສທ໌ທີ່ຕິດຕັ້ງແພັກເກດ munin-node ຈະຖືກລົງທະບຽນ ສຳລັບການຕິດຕາມຂອງ Munin. ປົກກະຕິຈະໃຊ້ເວລາໜຶ່ງມື້ຫຼັງຈາກຕິດຕັ້ງເຄື່ອງ ຈົນກວ່າ Munin ຈະເລີ່ມຕິດຕາມ, ເນື່ອງຈາກລໍາດັບການເຮັດວຽກຂອງ cron jobs. ເພື່ອເລັ່ງຂະບວນການນີ້, ໃຫ້ຣັນ `sitesummary-update-munin` ໃນນາມ root ໃນເຊີເວີ sitesummary (ປົກກະຕິແມ່ນເຊີເວີຫຼັກ). ສິ່ງນີ້ຈະອັບເດດໄຟລ໌ `/etc/munin/munin.conf`.

ຊຸດ ຂອງ ການ ວັດແທກ ທີ່ ຖືກ ເກັບກໍາ ແມ່ນ ຖືກ ສ້າງ ຂຶ້ນ ໂດຍ ອັດ ຕະ ໂນ ມັດ ໃນ ແຕ່ ລະ ເຄື່ອງ ໂດຍ ໃຊ້ ໂປຣ ແກຣມ `munin-node-configure` ເຊິ່ງ ຈະ ກວດ ສອບ ປລັກ ອິນ ທີ່ ມີ ຢູ່ ໃນ `/usr/share/munin/plugins/` ແລະ ສ້າງ symlink ອັນ ທີ່ ກ່ຽວ ຂ້ອງ ໄປ ຍັງ `/etc/munin/plugins/`.

ຂໍ້ມູນກ່ຽວກັບ Munin ແມ່ນມີໃຫ້ເບິ່ງໄດ້ທີ່ https://munin-monitoring.org/.

11.3.2 Icinga

ການຕິດຕາມລະບົບ ແລະ ບໍລິການ Icinga ແມ່ນມີໃຫ້ເບິ່ງໄດ້ທີ່ https://www/icingaweb2/. ລາຍຊື່ເຄື່ອງ ແລະ ບໍລິການທີ່ຖືກຕິດຕາມແມ່ນຖືກສ້າງຂຶ້ນໂດຍອັດຕະໂນມັດໂດຍໃຊ້ຂໍ້ມູນທີ່ເກັບກໍາ ໂດຍລະບົບ sitesummary. ເຄື່ອງທີ່ມີໂປຣໄຟລ໌ Main-server ແລະ LTSP-server ຈະໄດ້ຮັບການຕິດຕາມແບບເຕັມຮູບແບບ, ໃນຂະນະທີ່ເຄື່ອງວຽກ ແລະ thin clients ຈະໄດ້ຮັບການຕິດຕາມແບບພື້ນຖານ. ເພື່ອເປີດການຕິດຕາມແບບເຕັມຮູບແບບ ໃນເຄື່ອງວຽກ, ໃຫ້ຕິດຕັ້ງແພັກເກດ `nagios-nrpe-server` ໃນເຄື່ອງວຽກນັ້ນ.

ໂດຍເລີ່ມຕົ້ນ Icinga ຈະບໍ່ສົ່ງອີເມວ. ສາມາດປ່ຽນແປງໄດ້ໂດຍການປ່ຽນ `notify-by-nothing` ເປັນ `host-notify-by-email` ແລະ `notify-by-email` ໃນໄຟລ໌ `/etc/icinga/sitesummary-template-contacts.cfg`.

ໄຟລ໌ກໍານົດຄ່າ Icinga ທີ່ໃຊ້ຄື `/etc/icinga/sitesummary.cfg`. sitesummary cron job ຈະສ້າງໄຟລ໌ `/var/lib/sitesummary/icinga-generated.cfg` ເຊິ່ງມີລາຍຊື່ໂຮສທ໌ ແລະ ບໍລິການທີ່ຈະຕິດຕາມ.

ສາມາດເພີ່ມການກວດສອບ Icinga ເພີ່ມເຕີມໄດ້ໃນໄຟລ໌ `/var/lib/sitesummary/icinga-generated.cfg.post` ເພື່ອໃຫ້ພວກມັນຖືກລວມເຂົ້າໃນໄຟລ໌ທີ່ສ້າງຂຶ້ນ.

ຂໍ້ມູນກ່ຽວກັບ Icinga ແມ່ນມີໃຫ້ເບິ່ງໄດ້ທີ່ https://www.icinga.com/ ຫຼື ໃນແພັກເກດ `icinga-doc`.

11.3.2.1 ຄໍາເຕືອນທົ່ວໄປຂອງ Icinga ແລະ ວິທີການຈັດການ

ນີ້ແມ່ນຄໍາແນະນໍາກ່ຽວກັບວິທີການຈັດການກັບຄໍາເຕືອນ Icinga ທີ່ພົບເລື້ອຍທີ່ສຸດ.

11.3.2.1.1 DISK CRITICAL - ພື້ນທີ່ຫວ່າງ: /usr 309 MB (5% inode=47%):

ພາທິຊັນ (/usr/ ໃນຕົວຢ່າງ) ເຕັມເກີນໄປ. ໂດຍທົ່ວໄປມີສອງວິທີໃນການຈັດການ: (1) ລຶບບາງໄຟລ໌ອອກ ຫຼື (2) ເພີ່ມຂະໜາດຂອງພາທິຊັນ. ຖ້າພາທິຊັນຄື /var/, ການລ້າງແຄຊ໌ APT ໂດຍໃຊ້ຄໍາສັ່ງ `apt clean` ອາດຈະຊ່ວຍລຶບໄຟລ໌ບາງສ່ວນໄດ້. ຖ້າມີພື້ນທີ່ຫວ່າງໃນກຸ່ມວໍລຸ່ມ LVM, ການຣັນໂປຣແກຣມ `debian-edu-fsautoresize` ເພື່ອຂະຫຍາຍພາທິຊັນອາດຈະຊ່ວຍໄດ້. ເພື່ອໃຫ້ໂປຣແກຣມນີ້ເຮັດວຽກໂດຍອັດຕະໂນມັດທຸກໆ ຊົ່ວໂມງ, ສາມາດເພີ່ມໂຮສທ໌ນັ້ນເຂົ້າໃນ netgroup `fsautoresize-hosts`.

11.3.2.1.2 APT CRITICAL: ມີ 13 ແພັກເກດທີ່ສາມາດອັບເກຣດໄດ້ (13 ການອັບເດດທີ່ສໍາຄັນ).

ມີແພັກເກດໃໝ່ທີ່ພ້ອມສໍາລັບການອັບເກຣດ. ອັນທີ່ສໍາຄັນປົກກະຕິແລ້ວແມ່ນການແກ້ໄຂດ້ານຄວາມປອດໄພ. ເພື່ອອັບເກຣດ, ໃຫ້ຣັນ `apt upgrade && apt full-upgrade` ໃນນາມ root ໃນເທີມິນອລ ຫຼື ເຂົ້າສູ່ລະບົບຜ່ານ SSH ເພື່ອເຮັດແບບດຽວກັນ.

ຖ້າທ່ານບໍ່ຕ້ອງການອັບເກຣດແພັກເກດດ້ວຍຕົນເອງ ແລະ ເຊື່ອໝັ້ນວ່າ Debian ຈະຈັດການເວີຊັນໃໝ່ໄດ້ດີ, ທ່ານສາມາດກໍານົດຄ່າ `unattended-upgrades` ເພື່ອອັບເກຣດ ທຸກແພັກເກດໃໝ່ໂດຍອັດຕະໂນມັດທຸກໆ ຄືນ. ສິ່ງນີ້ຈະບໍ່ອັບເກຣດ LTSP chroots.

11.3.2.1.3 WARNING - ຕ້ອງເປີດເຄື່ອງໃໝ່ : ເຄີເນລທີກຳລັງເຮັດວຽກ = 2.6.32-37.81.0, ເຄີເນລທີຕິດຕັ້ງ = 2.6.32-38.83.0

ເຄີເນລທີກຳລັງເຮັດວຽກແມ່ນເກົ່າກວ່າເຄີເນລໃໝ່ທີຕິດຕັ້ງໄວ້, ແລະ ຕ້ອງມີການ reboot ເພື່ອເປີດໃຊ້ເຄີເນລໃໝ່ສຸດ. ສ່ວນນີ້ປົກກະຕິແລ້ວແມ່ນເລື່ອງດ່ວນ, ເນື່ອງຈາກເຄີເນລໃໝ່ ມັກຈະຖືກປ່ອຍອອກມາໃນ Debian Edu ເພື່ອແກ້ໄຂບັນຫາຄວາມປອດໄພ.

11.3.2.1.4 WARNING: ຂະໜາດຄິວ CUPS - 61

ຄິວເຄື່ອງພິມໃນ CUPS ມີວຽກທີຄ້າງຢູ່ຫຼາຍ. ສ່ວນນີອາດເກີດຈາກເຄື່ອງພິມທີໃຊ້ງານບໍ່ໄດ້. ຄິວການພິມທີຖືກປິດຈະຖືກເປີດໃຊ້ງານທຸກໆ ຊົ່ວໂມງໃນໂຮສທີທີເປັນສະມາຊິກຂອງ netgroup `cups-queue-autoreenable-hosts`, ດັ່ງນັ້ນສຳລັບໂຮສທີເຫຼົ່ານັ້ນ ຈຶ່ງບໍ່ຕ້ອງເຮັດຫຍັງດ້ວຍຕົນເອງ. ຄິວການພິມຈະຖືກລ້າງໃຫ້ຫວ່າງທຸກໆ ຄືນໃນໂຮສທີທີເປັນສະມາຊິກຂອງ netgroup `cups-queue-autoflush-hosts`. ຖ້າໂຮສທີມີວຽກຄ້າງໃນຄິວຫຼາຍ, ໃຫ້ພິຈາລະນາເພີ່ມໂຮສທີນັ້ນເຂົ້າໃນໜຶ່ງ ຫຼື ທັງສອງ netgroups ນີ.

11.3.3 Sitesummary

Sitesummary ຖືກນຳໃຊ້ເພື່ອເກັບກຳຂໍ້ມູນຈາກແຕ່ລະເຄື່ອງຄອມພິວເຕີ ແລະ ສົ່ງໄປຍັງເຊີເວີກາງ. ຂໍ້ມູນທີເກັບກຳໄດ້ແມ່ນມີຢູ່ໃນ `/var/lib/sitesummary/entries/`. ມີສະຄຣິບໃນ `/usr/lib/sitesummary/` ເພື່ອສ້າງລາຍງານ.

ລາຍງານແບບງ່າຍໆ ຈາກ Sitesummary ທີບໍ່ມີລາຍລະອຽດຫຼາຍແມ່ນສາມາດເບິ່ງໄດ້ທີ https://www/sitesummary/.

ເອກະສານບາງສ່ວນກ່ຽວກັບ Sitesummary ແມ່ນມີໃຫ້ເບິ່ງໄດ້ທີ https://wiki.debian.org/DebianEdu/HowTo/SiteSummary

11.4 ຂໍ້ມູນເພີ່ມເຕີມກ່ຽວກັບການປັບແຕ່ງ Debian Edu

ຂໍ້ມູນເພີ່ມເຕີມກ່ຽວກັບການປັບແຕ່ງ Debian Edu ທີມີປະໂຫຍດສຳລັບຜູ້ດູແລລະບົບ ສາມາດເບິ່ງໄດ້ໃນ ບົດວິທີການຈັດການ ແລະ ບົດວິທີການຈັດການຂັ້ນສູງ

12 ການອັບເກຣດ

 ກ່ອນທີຈະອ່ານຄູ່ມືການອັບເກຣດນີ, ກະລຸນາຮັບຊາບວ່າການອັບເດດສີດໆ ໄປຍັງເຊີເວີທີໃຊ້ງານຈິງ ແມ່ນຄວາມສ່ຽງຂອງທ່ານເອງ. **Debian Edu/Skolelinux ບໍ່ມີການຮັບປະກັນໃດໆ ທັງໝົດ, ພາຍໃຕ້ຂອບເຂດທີກົດໝາຍອະນຸຍາດ.**

Please read this chapter and the New features in Bookworm chapter of this manual completely before attempting to upgrade.

12.1 ໝາຍເຫດທົ່ວໄປກ່ຽວກັບການອັບເກຣດ

ການອັບເກຣດ Debian ຈາກເວີຊັນໜຶ່ງໄປຍັງເວີຊັນຖັດໄປໂດຍທົ່ວໄປແລ້ວແມ່ນຂ້ອນຂ້າງງ່າຍ. ແຕ່ສຳລັບ Debian Edu ມັນອາດຈະມີຄວາມຊັບຊ້ອນກວ່າເລັກນ້ອຍ ເນື່ອງຈາກພວກເຮົາມີການແກ້ໄຂ ໄຟລ໌ກຳນົດຄ່າໃນຮູບແບບທີບໍ່ຄວນເຮັດ. ແນວໃດກໍຕາມ ພວກເຮົາໄດ້ບັນທຶກຂັ້ນຕອນທີຈຳເປັນໄວ້ລຸ່ມນີ. (ເບິ່ງ Debian bug 311188 ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບວິທີທີ Debian Edu ຄວນແກ້ໄຂ ໄຟລ໌ກຳນົດຄ່າ.)

ໂດຍທົ່ວໄປແລ້ວ, ການອັບເກຣດເຊີເວີແມ່ນຍາກກວ່າເຄື່ອງວຽກ ແລະ ເຊີເວີຫຼັກ ແມ່ນພາກສ່ວນທີອັບເກຣດຍາກທີສຸດ.

ຖ້າທ່ານຕ້ອງການຄວາມໝັ້ນໃຈວ່າຫຼັງຈາກອັບເກຣດແລ້ວທຸກຢ່າງຈະເຮັດວຽກຄືເກົ່າ, ທ່ານຄວນທົດສອບການອັບເກຣດໃນລະບົບທົດສອບ ຫຼື ລະບົບທີຕັ້ງຄ່າຄືກັນກັບເຄື່ອງທີໃຊ້ງານຈິງ. ຢູ່ທີນັ້ນທ່ານສາມາດທົດສອບການອັບເກຣດໄດ້ໂດຍບໍ່ມີຄວາມສ່ຽງ ແລະ ເບິ່ງວ່າທຸກຢ່າງເຮັດວຽກໄດ້ຕາມທີຄວນຈະເປັນຫຼືບໍ່.

ໃຫ້ແນ່ໃຈວ່າໄດ້ອ່ານຂໍ້ມູນກ່ຽວກັບລຸ້ນ Debian Stable ປັດຈຸບັນໃນ ຄູ່ມືການຕິດຕັ້ງ ຂອງມັນນຳດ້ວຍ.

ມັນອາດຈະເປັນການດີຖ້າຈະລໍຖ້າຈັກໜ້ອຍ ແລະ ໃຊ້ Oldstable ຕໍ່ໄປອີກສອງສາມອາທິດ, ເພື່ອໃຫ້ຄົນອື່ນໄດ້ທົດສອບການອັບເກຣດ ແລະ ບັນທຶກບັນຫາຕ່າງໆ ທີ່ພວກເຂົາພົບ. Debian Edu ລຸ້ນ Oldstable ຈະຍັງໄດ້ຮັບການສະໜັບສະໜູນຕໍ່ໄປອີກໄລຍະໜຶ່ງຫຼັງຈາກ ລຸ້ນ Stable ໃໝ່ຖືກປ່ອຍອອກມາ, ແຕ່ເມື່ອ Debian ຢຸດການສະໜັບສະໜູນ Oldstable, Debian Edu ກໍຈຳເປັນຕ້ອງເຮັດແບບດຽວກັນ.

12.2 Upgrades from Debian Edu Bullseye

 Be prepared: make sure you have tested the upgrade from Bullseye in a test environment or have backups ready to be able to go back.

Please note that the following recipe applies to a default Debian Edu main server installation (desktop=xfce, profiles Main Server, Workstation, LTSP Server). (For a general overview concerning Bullseye to Bookworm upgrade, see: https://www.debian.org/releases/bookworm/releasenotes)

ຫ້າມໃຊ້ X (GUI), ໃຫ້ໃຊ້ virtual console ແລະ ເຂົ້າສູ່ລະບົບໃນນາມ root.

ຖ້າ apt ເຮັດວຽກບໍ່ສຳເລັດ ແລະ ມີຂໍ້ຜິດພາດ, ໃຫ້ພະຍາຍາມແກ້ໄຂ ແລະ/ຫຼື ຣັນ `apt -f install` ແລ້ວຣັນ `apt -y full-upgrade` ອີກຄັ້ງໜຶ່ງ.

12.2.1 ການອັບເກຣດເຊີເວີຫຼັກ

- ເລີ່ມຕົ້ນດ້ວຍການກວດສອບວ່າລະບົບປັດຈຸບັນໄດ້ຮັບການອັບເດດແລ້ວ:

```
apt update
apt full-upgrade
```

- Prepare and start the upgrade to Bookworm:

```
sed -i 's/bullseye/bookworm/g' /etc/apt/sources.list
export LC_ALL=C
apt update
apt upgrade --without-new-pkgs
apt full-upgrade
```

- apt-list-changes: ກຽມຕົວອ່ານຂ່າວສານ (NEWS) ຈຳນວນຫຼາຍ; ກົດ <return> ເພື່ອເລື່ອນລົງ, ກົດ <q> ເພື່ອອອກ. ຂໍ້ມູນທັ້ງໝົດຈະຖືກສົ່ງເມວໄປຫາ root ເພື່ອໃຫ້ທ່ານອ່ານຄືນໄດ້ (ໂດຍໃຊ້ mailx ຫຼື mutt).
- ອ່ານຂໍ້ມູນ debconf ທັ້ງໝົດຢ່າງລະອຽດ, ເລືອກ 'keep the local version currently installed' ຍົກເວັ້ນຈະມີການລະບຸໄວ້ແຕກຕ່າງຈາກນີ້ຢູ່ລຸ່ມນີ້; ໃນກໍລະນີສ່ວນໃຫຍ່ ການກົດ return ແມ່ນໃຊ້ໄດ້.
  - restart services: ເລືອກ yes.
  - Samba server and utilities: ເລືອກ 'keep the local version currently installed'.
  - openssh-server: ເລືອກ 'keep the local version currently installed'.
- ນຳໃຊ້ ແລະ ປັບແຕ່ງການກຳນົດຄ່າ:

```
cf-agent -v -D installation
```

- ກວດສອບວ່າລະບົບທີ່ອັບເກຣດແລ້ວເຮັດວຽກໄດ້ຫຼືບໍ່:

Reboot; ເຂົ້າສູ່ລະບົບໃນນາມຜູ້ໃຊ້ຫໍາອິດ ແລະ ທົດສອບ

- ຖ້ໍ GOsa² GUI ເຮັດວງກໄດ້,
- ຖ້ໍສາມາດເຊືອມຕໍ LTSP clients ແລະ workstations ໄດ້,
- ຖ້ໍສາມາດເພີມ/ລຶບ ສະມາຊິກ netgroup ຂອງລະບົບໄດ້,
- ຖ້ໍສາມາດສົ່ງ ແລະ ຮັບອີເມວພາຍໃນໄດ້,
- ຖ້ໍສາມາດຈັດການເຄືອງພິມໄດ້,
- ແລະ ສິ່ງອືນໆ ທີ່ສະເພາະກັບເວັບໄຊນັ້ນເຮັດວງກໄດ້ຫຼືບໍ.

12.2.2 ການອັບເກຣດເຄືອງວງກ

ປະຕິບັດຂັ້ນຕອນພືນຖານທັ້ງໝົດຄືກັນກັບໃນເຊີເວີຫຼັກ ແລະ ຂ້ໍາມສິ່ງທີ່ບໍ່ຈໍາເປັ້ນ.

12.3 Upgrades from older Debian Edu / Skolelinux installations (before Bullseye)

To upgrade from any older release, you will need to upgrade to the Bullseye based Debian Edu release first, before you can follow the instructions provided above. Instructions are given in the Manual for Debian Edu Bullseye about how to upgrade to Bullseye from the previous release, Buster.

13 ວິທີການ (HowTo)

- ວິທີການສໍາລັບ ການຈັດການທົ່ວໄປ
- ວິທີການສໍາລັບ ການຈັດການຂັ້ນສູງ
- ວິທີການສໍາລັບ ເດັສທອບ
- ວິທີການສໍາລັບ ລູກຄ່າຍໃນເຄືອຂ່ໍາຍ
- ວິທີການສໍາລັບ Samba
- ວິທີການສໍາລັບ ການຮຽນ-ການສອນ
- ວິທີການສໍາລັບ ຜູ້ໃຊ້

14 ວິທີການສໍາລັບການຈັດການທົ່ວໄປ

ບົດ ການເລີມຕົ້ນນໍາໃຊ້ ແລະ ການບໍາລຸງຮັກສາ ອະທິບາຍວິທີເລີມຕົ້ນກັບ Debian Edu ແລະ ວິທີການບໍາລຸງຮັກສາພືນຖານ. ວິທີການ ໃນບົດນີ ຈະມີເຄັດລັບ ແລະ ເຕັກນິກທີ ”ຂັ້ນສູງ” ຂຶ້ນຕົ້ມ.

14.1 ປະຫວັດການກຳນົດຄ່າ: ການຕິດຕາມ /etc/ ໂດຍໃຊ້ລະບົບຄວບຄຸມເວີຊັນ Git

ການນຳໃຊ້ etckeeper, ໄຟລ໌ທັງໝົດໃນ /etc/ ຈະຖືກຕິດຕາມໂດຍໃຊ້ Git ເປັນລະບົບຄວບຄຸມເວີຊັນ.

ສິ່ງນີ້ເຮັດໃຫ້ສາມາດເບິ່ງໄດ້ວ່າເມື່ອໃດໄຟລ໌ຖືກເພີ່ມ, ປ່ຽນແປງ ຫຼື ລຶບອອກ, ລວມທັງເບິ່ງໄດ້ວ່າ ມີຫຍັງປ່ຽນແປງແດ່ຖ້າໄຟລ໌ນັ້ນເປັນໄຟລ໌ຂໍ້ຄວາມ. git repository ແມ່ນຖືກເກັບໄວ້ໃນ /etc/.git/.

ທຸກໆ ຊົ່ວໂມງ, ການປ່ຽນແປງຕ່າງໆ ຈະຖືກບັນທຶກໂດຍອັດຕະໂນມັດ, ເຮັດໃຫ້ສາມາດດຶງ ປະຫວັດການກຳນົດຄ່າມາເບິ່ງຄືນໄດ້.

ເພື່ອເບິ່ງປະຫວັດ, ໃຫ້ໃຊ້ຄຳສັ່ງ etckeeper vcs log. ເພື່ອສົມທຽບຄວາມແຕກຕ່າງລະຫວ່າງສອງຊ່ວງເວລາ, ສາມາດໃຊ້ຄຳສັ່ງ ເຊັ່ນ etckeeper vcs diff .

ເບິ່ງຜົນການເຮັດວຽກຂອງ man etckeeper ສຳລັບຂໍ້ມູນເພີ່ມເຕີມ.

ລາຍຊື່ຄຳສັ່ງທີ່ມີປະໂຫຍດ:

```
etckeeper vcs log
etckeeper vcs status
etckeeper vcs diff
etckeeper vcs add .
etckeeper vcs commit -a
man etckeeper
```

14.1.1 ຕົວຢ່າງການນຳໃຊ້

ໃນລະບົບທີ່ຕິດຕັ້ງໃໝ່, ລອງໃຊ້ຄຳສັ່ງນີ້ເພື່ອເບິ່ງການປ່ຽນແປງທັງໝົດທີ່ເກີດຂຶ້ນຕັ້ງແຕ່ຕິດຕັ້ງລະບົບ:

```
etckeeper vcs log
```

ເບິ່ງວ່າໄຟລ໌ໃດທີ່ຍັງບໍ່ໄດ້ຖືກຕິດຕາມ ແລະ ໄຟລ໌ໃດທີ່ຍັງບໍ່ທັນເປັນເວີຊັນຫຼ້າສຸດ:

```
etckeeper vcs status
```

ເພື່ອ commit ໄຟລ໌ດ້ວຍຕົນເອງ (ໃນກໍລະນີທີ່ທ່ານບໍ່ຕ້ອງການລໍຖ້າຮອບອັດຕະໂນມັດທຸກໆ ຊົ່ວໂມງ):

```
etckeeper vcs commit -a /etc/resolv.conf
```

14.2 ການປັບຂະໜາດພາທິຊັນ

ໃນ Debian Edu, ພາທິຊັນທັງໝົດຍົກເວັ້ນພາທິຊັນ /boot/ ແມ່ນຢູ່ໃນວໍລຸ່ມ LVM. ດ້ວຍເຄີເນລ Linux ຕັ້ງແຕ່ເວີຊັນ 2.6.10 ເປັນຕົ້ນມາ, ທ່ານສາມາດຂະຫຍາຍ ພາທິຊັນໃນຂະນະທີ່ພວກມັນກຳລັງຖືກ mount ຢູ່ໄດ້. ແຕ່ການຫຼຸດຂະໜາດພາທິຊັນຍັງຈຳເປັນຕ້ອງ ເຮັດໃນຂະນະທີ່ພາທິຊັນນັ້ນບໍ່ໄດ້ຖືກ mount.

ມັນເປັນຄວາມຄິດທີ່ດີທີ່ຈະຫຼີກເວັ້ນການສ້າງພາທິຊັນທີ່ໃຫຍ່ເກີນໄປ (ຕົວຢ່າງ: ຫຼາຍກວ່າ 20GiB), ເນື່ອງຈາກມັນຕ້ອງໃຊ້ເວລາດົນໃນ ການຣັນ fsck ຫຼື ໃນການກູ້ຄືນ ຈາກຂໍ້ມູນສຳຮອງເມື່ອຈຳເປັນ. ມັນຈະດີກວ່າຖ້າສ້າງພາທິຊັນຍ່ອຍຫຼາຍໆ ອັນແທນທີ່ຈະເປັນອັນດຽວ ທີ່ໃຫຍ່ຫຼາຍ.

ມີ ສະ ຄຣິ ປ ຊ່ວຍ debian- edu- fsautoresize ເພື່ອ ເຮັດ ໃຫ້ ການ ຂະ ຫຍາຍ ພາ ທິ ຊັນ ທີ ເຕັມ ນັ ນ ງ່າ ຍ ຂຶ ນ. ເມື ອ ຖືກ ຮຽກ ໃຊ້, ມັ ນ ຈະ ອ່ານ ການ ກຳ ນົ ດ ຄ່ າ ຈາກ / usr/ share/ debian- edu- config/ fsautoresizetab, / site/ etc/ fsautoresizetab ແລະ /etc/ fsautoresizetab. ຈາກນັ້ນມັນຈະສະເໜີໃຫ້ຂະຫຍາຍພາທິຊັນທີ່ມີພື້ນທີ່ຫວ່າງໜ້ອຍ ເກີນໄປ ຕາມກົດທີ່ກຳນົດໄວ້ໃນໄຟລ໌ເຫຼົ່ານັ້ນ. ຖ້າຣັນໂດຍບໍ່ມີອາຄິວເມັ້ນ (arguments), ມັນຈະສະແດງພຽງແຕ່ຄຳສັ່ງທີ່ຈຳເປັນໃນ ການຂະຫຍາຍລະບົບໄຟລ໌. ຕ້ອງໃຊ້ -n ເພື່ອສັ່ງໃຫ້ຣັນຄຳສັ່ງເຫຼົ່ານັ້ນແທ້ໆ.

ສະຄຣິບນີ້ຈະຖືກຣັນໂດຍອັດຕະໂນມັດທຸກໆ ຊົ່ວໂມງໃນທຸກລູກຄ່າຍທີ່ມີລາຍຊື່ໃນ netgroup fsautoresize-hosts.

ເມື່ອພາທິຊັນທີ່ໃຊ້ໂດຍ Squid proxy ຖືກປັບຂະໜາດ, ຄ່າຂອງ cache size ໃນ etc/squid/squid.conf ກໍຕ້ອງໄດ້ຮັບການ ອັບເດດນຳ. ມີສະຄຣິບຊ່ວຍ /usr/share/debian-edu-config/tools/squid-update-cachedir ເພື່ອເຮັດສິ່ງນີ້ ໂດຍອັດຕະໂນມັດ, ໂດຍມັນຈະກວດສອບຂະໜາດພາທິຊັນປັດຈຸບັນຂອງ /var/spool/squid/ ແລະ ກຳນົດຄ່າໃຫ້ Squid ໃຊ້ 80% ຂອງພື້ນທີ່ນັ້ນເປັນຂະໜາດແຄຊ.

14.2.1 ການຈັດການວໍລຸ່ມແບບໂລຈິກ (LVM)

Logical Volume Management (LVM) ຊ່ວຍໃຫ້ສາມາດປັບຂະໜາດພາທິຊັນໄດ້ໃນຂະນະທີ່ພວກມັນ ກຳລັງຖືກ mount ແລະ ໃຊ້ງານຢູ່. ທ່ານສາມາດຮຽນຮູ້ເພີ່ມເຕີມກ່ຽວກັບ LVM ໄດ້ຈາກ LVM HowTo.

ເພື່ອຂະຫຍາຍວໍລຸ່ມແບບໂລຈິກດ້ວຍຕົນເອງ, ທ່ານພຽງແຕ່ບອກຄຳສັ່ງ `lvextend` ວ່າຕ້ອງການໃຫ້ມັນໃຫຍ່ເທົ່າໃດ. ຕົວຢ່າງ: ເພື່ອ ຂະຫຍາຍ home0 ເປັນ 30GiB ໃຫ້ໃຊ້ຄຳສັ່ງດັ່ງນີ:

```
lvextend -L30G /dev/vg_system/skole+tjener+home0
resize2fs /dev/vg_system/skole+tjener+home0
```

ເພື່ອຂະຫຍາຍ home0 ຕື່ມອີກ 30GiB, ໃຫ້ໃສ່ເຄື່ອງໝາຍ '+' (-L+30G).

14.3 ການນຳໃຊ້ ldapvi

ldapvi ແມ່ນເຄື່ອງມື ສຳລັບແກ້ໄຂຖານຂໍ້ມູນ LDAP ດ້ວຍຕົວແກ້ໄຂຂໍ້ຄວາມປົກກະຕິໃນບັນທັດຄຳສັ່ງ.

ຕ້ອງຣັນຄຳສັ່ງຕໍ່ໄປນີ:

```
ldapvi -ZD '(cn=admin)'
```

ໝາຍເຫດ: `ldapvi` ຈະໃຊ້ຕົວແກ້ໄຂໄຟລ໌ທີ່ເປັນຄ່າເລີ່ມຕົ້ນຂອງລະບົບ. ໂດຍການຣັນ `export EDITOR=vim` ໃນເຊວ ທ່ານ ສາມາດ ກຳນົດຄ່າໃຫ້ໃຊ້ vim ເປັນຕົວແກ້ໄຂໄຟລ໌ໄດ້.

 ຄຳເຕືອນ: `ldapvi` ແມ່ນເຄື່ອງມືທີ່ມີອຳນາດຫຼາຍ. ໃຫ້ລະມັດລະວັງ ແລະ ຢ່າເຮັດໃຫ້ຖານຂໍ້ມູນ LDAP ເພພັງ, ຄຳເຕືອນນີ້ຍັງ ລວມເຖິງການໃຊ້ JXplorer ນຳດ້ວຍ.

14.4 NFS ທີ່ໃຊ້ Kerberos

ການໃຊ້ Kerberos ສຳລັບ NFS ເພື່ອ mount ໄດເຣັກທໍຣີຫຼັກແມ່ນຄຸນສົມບັດດ້ານຄວາມປອດໄພ. ເຄື່ອງວຽກ ແລະ LTSP clients ຈະເຮັດວຽກບໍ່ໄດ້ຖ້າບໍ່ມີ Kerberos. ລະດັບທີ່ຮອງຮັບຄື krb5, krb5i ແລະ krb5p (krb5 ໝາຍເຖິງການຢືນຢັນຕົວຕົນ Kerberos, i ໝາຍເຖິງການກວດສອບຄວາມຖືກຕ້ອງຂອງຂໍ້ມູນ (integrity check) ແລະ p ໝາຍເຖິງຄວາມເປັນສ່ວນຕົວ ຫຼື ການເຂົ້າລະຫັດ); ພາລະຂອງທັ້ງເຊີເວີ ແລະ ເຄື່ອງວຽກຈະເພີ່ມຂຶ້ນ ຕາມລະດັບຄວາມປອດໄພ, krb5i ແມ່ນທາງເລືອກທີ່ດີ ແລະ ຖືກເລືອກໃຫ້ເປັນຄ່າ ເລີ່ມຕົ້ນ.

14.4.1 ວິທີການປ່ຽນຄ່າເລີ່ມຕົ້ນ

ເຊີເວີຫຼັກ

- ເຂົ້າສູ່ລະບົບໃນນາມ root
- ຣັນ `ldapvi -ZD '(cn=admin)'`, ຄົ້ນຫາ sec=krb5i ແລ້ວປ່ຽນເປັນ sec=krb5 ຫຼື sec=krb5p.
- ແກ້ໄຂໄຟລ໌ `/etc/exports.d/edu.exports` ແລະ ປັບປ່ຽນລາຍການເຫຼົ່ານີ້ຕາມຄວາມເໝາະສົມ:

```
/srv/nfs4        gss/krb5i(rw,sync,fsid=0,crossmnt,no_subtree_check)
/srv/nfs4/home0  gss/krb5i(rw,sync,no_subtree_check)
```

- ຣັນ `exportfs -r`.

14.5 Standardskriver (ເຄື່ອງພິມມາດຕະຖານ)

ເຄື່ອງມືນີ້ຊ່ວຍໃຫ້ສາມາດຕັ້ງຄ່າເຄື່ອງພິມເລີ່ມຕົ້ນໂດຍອີງຕາມສະຖານທີ, ເຄື່ອງ, ຫຼື ຄວາມເປັນສະມາຊິກກຸ່ມ. ສໍາລັບຂໍ້ມູນເພີ່ມເຕີມ, ເບິ່ງ /usr/share/doc/standardskriver/README.md.

ໄຟລ໌ກໍານົດຄ່າ /etc/standardskriver.cfg ຕ້ອງຖືກກໍານົດໂດຍຜູ້ດູແລລະບົບ, ເບິ່ງຕົວຢ່າງໄດ້ທີ /usr/share/doc/standardskriver/examples/standardskriver.cfg.

14.6 JXplorer, ໜ້າຕ່າງກຣາຟິກສໍາລັບ LDAP

ຖ້າທ່ານມັກໃຊ້ໜ້າຕ່າງກຣາຟິກ (GUI) ເພື່ອເຮັດວຽກກັບຖານຂໍ້ມູນ LDAP, ໃຫ້ເບິ່ງແພັກເກດ jxplorer, ເຊິ່ງຖືກຕິດຕັ້ງໄວ້ເປັນຄ່າເລີ່ມຕົ້ນ. ເພື່ອໃຫ້ໄດ້ສິດໃນການຂຽນຂໍ້ມູນ ໃຫ້ເຊື່ອມຕໍ່ດັ່ງນີ:

```
host: ldap.intern
port: 636
Security level: ssl + user + password
User dn: cn=admin,ou=ldap-access,dc=skole,dc=skolelinux,dc=no
```

14.7 ldap-createuser-krb5, ເຄື່ອງມືບັນທັດຄໍາສັ່ງສໍາລັບການເພີ່ມຜູ້ໃຊ້

ldap-createuser-krb ແມ່ນເຄື່ອງມືບັນທັດຄໍາສັ່ງຂະໜາດນ້ອຍ ເພື່ອສ້າງບັນຊີຜູ້ໃຊ້, ມັນຖືກຮຽກໃຊ້ດັ່ງນີ:

```
ldap-createuser-krb5 [-u uid] [-g gid] [-G group[,group]...] [-d department] <username> < ↩
    gecos>
```

ອາຄິວເມັນທັງໝົດຍົກເວັ້ນຊື່ຜູ້ໃຊ້ ແລະ ຊ່ອງ GECOS ແມ່ນສາມາດເລືອກໃສ່ຫຼືບໍ່ກໍໄດ້, ຊ່ອງ GECOS ປົກກະຕິແລ້ວຄວນມີຊື່ເຕັມຂອງຜູ້ໃຊ້. ຖ້າບໍ່ໄດ້ລະບຸ, ເຄື່ອງມືຈະເລືອກ UID ແລະ GID ທີ່ຫວ່າງຖັດໄປໂດຍອັດຕະໂນມັດ ແລະ ຈະບໍ່ກໍານົດກຸ່ມເພີ່ມເຕີມໃຫ້ຜູ້ໃຊ້. ຖ້າບໍ່ໄດ້ລະບຸພະແນກ (department), ມັນຈະເລືອກ gosaDepartment ອັນທໍາອິດ ຈາກ LDAP ເຊິ່ງອາດຈະແມ່ນ skole ແລະ ປົກກະຕິແລ້ວບໍ່ແມ່ນສິ່ງທີ່ທ່ານ ຕ້ອງການສໍາລັບຜູ້ໃຊ້ຫົວໄປ, ດັ່ງນັ້ນທ່ານຄວນເລືອກຄ່າທີ່ເໝາະສົມ ເຊັ່ນ Teachers ຫຼື Students. ຫຼັງຈາກປ້ອນ ແລະ ຢືນຢັນລະຫັດຜ່ານ ລວມທັງປ້ອນລະຫັດຜ່ານ ຜູ້ດູແລລະບົບ LDAP ແລ້ວ, ldap-createuser-krb5 ຈະສ້າງບັນຊີ ຜູ້ໃຊ້ໃນ LDAP, ຕັ້ງລະຫັດຜ່ານ Kerberos, ສ້າງໄດເຣັກທໍຣີຫຼັກ, ແລະ ເພີ່ມຜູ້ໃຊ້ Samba ທີ່ກ່ຽວຂ້ອງ. ຮູບສະແດງໜ້າຈໍຕໍ່ໄປນີ້ສະແດງຕົວຢ່າງການຮຽກໃຊ້ເພື່ອສ້າງບັນຊີຜູ້ໃຊ້ຊື harhir ສໍາລັບຄູອາຈານທີ່ຊື່ເຕັມວ່າ ”Harry Hirsch”:

```
root@tjener:~# ldap-createuser-krb5 -d Teachers harhir ”Harry Hirsch”
new user password:
confirm password:

dn: uid=harhir,ou=people,ou=Teachers,dc=skole,dc=skolelinux,dc=no
changetype: add
objectClass: top
objectClass: person
objectClass: organizationalPerson
objectClass: inetOrgPerson
objectClass: gosaAccount
objectClass: posixAccount
objectClass: shadowAccount
objectClass: krbPrincipalAux
objectClass: krbTicketPolicyAux
sn: Harry Hirsch
givenName: Harry Hirsch
uid: harhir
cn: Harry Hirsch
userPassword: {CRYPT}$y$j9T$TWnq55O1rvyLhjF.$oVf.t.RXC1v/4Y8FhV0umno629mo7bP7/YJyig6HET6
homeDirectory: /skole/tjener/home0/harhir
loginShell: /bin/bash
```

```
uidNumber: 1004
gidNumber: 1004
gecos: Harry Hirsch
shadowLastChange: 19641
shadowMin: 0
shadowMax: 99999
shadowWarning: 7
krbPwdPolicyReference: cn=users,cn=INTERN,cn=kerberos,dc=skole,dc=skolelinux,dc=no
krbPrincipalName: harhir@INTERN

ldap_initialize( <DEFAULT> )
Enter LDAP Password:
add objectClass:
        top
        person
        organizationalPerson
        inetOrgPerson
        gosaAccount
        posixAccount
        shadowAccount
        krbPrincipalAux
        krbTicketPolicyAux
add sn:
        Harry Hirsch
add givenName:
        Harry Hirsch
add uid:
        harhir
add cn:
        Harry Hirsch
add userPassword:
        {CRYPT}$y$j9T$TWnq55O1rvyLhjF.$oVf.t.RXC1v/4Y8FhV0umno629mo7bP7/YJyig6HET6
add homeDirectory:
        /skole/tjener/home0/harhir
add loginShell:
        /bin/bash
add uidNumber:
        1004
add gidNumber:
        1004
add gecos:
        Harry Hirsch
add shadowLastChange:
        19641
add shadowMin:
        0
add shadowMax:
        99999
add shadowWarning:
        7
add krbPwdPolicyReference:
        cn=users,cn=INTERN,cn=kerberos,dc=skole,dc=skolelinux,dc=no
add krbPrincipalName:
        harhir@INTERN
adding new entry ”uid=harhir,ou=people,ou=Teachers,dc=skole,dc=skolelinux,dc=no”
modify complete

Authenticating as principal root/admin@INTERN with password.
kadmin.local:  change_password harhir@INTERN
Enter password for principal ”harhir@INTERN”:
Re-enter password for principal ”harhir@INTERN”:
Password for ”harhir@INTERN” changed.
```

```
kadmin.local:  lpcfg_do_global_parameter: WARNING: The "encrypt passwords" option is  ↩
    deprecated
Added user harhir.
```

14.8 ການນຳໃຊ້ stable-updates

ເຖິງວ່າທ່ານສາມາດໃຊ້ stable-updates ໄດ້ໂດຍກົງ, ແຕ່ທ່ານບໍ່ຈຳເປັນຕ້ອງເຮັດແນວນັ້ນ: stable-updates ຈະຖືກສົ່ງເຂົ້າໄປໃນ stable suite ເປັນປະຈຳເມື່ອມີການປ່ອຍ stable point releases ເຊິ່ງປົກກະຕິຈະເກີດຂຶ້ນທຸກໆ ສອງເດືອນ.

14.9 ການນຳໃຊ້ backports ເພື່ອຕິດຕັ້ງຊອບແວທີ່ໃໝ່ກວ່າ

ທ່ານກຳລັງໃຊ້ Debian Edu ເພາະທ່ານມັກຄວາມສະຖຽນຂອງມັນ. ມັນເຮັດວຽກໄດ້ດີຫຼາຍ; ແຕ່ມີບັນຫາດຽວຄື: ບາງຄັ້ງຊອບແວອາດຈະເກົ່າກວ່າທີ່ທ່ານຕ້ອງການເລັກນ້ອຍ. ນີ້ຄືຈຸດທີ່ backports.debian.org ເຂົ້າມາຊ່ວຍ.

Backports ແມ່ນແພັກເກດທີ່ຖືກຄອມພາຍໃໝ່ຈາກ Debian testing (ສ່ວນໃຫຍ່) ແລະ Debian unstable (ໃນບາງກໍລະນີ ເຊັ່ນ ການອັບເດດຄວາມປອດໄພ), ເພື່ອໃຫ້ພວກມັນສາມາດຣັນໄດ້ໂດຍບໍ່ຕ້ອງໃຊ້ ໄລບຣາຣີໃໝ່ (ເທົ່າທີ່ເປັນໄປໄດ້) ເທິງ Debian ລຸ້ນ stable ເຊັ່ນ Debian Edu. **ພວກເຮົາແນະນຳໃຫ້ທ່ານເລືອກສະເພາະ backports ທີ່ທ່ານຈຳເປັນຕ້ອງໃຊ້ແທ້ໆ, ແລະ ບໍ່ຄວນໃຊ້ທຸກ backports ທີ່ມີຢູ່ທີ່ນັ້ນ.**

Using backports is simple:

```
echo "deb http://deb.debian.org/debian/ bookworm-backports main" > /etc/apt/sources.list.d/ ↩
    bookworm-backports.sources.list
apt update
```

ຫຼັງຈາກນັ້ນທ່ານກໍສາມາດຕິດຕັ້ງແພັກເກດຈາກ backport ໄດ້ຢ່າງງ່າຍດາຍ, ຄຳສັ່ງຕໍ່ໄປນີ້ ຈະຕິດຕັ້ງ tuxtype ເວີຊັ່ນ backport:

```
apt install tuxtype/bookworm-backports
```

Backports ຈະຖືກອັບເດດໂດຍອັດຕະໂນມັດ (ຖ້າມີ) ຄືກັນກັບແພັກເກດອື່ນໆ. ເຊັ່ນດຽວກັບບ່ອນເກັບໄຟລ໌ປົກກະຕິ, backports ມີ ສາມພາກສ່ວນຄື: main, contrib ແລະ non-free.

14.10 ການອັບເກຣດດ້ວຍ CD ຫຼື ໄຟລ໌ອິເມຈທີ່ຄ້າຍຄືກັນ

If you want to upgrade from one version to another (for example from Bookworm 12.1 to 12.2) but you do not have Internet connectivity, only physical media, follow these steps:

ໃສ່ແຜ່ນ CD / DVD / Blu-ray ຫຼື USB flash drive ແລ້ວໃຊ້ຄຳສັ່ງ apt-cdrom:

```
apt-cdrom add
```

ຂໍ້ອ້າງອີງຈາກໜ້າຄູ່ມື (man page) ຂອງ apt-cdrom(8):

- apt-cdrom ຖືກນຳໃຊ້ເພື່ອເພີ່ມ CD-ROM ໃໝ່ເຂົ້າໃນລາຍຊື່ແຫຼ່ງຂໍ້ມູນຂອງ APT. apt-cdrom ຈະຈັດການກວດສອບໂຄງສ້າງຂອງແຜ່ນ ລວມທັງແກ້ໄຂຂໍ້ຜິດພາດທີ່ອາດເກີດຈາກການເໜົ້າແຜ່ນ ແລະ ກວດສອບຄວາມຖືກຕ້ອງຂອງໄຟລ໌ດັດສະນີ.
- ຈຳເປັນຕ້ອງໃຊ້ apt-cdrom ເພື່ອເພີ່ມ CD ເຂົ້າໃນລະບົບ APT, ບໍ່ສາມາດເຮັດດ້ວຍຕົນເອງໄດ້. ນອກຈາກນັ້ນ, ແຕ່ລະແຜ່ນໃນຊຸດທີ່ມີຫຼາຍ CD ຈະຕ້ອງຖືກໃສ່ ແລະ ສະແກນແຍກກັນ ເພື່ອປ້ອງກັນຂໍ້ຜິດພາດທີ່ອາດເກີດຂຶ້ນ.

ຈາກນັ້ນຣັນສອງຄຳສັ່ງນີ້ເພື່ອອັບເກຣດລະບົບ:

```
apt update
apt full-upgrade
```

14.11 ການລ້າງໂປຣເຊສທີ່ຄ້າງຢູ່ໂດຍອັດຕະໂນມັດ

killer ແມ່ນສະຄຣິບ perl ທີ່ເຮັດໜ້າທີ່ກຳຈັດວຽກໃນພື້ນຫຼັງ (background jobs). ວຽກໃນພື້ນຫຼັງຄືໂປຣເຊສທີ່ເປັນຂອງຜູ້ໃຊ້ ທີ່ບໍ່ໄດ້ເຂົ້າສູ່ລະບົບເຄື່ອງຢູ່ໃນຂະນະນັ້ນ. ມັນຈະຖືກຣັນໂດຍ cron job ທຸກໆ ຊົ່ວໂມງ.

14.12 ການຕິດຕັ້ງການອັບເດດຄວາມປອດໄພໂດຍອັດຕະໂນມັດ

unattended-upgrades ແມ່ນແພັກເກດ Debian ທີ່ ຈະຕິດຕັ້ງການອັບເດດຄວາມປອດໄພ (ແລະ ອື່ນໆ) ໂດຍອັດຕະໂນມັດ. ຖ້າ ຕິດຕັ້ງແລ້ວ, ແພັກເກດຈະຖືກກຳນົດຄ່າໄວ້ລ່ວງໜ້າໃຫ້ຕິດຕັ້ງການອັບເດດຄວາມປອດໄພ. ສາມາດເບິ່ງບັນທຶກ (logs) ໄດ້ທີ່ /var/log/unattended-upgrades/; ນອກຈາກນັ້ນ ຍັງມີ /var/log/dpkg.log ແລະ /var/log/apt/ ຢູ່ສະເໝີ.

14.13 ການປິດເຄື່ອງອັດຕະໂນມັດໃນຕອນກາງຄືນ

ທ່ານສາມາດປະຢັດພະລັງງານ ແລະ ເງິນໄດ້ໂດຍການປິດເຄື່ອງລູກຄ່າຍໂດຍອັດຕະໂນມັດໃນຕອນກາງຄືນ ແລະ ເປີດຄືນໃນຕອນເຊົ້າ. ແພັກເກດ shutdown-at-night ຈະພະຍາຍາມປິດເຄື່ອງທຸກໆ ຊົ່ວໂມງຕັ້ງແຕ່ເວລາ 16:00 ໂມງແລງ, ແຕ່ຈະບໍ່ປິດເຄື່ອງ ຖ້າມີຜູ້ ໃຊ້ງານຢູ່. ມັນຈະພະຍາຍາມບອກ BIOS ໃຫ້ເປີດເຄື່ອງໃນເວລາປະມານ 07:00 ໂມງເຊົ້າ, ແລະ ເຊີເວີຫຼັກຈະພະຍາຍາມເປີດເຄື່ອງ ຕັ້ງແຕ່ເວລາ 06:30 ໂມງ ໂດຍການສົ່ງແພັກເກດ Wake-on-LAN. ເວລາເຫຼົ່ານີ້ສາມາດປ່ຽນແປງໄດ້ໃນ crontab ຂອງແຕ່ລະເຄື່ອງ.

ບາງສິ່ງທີ່ຄວນຄຳນຶງເຖິງເມື່ອຕັ້ງຄ່າລະບົບນີ້:

- ເຄື່ອງລູກຄ່າຍບໍ່ຄວນຖືກປິດເມື່ອມີຄົນກຳລັງໃຊ້ງານຢູ່. ສິ່ງນີ້ຈະຖືກກວດສອບໂດຍການເບິ່ງ ຜົນຂອງຄຳສັ່ງ who, ແລະ ໃນກໍລະນີ ພິເສດ, ຈະກວດສອບຄຳສັ່ງການເຊື່ອມຕໍ່ SSH ເພື່ອໃຫ້ເຮັດວຽກຮ່ວມກັບ X2Go thin clients ໄດ້.
- ເພື່ອຫຼີກເວັ້ນບັນຫາຝົວໄຟຟ້າຂາດ, ມັນເປັນຄວາມຄິດທີ່ດີທີ່ຈະເຮັດໃຫ້ແນ່ໃຈວ່າ ລູກຄ່າຍທັ້ງໝົດບໍ່ໄດ້ເລີ່ມວຽກພ້ອມກັນ.
- ມີສອງວິທີໃນການປຸກເຄື່ອງລູກຄ່າຍໃຫ້ຕື່ນ. ວິທີໜຶ່ງຄືການໃຊ້ຄຸນສົມບັດຂອງ BIOS ເຊິ່ງຕ້ອງອາໄສ ໂມງຂອງຮາດແວທີ່ເຮັດວຽກ ຢ່າງຖືກຕ້ອງ, ລວມທັ້ງເມນບອດ ແລະ ເວີຊັນ BIOS ທີ່ຮອງຮັບໂດຍ nvram-wakeup; ສ່ວນອີກວິທີໜຶ່ງຄືການໃຫ້ລູກຄ່າຍຮອງຮັບ Wake-on-LAN, ແລະ ເຊີເວີຕ້ອງຮູ້ຈັກລູກຄ່າຍທັ້ງໝົດທີ່ຕ້ອງການຈະປຸກ.

14.13.1 ວິທີການຕັ້ງຄ່າ shutdown-at-night

ໃນເຄື່ອງລູກຄ່າຍທີ່ຕ້ອງການໃຫ້ປິດໃນຕອນກາງຄືນ, ໃຫ້ສ້າງໄຟລ໌ /etc/shutdown-at-night/shutdown-at-night (ໃຊ້ຄຳສັ່ງ touch), ຫຼື ເພີ່ມຊື່ໂຮສທ໌ (ຜົນຈາກຄຳສັ່ງ 'uname -n' ໃນເຄື່ອງລູກຄ່າຍ) ເຂົ້າໃນ netgroup "shutdown-at-night-hosts". ການເພີ່ມໂຮສທ໌ເຂົ້າໃນ netgroup ໃນ LDAP ສາມາດເຮັດໄດ້ໂດຍໃຊ້ເຄື່ອງມືເວັບ GOsa². ເຄື່ອງລູກຄ່າຍອາດຈະ ຕ້ອງໄດ້ກຳນົດຄ່າ Wake-on-LAN ໃນ BIOS. ສິ່ງທີ່ສຳຄັນອີກຢ່າງໜຶ່ງຄື ສະວິດ ແລະ ເຣົ້າເຕີ ທີ່ຢູ່ລະຫວ່າງເຊີເວີ Wake-on-LAN ແລະ ລູກຄ່າຍ ຈະຕ້ອງສົ່ງຕໍ່ແພັກເກດ WOL ໄປຫາລູກຄ່າຍໄດ້ ເຖິງວ່າລູກຄ່າຍຈະປິດຢູ່ກໍຕາມ. ສະວິດບາງລຸ້ນອາດຈະບໍ່ສົ່ງຕໍ່ແພັກ ເກດ ໄປຫາລູກຄ່າຍທີ່ບໍ່ມີຢູ່ໃນຕາຕະລາງ ARP ຂອງສະວິດ, ເຊິ່ງຈະເຮັດໃຫ້ແພັກເກດ WOL ຖືກປະລັອກ.

ເພື່ອເປີດໃຊ້ Wake-on-LAN ໃນເຊີເວີ, ໃຫ້ເພີ່ມລາຍຊື່ລູກຄ່າຍໃນ /etc/shutdown-at-night/clients, ໂດຍໃຫ້ມີໜຶ່ງ ແຖວຕໍ່ໜຶ່ງລູກຄ່າຍ, ໃສ່ທີ່ຢູ່ IP ກ່ອນ, ຕາມດ້ວຍທີ່ຢູ່ MAC, ຂັ້ນດ້ວຍຊ່ອງຫວ່າງ; ຫຼື ສ້າງສະຄຣິບ /etc/shutdown-at-night/clients-generator ເພື່ອສ້າງລາຍຊື່ລູກຄ່າຍແບບອັດຕະໂນມັດ.

ນີ້ຄືຕົວຢ່າງ /etc/shutdown-at-night/clients-generator ສຳລັບໃຊ້ຮ່ວມກັບ sitesummary:

```
#!/bin/sh
PATH=/usr/sbin:$PATH
export PATH
sitesummary-nodes -w
```

ອີກທາງເລືອກໜຶ່ງ ຖ້າໃຊ້ netgroup ເພື່ອເປີດໃຊ້ shutdown-at-night ໃນລູກຄ່າຍ ແມ່ນການໃຊ້ສະຄຣິບນີ້ຮ່ວມກັບເຄື່ອງມື netgroup ຈາກແພັກເກດ ng-utils:

```
#!/bin/sh
PATH=/usr/sbin:$PATH
export PATH
netgroup -h shutdown-at-night-hosts
```

14.14 ການເຂົ້າເຖິງເຊີເວີ Debian Edu ທີ່ຢູ່ເບື້ອງຫຼັງໄຟວໍ (firewall)

ເພື່ອເຂົ້າເຖິງເຄື່ອງທີ່ຢູ່ເບື້ອງຫຼັງ ໄຟວໍຈາກອິນເຕີເນັດ, ໃຫ້ພິຈາລະນາຕິດຕັ້ງແພັກເກດ autossh. ມັນສາມາດໃຊ້ເພື່ອຕັ້ງຄ່າ SSH tunnel ໄປຫາເຄື່ອງໃນອິນເຕີເນັດທີ່ທ່ານສາມາດເຂົ້າເຖິງໄດ້. ຈາກເຄື່ອງນັ້ນ, ທ່ານຈະສາມາດ ເຂົ້າເຖິງເຊີເວີທີ່ຢູ່ເບື້ອງຫຼັງ ໄຟວໍຜ່ານ SSH tunnel ໄດ້.

14.15 ການຕິດຕັ້ງເຄື່ອງບໍລິການເພີ່ມເຕີມເພື່ອລະບາຍພາລະຈາກເຊີເວີຫຼັກ

ໃນການຕິດຕັ້ງແບບເລີ່ມຕົ້ນ, ທຸກບໍລິການຈະຮັນຢູ່ເທິງເຊີເວີຫຼັກ ທີ່ມີຊື່ໂຮສທ້ວ່າ tjener. ເພື່ອໃຫ້ການຍ້າຍບາງບໍລິການໄປຍັງເຄື່ອງອື່ນນັ້ນງ່າຍຂຶ້ນ, ຈຶ່ງມີໂປຣໄຟລ໌ການຕິດຕັ້ງແບບ minimal ໃຫ້ເລືອກ. ການຕິດຕັ້ງດ້ວຍໂປຣໄຟລ໌ນີ້ຈະເຮັດໃຫ້ໄດ້ເຄື່ອງ ທີ່ເປັນສ່ວນໜຶ່ງ ຂອງເຄືອຂ່າຍ Debian Edu ແຕ່ຍັງບໍ່ທັນມີບໍລິການໃດໆ ຮັນຢູ່.

ນີ້ຄືຂັ້ນຕອນທີ່ຈຳເປັນໃນການຕັ້ງຄ່າເຄື່ອງທີ່ອຸທິດສຳລັບບາງບໍລິການໂດຍສະເພາະ:

- ເລືອກໂປຣໄຟລ໌ Minimal ໃນລະຫວ່າງການຕິດຕັ້ງ
- ຕິດຕັ້ງແພັກເກດສຳລັບບໍລິການນັ້ນ
- ກຳນົດຄ່າບໍລິການ
- ປິດບໍລິການນັ້ນໃນເຊີເວີຫຼັກ
- ອັບເດດ DNS (ຜ່ານ LDAP/GOsa²) ໃນເຊີເວີຫຼັກ

14.16 ວິທີການ (HowTos) ຈາກ wiki.debian.org

FIXME: The HowTos from https://wiki.debian.org/DebianEdu/HowTo/ are either user- or developer-specific. Let's move the user-specific HowTos over here (and delete them over there)! (But first ask the authors (see the history of those pages to find them) if they are fine with moving the howto and putting it under the GPL.)

- https://wiki.debian.org/DebianEdu/HowTo/AutoNetRespawn
- https://wiki.debian.org/DebianEdu/HowTo/BackupPC
- https://wiki.debian.org/DebianEdu/HowTo/ChangeIpSubnet
- https://wiki.debian.org/DebianEdu/HowTo/SiteSummary
- https://wiki.debian.org/DebianEdu/HowTo/Squid_LDAP_Authentication

15 ວິທີການຈັດການຂັ້ນສູງ

ໃນບົດນີ້ຈະອະທິບາຍເຖິງວຽກງານການຈັດການຂັ້ນສູງ.

15.1 ການປັບແຕ່ງຜູ້ໃຊ້ດ້ວຍ GOsa²

15.1.1 ການສ້າງຜູ້ໃຊ້ຕາມກຸ່ມປີ

In this example we want to create users in year groups, with common home directories for each group (home0/2024, home0/2026, etc). We want to create the users by csv import.

(ໃນນາມ root ໃນເຊີເວີຫຼັກ)

• ສ້າງໄດເຣັກທໍຣີກຸ່ມປີທີຈໍາເປັນ

mkdir /skole/tjener/home0/2024

(ໃນນາມຜູ້ໃຊ້ທໍາອິດໃນ Gosa)

• ພະແນກ (Department)

Main menu: goto 'Directory structure', click the 'Students' department. The 'Base' field should show '/Students'. From the drop box 'Actions' choose 'Create'/'Department'. Fill in values for Name (2024) and Description fields (students graduating in 2024), leave the Base field as is (should be '/Students'). Save it clicking 'Ok'. Now the new department (2024) should show up below /Students. Click it.

• ກຸ່ມ (Group)

Choose 'Groups' from the main menu; 'Actions'/Create/Group. Enter group name (leave 'Base' as is, should be /Students/2024) and 'Ok' to save it.

• ແມ່ແບບ (Template)

ເລືອກ 'ຜູ້ໃຊ້' (users) ຈາກເມນູຫຼັກ. ປ່ຽນເປັນ 'ນັກຮຽນ' (Students) ໃນຊ່ອງ Base. ລາຍການ NewStudent ຄວນຈະປະກົດຂຶ້ນ, ໃຫ້ຄລິກໃສ່ມັນ. ນີ້ແມ່ນແມ່ແບບຂອງ 'ນັກຮຽນ', ບໍ່ແມ່ນຜູ້ໃຊ້ຕົວຈິງ. ເນື່ອງຈາກທ່ານຈະຕ້ອງໄດ້ສ້າງແມ່ແບບດັ່ງກ່າວ (ເພື່ອໃຫ້ສາມາດນໍາໃຊ້ການນໍາເຂົ້າ csv ສໍາລັບໂຄງສ້າງຂອງທ່ານ) ໂດຍອີງໃສ່ແມ່ແບບນີ້, ໃຫ້ສັງເກດທຸກລາຍການທີ່ປະກົດຂຶ້ນໃນແຖບ Generic ແລະ POSIX, ບາງທີອາດຈະຕ້ອງຖ່າຍພາບໜ້າຈໍ ເພື່ອເກັບຂໍ້ມູນໄວ້ໃຫ້ພ້ອມ ສໍາລັບການສ້າງແມ່ແບບໃໝ່.

Now change to /Students/2024 in the Base field; choose Create/Template and start to fill in your desired values, first the Generic tab (add your new 2024 group under Group Membership, too), then add the POSIX account.

• ນໍາເຂົ້າຜູ້ໃຊ້

ເລືອກແມ່ແບບໃໝ່ຂອງທ່ານເມື່ອເຮັດການນໍາເຂົ້າ csv; ແນະນໍາໃຫ້ທົດສອບກັບຜູ້ໃຊ້ຈໍານວນໜ້ອຍໜຶ່ງກ່ອນ.

15.2 ການປັບແຕ່ງຜູ້ໃຊ້ອື່ນໆ

15.2.1 ການສ້າງໂຟນເດີໃນໄດເຣັກທໍຣີຫຼັກ (home directories) ຂອງຜູ້ໃຊ້ທັງໝົດ

ດ້ວຍສະຄຣິບນີ້ ຜູ້ດູແລລະບົບສາມາດສ້າງໂຟນເດີໃນໄດເຣັກທໍຣີຫຼັກຂອງຜູ້ໃຊ້ແຕ່ລະຄົນ ແລະ ຕັ້ງຄ່າສິດການເຂົ້າເຖິງລວມທັງຄວາມເປັນເຈົ້າຂອງໄດ້.

ໃນຕົວຢ່າງທີ່ສະແດງຢູ່ລຸ່ມນີ້ ດ້ວຍ group=teachers ແລະ permissions=2770 ຜູ້ໃຊ້ ສາມາດສ້າງວຽກມອບໝາຍໄດ້ ໂດຍການບັນທຶກໄຟລ໌ລົງໃນໂຟນເດີ "assignments" ເຊິ່ງຄູອາຈານຈະໄດ້ຮັບສິດໃນການຂຽນ ເພື່ອໃຫ້ສາມາດໃຫ້ຄໍາຄິດເຫັນໄດ້.

```
#!/bin/bash
home_path="/skole/tjener/home0"
shared_folder="assignments"
permissions="2770"
created_dir=0
for home in $(ls $home_path); do
   if [ ! -d "$home_path/$home/$shared_folder" ]; then
       mkdir $home_path/$home/$shared_folder
       chmod $permissions $home_path/$home/$shared_folder
       user=$home
       group=teachers
       chown $user:$group $home_path/$home/$shared_folder
       ((created_dir+=1))
   else
       echo -e "the folder $home_path/$home/$shared_folder already exists.\n"
   fi
done
echo "$created_dir folders have been created"
```

15.3 ນຳໃຊ້ເຊີເວີເກັບຂໍ້ມູນສະເພາະ

ປະຕິບັດຕາມຂັ້ນຕອນເຫຼົ່ານີ ເພື່ອຕັ້ງຄ່າເຊີເວີເກັບຂໍ້ມູນສະເພາະ ສຳລັບໄດເຣັກທໍຣີຫຼັກຂອງຜູ້ໃຊ້ ແລະ ອາດຈະລວມເຖິງຂໍ້ມູນອື່ນໆ.

- ເພີ່ມລະບົບໃໝ່ປະເພດ server ໂດຍໃຊ້ GOsa² ຕາມທີ່ໄດ້ລະບຸໄວ້ໃນບົດ **ການເລີ່ມຕົ້ນນຳໃຊ້** ຂອງຄູ່ມືເຫຼັ້ມນີ.
  - ຕົວຢ່າງນີ້ໃຊ້ 'nas-server.intern' ເປັນຊື່ເຊີເວີ. ເມື່ອ 'nas-server.intern' ຖືກຕັ້ງຄ່າແລ້ວ, ໃຫ້ກວດເບິ່ງວ່າຈຸດສົ່ງອອກ NFS (NFS export points) ໃນເຊີເວີເກັບຂໍ້ມູນໃໝ່ ໄດ້ຖືກສົ່ງອອກໄປຫາເຄືອຂ່າຍຍ່ອຍ ຫຼື ເຄື່ອງທີ່ກ່ຽວຂ້ອງແລ້ວຫຼືບໍ່:
    ```
    root@tjener:~# showmount -e nas-server
    Export list for nas-server:
    /storage         10.0.0.0/8
    root@tjener:~#
    ```
    ໃນບ່ອນນີ ທຸກຢ່າງໃນເຄືອຂ່າຍຫຼັກ (backbone network) ຈະໄດ້ຮັບອະນຸຍາດໃຫ້ເຂົ້າເຖິງ /storage. (ສົ່ງນີສາມາດຈຳກັດໃຫ້ສະເພາະສະມາຊິກ netgroup ຫຼື ທີ່ຢູ່ IP ດຽວ ເພື່ອຈຳກັດການເຂົ້າເຖິງ NFS ຄືກັບທີ່ເຮັດໃນໄຟລ໌ tjener:/etc/exports).
- ເພີ່ມຂໍ້ມູນການເຊື່ອມຕໍ່ອັດຕະໂນມັດ (automount) ກ່ຽວກັບ 'nas-server.intern' ໃນ LDAP ເພື່ອອະນຸຍາດໃຫ້ເຄື່ອງລູກຂ່າຍທັງໝົດທຳການ mount ຈຸດສົ່ງອອກໃໝ່ໂດຍອັດຕະໂນມັດເມື່ອມີການຮ້ອງຂໍ.
  - ສົ່ງນີບໍ່ສາມາດເຮັດໄດ້ໂດຍໃຊ້ GOsa², ເພາະວ່າຍັງຂາດໂມດູນສຳລັບ automount. ໃຫ້ໃຊ້ ldapvi ແທນ ແລະ ເພີ່ມອອບເຈັກ LDAP ທີ່ຈຳເປັນໂດຍໃຊ້ໂປຣແກຣມແກ້ໄຂຂໍ້ຄວາມ (editor).
    `ldapvi --ldap-conf -ZD '(cn=admin)' -b ou=automount,dc=skole,dc=skolelinux,dc=no`
    ເມື່ອປ່ອງຢ້ຽມແກ້ໄຂຂໍ້ຄວາມປະກົດຂຶ້ນ, ໃຫ້ເພີ່ມອອບເຈັກ LDAP ຕໍ່ໄປນີໃສ່ທາງລຸ່ມສຸດຂອງເອກະສານ. (ສ່ວນ "/&" ໃນອອບເຈັກ LDAP ສຸດທ້າຍແມ່ນ wild card ທີ່ກົງກັບທຸກຢ່າງທີ 'nas-server.intern' ສົ່ງອອກ, ເຮັດໃຫ້ບໍ່ຈຳເປັນຕ້ອງລະບຸລາຍການ mount point ແຕ່ລະອັນໃນ LDAP).
    ```
    add cn=nas-server,ou=auto.skole,ou=automount,dc=skole,dc=skolelinux,dc=no
    objectClass: automount
    cn: nas-server
    automountInformation: -fstype=autofs --timeout=60 ldap:ou=auto.nas-server,ou= ↩
        automount,dc=skole,dc=skolelinux,dc=no

    add ou=auto.nas-server,ou=automount,dc=skole,dc=skolelinux,dc=no
    objectClass: top
    objectClass: automountMap
    ou: auto.nas-server
    ```

```
add cn=/,ou=auto.nas-server,ou=automount,dc=skole,dc=skolelinux,dc=no
objectClass: automount
cn: /
automountInformation: -fstype=nfs,tcp,rsize=32768,wsize=32768,rw,intr,hard,nodev, ↩
    nosuid,noatime nas-server.intern:/&
```

- ເພີ່ມ ລາຍການ ທີ່ ກ່ຽວ ຂ້ອງ ໃນ tjener.intern:/etc/fstab, ເພາະ ວ່າ tjener.intern ບໍ່ ໄດ້ ໃຊ້ automount ເພື່ອ ຫຼີກ ເວັ້ນ ການ ເກີດ mounting loops:
  - ສ້າງ ໄດເຣັກ ທໍ ຣີ mount point ໂດຍ ໃຊ້ `mkdir`, ແກ້ ໄຂ '/etc/fstab' ຕາມ ຄວາມ ເໝາະ ສົມ ແລະ ຣັນ `mount -a` ເພື່ອ mount ຊັບ ພະ ຍາ ກອນ ໃໝ່.

ປັດ ນີ ຜູ້ ໃຊ້ ຄວນ ຈະ ສາ ມາດ ເຂົ້າ ເຖິງ ໄຟ ລ໌ ໃນ 'nas-server.intern' ໄດ້ ໂດຍ ກົງ ພຽງ ແຕ່ ເຂົ້າ ໄປ ທີ ໄດເຣັກ ທໍ ຣີ '/tjener/nas-server/storage/' ໂດຍ ໃຊ້ ແອັບ ພລິ ເຄ ຊັ່ນ ໃດ ກໍ ໄດ້ ໃນ ເຄື່ອງ ເວີ ກ ສະ ເຕ ຊັ່ນ, LTSP thin client ຫຼື LTSP ເຊີ ເວີ.

15.4 ຈຳ ກັດ ການ ເຂົ້າ ເຖິງ ການ ລັອກ ອິນ ຜ່ານ SSH

ມີ ຫຼາຍ ວິ ທີ ໃນ ການ ຈຳ ກັດ ການ ລັອກ ອິນ SSH, ບາງ ວິ ທີ ໄດ້ ລະ ບຸ ໄວ້ ຢູ່ ທີ ນີ.

15.4.1 ການ ຕັ້ງ ຄ່າ ໂດຍ ບໍ່ ມີ ເຄື່ອງ ລູກ ຂ່າຍ LTSP

ຖ້າ ບໍ່ ມີ ການ ໃຊ້ ເຄື່ອງ ລູກ ຂ່າຍ LTSP, ວິ ທີ ແກ້ ໄຂ ທີ ງ່າຍ ດາຍ ແມ່ນ ການ ສ້າງ ກຸ່ມ ໃໝ່ (ເຊັ່ນ `sshusers`) ແລະ ເພີ່ມ ແຖວ ຂໍ້ ຄວາມ ລົງ ໃນ ໄຟ ລ໌ /etc/ssh/sshd_config ຂອງ ເຄື່ອງ. ຫຼັງ ຈາກ ນັ້ນ, ສະ ເພາະ ສະ ມາ ຊິ ກ ໃນ ກຸ່ມ `sshusers` ເທົ່າ ນັ້ນ ທີ ຈະ ໄດ້ ຮັບ ອະ ນຸ ຍາດ ໃຫ້ ssh ເຂົ້າ ເຄື່ອງ ໄດ້ ຈາກ ທຸກ ບ່ອນ.

Managing this case with GOsa is quite simple:

- ສ້າງ ກຸ່ມ `sshusers` ໃນ ລະ ດັບ ພື້ນ ຖານ (ບ່ອນ ທີ ມີ ກຸ່ມ ທີ ກ່ຽວ ຂ້ອງ ກັບ ການ ຈັດ ການ ລະ ບົບ ອື່ນ ໆ ເຊັ່ນ `gosa-admins` ປະ ກົດ ຢູ່ ແລ້ວ).
- ເພີ່ມ ຜູ້ ໃຊ້ ເຂົ້າ ໃນ ກຸ່ມ ໃໝ່ `sshusers`.
- ເພີ່ມ `AllowGroups sshusers` ລົງ ໃນ /etc/ssh/sshd_config.
- ຣັນ ຄຳ ສັ່ງ `service ssh restart`.

15.4.2 ການ ຕັ້ງ ຄ່າ ພ້ອມ ກັບ ເຄື່ອງ ລູກ ຂ່າຍ LTSP

ການ ຕັ້ງ ຄ່າ ເຄື່ອງ ລູກ ຂ່າຍ LTSP ແບບ ບໍ່ ມີ ດິດ (diskless) ໂດຍ ມາ ດ ຕະ ຖານ ແມ່ນ ບໍ່ ໄດ້ ໃຊ້ ການ ເຊື່ອມ ຕໍ່ SSH. ພຽງ ແຕ່ ຫ ຳ ການ ອັບ ເດດ ອິ ເມ ຈ SquashFS ໃນ LTSP ເຊີ ເວີ ທີ ກ່ຽວ ຂ້ອງ ຫຼັງ ຈາກ ປ່ຽນ ການ ຕັ້ງ ຄ່າ SSH ກ ໍ ພຽງ ພໍ ແລ້ວ.

ເຄື່ອງ ລູກ ຂ່າຍ X2Go thin client ແມ່ນ ໃຊ້ ການ ເຊື່ອມ ຕໍ່ SSH ໄປ ຫາ LTSP ເຊີ ເວີ ທີ ກ່ຽວ ຂ້ອງ. ດັ່ງ ນັ້ນ ຈຶ່ງ ຈ ຳ ເປັ ນ ຕ້ອງ ໃຊ້ ວິ ທີ ການ ອື່ນ ໂດຍ ຜ່ານ PAM.

- ເປີ ດ ນ ຳ ໃຊ້ pam_access.so ໃນ ໄຟ ລ໌ /etc/pam.d/sshd ຂອງ LTSP ເຊີ ເວີ.
- ຕັ້ງ ຄ່າ /etc/security/access.conf ເພື່ອ ອະ ນຸ ຍາດ ການ ເຊື່ອມ ຕໍ່ ສ ຳ ລັ ບ ຜູ້ ໃຊ້ (ຕົວ ຢ່າ ງ) alice, jane, bob ແລະ john ຈາກ ທຸກ ບ່ອນ ແລະ ສ ຳ ລັ ບ ຜູ້ ໃຊ້ ອື່ນ ໆ ທັ ງ ໝົ ດ ໃຫ້ ເຂົ້າ ເຖິງ ໄດ້ ສະ ເພາະ ຈາກ ເຄືອ ຂ່າຍ ພາຍ ໃນ ເທົ່າ ນັ້ນ ໂດຍ ການ ເພີ່ມ ແຖວ ເຫຼົ່ ານີ:

```
+ : alice jane bob john : ALL
+ : ALL : 10.0.0.0/8 192.168.0.0/24 192.168.1.0/24
- : ALL : ALL
#
```

ຖ້ານຳໃຊ້ສະເພາະ LTSP ເຊີເວີທີແຍກຕ່າງຫາກ, ເຄືອຂ່າຍ 10.0.0.0/8 ອາດຈະຖືກຍົກເລີກ ເພື່ອປິດການເຂົ້າເຖິງ SSH ຈາກພາຍໃນ. ໝາຍເຫດ: ຜູ້ໃດກໍຕາມທີ່ເຊື່ອມຕໍ່ເຄືອງຂອງຕົນເອງ ເຂົ້າກັບເຄືອຂ່າຍເຄືອງລູກຂ່າຍ LTSP ໂດຍກົງ ກໍຈະສາມາດເຂົ້າເຖິງ SSH ຂອງ LTSP ເຊີເວີໄດ້ເຊັ່ນກັນ.

15.4.3 ໝາຍເຫດສຳລັບການຕັ້ງຄ່າທີ່ຊັບຊ້ອນກວ່າ

ຖ້າເຄືອງລູກຂ່າຍ X2Go ຖືກເຊື່ອມຕໍ່ກັບເຄືອຂ່າຍຫຼັກ 10.0.0.0/8, ສິ່ງຕ່າງໆຈະຊັບຊ້ອນຂຶ້ນກວ່າເກົ່າ ແລະ ອາດຈະຕ້ອງໃຊ້ການຕັ້ງຄ່າ DHCP ທີ່ລະອຽດ (ໃນ LDAP) ເພື່ອກວດສອບ vendor-class-identifier ຮ່ວມກັບການຕັ້ງຄ່າ PAM ທີ່ເໝາະສົມ ເພື່ອປິດການລັອກອິນ SSH ຈາກພາຍໃນ.

16 ວິທີການ (HowTos) ສຳລັບເດັສທັອບ

16.1 ການຕັ້ງຄ່າສະພາບແວດລ້ອມເດັສທັອບແບບຫຼາຍພາສາ

ເພື່ອຮອງຮັບຫຼາຍພາສາ, ຈຳເປັນຕ້ອງປະຕິບັດຕາມຂັ້ນຕອນເຫຼົ່ານີ:

- ຣັນ `dpkg-reconfigure locales` (ໃນນາມ root) ແລະ ເລືອກພາສາຕ່າງໆ (ແບບ UTF-8).
- ຣັນຄຳສັ່ງເຫຼົ່ານີໃນນາມ root ເພື່ອຕິດຕັ້ງແພັກເກດທີ່ກ່ຽວຂ້ອງ:

  ```
  apt update
  /usr/share/debian-edu-config/tools/install-task-pkgs
  /usr/share/debian-edu-config/tools/improve-desktop-l10n
  ```

ຫຼັງຈາກນັ້ນ ຜູ້ໃຊ້ຈະສາມາດເລືອກພາສາຜ່ານ LightDM display manager ກ່ອນການລັອກອິນ; ສິ່ງນີ້ໃຊ້ໄດ້ກັບ Xfce, LXDE ແລະ LXQt. ສຳລັບ GNOME ແລະ KDE ແມ່ນມີເຄືອງມືຕັ້ງຄ່າ ພາກພື້ນ ແລະ ພາສາ ພາຍໃນຂອງຕົນເອງ, ໃຫ້ໃຊ້ເຄືອງມືເຫຼົ່ານັ້ນ. MATE ໃຊ້ Arctica greeter ເທິງ LightDM ເຊິ່ງບໍ່ມີບ່ອນເລືອກພາສາ. ໃຫ້ຣັນ `apt purge arctica-greeter` ເພື່ອໃຫ້ໄດ້ໜ້າຈໍທັກທາຍ LightDM ແບບມາດຕະຖານ.

16.2 ການຫຼິ້ນແຜ່ນ DVD

libdvdcss ແມ່ນຈຳເປັນສຳລັບການຫຼິ້ນແຜ່ນ DVD ທາງການຄ້າສ່ວນໃຫຍ່. ດ້ວຍເຫດຜົນທາງດ້ານກົດໝາຍ, ມັນຈຶ່ງບໍ່ໄດ້ຖືກລວມເຂົ້າໃນ Debian (Edu). ຖ້າທ່ານໄດ້ຮັບອະນຸຍາດຕາມກົດໝາຍໃຫ້ໃຊ້ວຽກມັນໄດ້, ທ່ານສາມາດສ້າງແພັກເກດທ້ອງຖິ່ນຂອງທ່ານເອງ ໂດຍໃຊ້ແພັກເກດ `libdvd-pkg` ຂອງ Debian; ກວດສອບໃຫ້ແນ່ໃຈວ່າໄດ້ເປີດໃຊ້ `contrib` ໃນ `/etc/apt/sources.list` ແລ້ວ.

```
apt update
apt install libdvd-pkg
```

ຕອບຄຳຖາມຂອງ debconf, ຈາກນັ້ນຣັນ `dpkg-reconfigure libdvd-pkg`.

16.3 ຟອນລາຍມື (Handwriting fonts)

ແພັກເກດ `fonts-linex` (ເຊິ່ງຖືກຕິດຕັ້ງມາໃຫ້ໂດຍມາດຕະຖານ) ຈະຕິດຕັ້ງຟອນ "Abecedario" ເຊິ່ງເປັນຟອນລາຍມືທີ່ສວຍງາມສຳລັບເດັກນ້ອຍ. ຟອນນີ້ມີຫຼາຍຮູບແບບເພື່ອໃຊ້ກັບເດັກນ້ອຍ: ແບບຈ້ຳເມັດ ແລະ ແບບມີເສັ້ນບັນທັດ.

17 ວິທີການ (HowTos) ສຳລັບເຄື່ອງລູກຂ່າຍໃນເຄືອຂ່າຍ

17.1 ແນະນຳກ່ຽວກັບ thin clients ແລະ diskless workstations

ຄຳສັບລວມທີ່ໃຊ້ເອີ້ນທັ້ງ thin clients ແລະ diskless workstations ແມ່ນ LTSP client.

 ເລີ່ມຕັ້ງແຕ່ເວີຊັ່ນ Bullseye ເປັນຕົ້ນມາ, LTSP ແມ່ນມີຄວາມແຕກຕ່າງຈາກເວີຊັ່ນກ່ອນໆຂ້ອນຂ້າງຫຼາຍ. ສິ່ງນີ້ລວມເຖິງທັ້ງ ການຕັ້ງຄ່າ ແລະ ການບຳລຸງຮັກສາ.

- ຄວາມແຕກຕ່າງທີ່ສຳຄັນຢ່າງໜຶ່ງແມ່ນ ອິເມຈ SquashFS ສຳລັບ diskless workstations ໃນເວລານີ້ແມ່ນຖືກສ້າງຂຶ້ນຈາກ ລະບົບໄຟລ໌ຂອງ LTSP ເຊີເວີໂດຍມາດຕະຖານ. ສິ່ງນີ້ຈະເກີດຂຶ້ນໃນເຊີເວີແບບລວມ (combined server) ເມື່ອມີການບູດເຄື່ອງ ຄັ້ງທຳອິດ, ເຊິ່ງຈະໃຊ້ເວລາຄາວໜຶ່ງ.
- Thin clients ບໍ່ໄດ້ເປັນສ່ວນໜຶ່ງຂອງ LTSP ອີກຕໍ່ໄປ. Debian Edu ໃຊ້ X2Go ເພື່ອຍັງຄົງຮອງຮັບການນຳໃຊ້ thin client.
- ໃນກໍລະນີທີ່ມີການແຍກ LTSP ເຊີເວີ ຫຼື ມີເຊີເວີເພີ່ມເຕີມ, ຂໍ້ມູນທີ່ຈຳເປັນສຳລັບ ການຕັ້ງຄ່າສະພາບແວດລ້ອມ LTSP client ຈະ ຍັງບໍ່ທັນສົມບູນໃນເວລານຳຕິດຕັ້ງ. ການຕັ້ງຄ່າສາມາດເຮັດໄດ້ຫຼັງຈາກທີ່ລະບົບຖືກເພີ່ມເຂົ້າດ້ວຍ GOsa² ແລ້ວ.

ສຳລັບຂໍ້ມູນທົ່ວໄປກ່ຽວກັບ LTSP, ໃຫ້ເບິ່ງທີ່ ເວັບໄຊຫຼັກຂອງ LTSP. ໃນລະບົບທີ່ມີໂປຣແກຣມ LTSP server, ຄຳສັ່ງ `man ltsp` ຈະໃຫ້ຂໍ້ມູນເພີ່ມເຕີມ.

ກະລຸນາຮັບຊາບວ່າ ເຄື່ອງມື ltsp ຈາກ LTSP ຈະຕ້ອງຖືກນຳໃຊ້ຢ່າງລະມັດລະວັງ. ຕົວຢ່າງ, `ltsp image /` ອາດຈະບໍ່ສາມາດສ້າງ ອິເມຈ SquashFS ໄດ້ ໃນກໍລະນີຂອງເຄື່ອງ Debian (ເນື່ອງຈາກເຄື່ອງເຫຼົ່ານີ້ມີພາກສ່ວນ /boot ແຍກຕ່າງຫາກໂດຍມາດຕະຖານ), `ltsp ipxe` ອາດຈະສ້າງເມນູ iPXE ບໍ່ຖືກຕ້ອງ (ຍ້ອນການຮອງຮັບ thin client ຂອງ Debian Edu), ແລະ `ltsp initrd` ອາດຈະເຮັດໃຫ້ການບູດເຄື່ອງລູກຂ່າຍ LTSP ເພພັງໄດ້.

ເຄື່ອງມື **debian-edu-ltsp-install** ແມ່ນສະຄຣິບຄອບ ສຳລັບ `ltsp image`, `ltsp initrd` ແລະ `ltsp ipxe`. ມັນຖືກ ໃຊ້ເພື່ອຕັ້ງຄ່າການຮອງຮັບ diskless workstation ແລະ thin client (ທັງແບບ PC 64-Bit ແລະ 32-Bit). ເບິ່ງ `man debian-edu-ltsp-install` ຫຼື ເນື້ອໃນຂອງສະຄຣິບ ເພື່ອເບິ່ງວິທີການເຮັດວຽກ. ການຕັ້ງຄ່າທັ້ງໝົດແມ່ນລວມຢູ່ໃນຕົວສະຄຣິບເອງ (ເອກະສານ HERE) ເພື່ອຄວາມສະດວກໃນການປັບແຕ່ງຕາມແຕ່ລະສະຖານທີ່.

ຕົວຢ່າງການນຳໃຊ້ສະຄຣິບຄອບ debian-edu-ltsp-install:

- `debian-edu-ltsp-install --diskless_workstation yes` ອັບເດດອິເມຈ SquashFS ຂອງ diskless workstation (ລະບົບໄຟລ໌ຂອງເຊີເວີ).
- `debian-edu-ltsp-install --diskless_workstation yes --thin_type bare` ສ້າງການຮອງຮັບ diskless workstation ແລະ thin client ແບບ 64-bit.
- `debian-edu-ltsp-install --arch i386 --thin_type bare` ສ້າງການຮອງຮັບ thin client ແບບ 32-bit ເພີ່ມເຕີມ (chroot ແລະ ອິເມຈ SquashFS).

ນອກຈາກແບບ bare (ລະບົບ thin client ທີ່ນ້ອຍທີ່ສຸດ) ແລ້ວ, ຍັງມີຕົວເລືອກ display ແລະ desktop ໃຫ້ເລືອກອີກດ້ວຍ. ປະເພດ display ຈະມີປຸ່ມປິດເຄື່ອງໃຫ້, ສ່ວນປະເພດ desktop ຈະຮັນ Firefox ESR ໃນໂໝດ kiosk ຢູ່ເທິງເຄື່ອງລູກຂ່າຍເອງ (ເຊິ່ງ ຕ້ອງການ RAM ແລະ CPU ທ້ອງຖິ່ນຫຼາຍຂຶ້ນ, ແຕ່ຈະຊ່ວຍຫຼຸດພາລະຂອງເຊີເວີລົງ).

ເຄື່ອງມື **debian-edu-ltsp-ipxe** ແມ່ນສະຄຣິບຄອບ ສຳລັບ `ltsp ipxe`. ມັນຊ່ວຍໃຫ້ໝັ້ນໃຈວ່າ ໄຟລ໌ /srv/tftp/ltsp/ltsp.ipxe ແມ່ນຖືກກຳນົດມາສະເພາະສຳລັບ Debian Edu. ຄຳສັ່ງນີ້ຈຳເປັນຕ້ອງໄດ້ຮັນ ຫຼັງຈາກທີ່ມີການປ່ຽນແປງລາຍການທີ່ ກ່ຽວຂ້ອງກັບເມນູ iPXE (ເຊັ່ນ ເວລາລໍຖ້າເມນູ ຫຼື ການຕັ້ງຄ່າການບູດເລີ່ມຕົ້ນ) ໃນສ່ວນ [server] ຂອງ /etc/ltsp/ltsp.conf.

ເຄື່ອງມື **debian-edu-ltsp-initrd** ແມ່ນສະຄຣິບຄອບ ສຳລັບ `ltsp initrd`. ມັນຊ່ວຍໃຫ້ໝັ້ນໃຈວ່າ initrd (/srv/tftp/ltsp/ltsp.img) ທີ່ຖືກສ້າງຂຶ້ນແມ່ນກົງກັບກໍລະນີການນຳໃຊ້ ແລະ ຖືກຍ້າຍໄປທີ່ໃດເຮັກທໍຣີທີ່ກ່ຽວຂ້ອງ. ຄຳສັ່ງນີ້ຈຳເປັນຕ້ອງໄດ້ຮັນ ຫຼັງຈາກທີ່ມີການປ່ຽນແປງ ໃນສ່ວນ [clients] ຂອງ /etc/ltsp/ltsp.conf.

ເຄື່ອງມື **debian-edu-ltsp-chroot** ແມ່ນສິ່ງທີ່ມາແທນ ເຄື່ອງມື ltsp-chroot ທີ່ມາພ້ອມກັບ LTSP5. ມັນຖືກໃຊ້ເພື່ອຮັນຄຳສັ່ງ ໃນ LTSP chroot ທີ່ລະບຸໄວ້ (ເຊັ່ນ ການຕິດຕັ້ງ, ການອັບເກຣດ ແລະ ການຖອນແພັກເກດ).

ເວີກສະເຕຊັ້ນແບບບໍ່ມີດິດ (Diskless workstation)

Diskless workstation ຈະຣັນຊອບແວທັ້ງໝົດຢູ່ໃນເຄື່ອງທ້ອງຖິ່ນ. ເຄື່ອງລູກຂ່າຍຈະບູດ ໂດຍກົງຈາກ LTSP ເຊີເວີ ໂດຍບໍ່ຈຳເປັນຕ້ອງມີຮາດດິດໃນເຄື່ອງ. ຊອບແວຈະຖືກຈັດການ ແລະ ບຳລຸງຮັກສາຢູ່ໃນ LTSP ເຊີເວີ, ແຕ່ຈະຖືກປະມວນຜົນຢູ່ໃນ diskless workstation. ໄດເຣັກທໍຣີຫຼັກ (home directories) ແລະ ການຕັ້ງຄ່າລະບົບກໍຈະຖືກເກັບໄວ້ໃນເຊີເວີເຊັ້ນກັນ. Diskless workstation ແມ່ນວິທີທີ່ດີເລີດໃນການນຳໃຊ້ຮາດແວເກົ່າ (ແຕ່ຍັງມີປະສິດທິພາບ) ຄືນໃໝ່ ໂດຍມີຄ່າໃຊ້ຈ່າຍໃນການບຳລຸງຮັກສາຕ່ຳ ຄືກັນກັບ thin clients.

Diskless workstation ຈະເຮັດວຽກໄດ້ໂດຍບໍ່ຈຳເປັນຕ້ອງເພີ່ມເຂົ້າໃນ GOsa² ຄືກັບເຄື່ອງເວີກສະເຕຊັ້ນທົ່ວໄປ.

ທິນໄຄລແອນ (Thin client)

ການຕັ້ງຄ່າ thin client ຊ່ວຍໃຫ້ PC ທົ່ວໄປສາມາດເຮັດວຽກເປັນ (X-)terminal ໄດ້, ເຊິ່ງຊອບແວທັ້ງໝົດຈະຖືກຣັນຢູ່ໃນ LTSP ເຊີເວີ. ນັ້ນໝາຍຄວາມວ່າເຄື່ອງນີ້ຈະບູດຜ່ານ PXE ໂດຍບໍ່ຕ້ອງໃຊ້ຮາດດິດທ້ອງຖິ່ນ ແລະ LTSP ເຊີເວີກໍຕ້ອງເປັນເຄື່ອງທີ່ມີປະສິດທິພາບສູງ.

Debian Edu ຍັງຄົງຮອງຮັບການນຳໃຊ້ thin client ເພື່ອໃຫ້ສາມາດນຳໃຊ້ຮາດແວທີ່ເກົ່າຫຼາຍໄດ້.

 ເນື່ອງຈາກ Thin client ໃຊ້ X2Go, ຜູ້ໃຊ້ຄວນປິດການເຮັດວຽກຂອງ compositing ເພື່ອຫຼີກເວັ້ນບັນຫາການສະແດງຜົນທີ່ຜິດພາດ. ໃນກໍລະນີມາດຕະຖານ (Xfce): ການຕັ້ງຄ່າ (Settings) -> ປັບແຕ່ງຕົວຈັດການປ່ອງຢ້ຽມ (Window Manager Tweaks) -> Compositor.

ເຟີມແວຂອງເຄື່ອງລູກຂ່າຍ LTSP (LTSP client firmware)

ການບູດເຄື່ອງລູກຂ່າຍ LTSP ຈະບໍ່ສຳເລັດ ຖ້າການເຊື່ອມຕໍ່ເຄືອຂ່າຍຂອງເຄື່ອງລູກຂ່າຍ ຕ້ອງການເຟີມແວແບບ non-free. ການຕິດຕັ້ງຜ່ານ PXE ສາມາດໃຊ້ເພື່ອແກ້ໄຂບັນຫາ ໃນການບູດຜ່ານເຄືອຂ່າຍ; ຖ້າຕົວຕິດຕັ້ງ Debian ແຈ້ງເຕືອນວ່າຂາດໄຟລ໌ XXX.bin, ທ່ານຈະຕ້ອງເພີ່ມເຟີມແວ non-free ເຂົ້າໃນ initrd ຂອງ LTSP ເຊີເວີ.

ໃຫ້ດຳເນີນການດັ່ງນີ້ໃນ LTSP ເຊີເວີ:

- ທຳອິດໃຫ້ເບິ່ງຂໍ້ມູນກ່ຽວກັບແພັກເກດເຟີມແວ ໂດຍຣັນຄຳສັ່ງ:

```
apt update && apt search ^firmware-
```

- ຕັດສິນໃຈວ່າຈະຕິດຕັ້ງແພັກເກດໃດສຳລັບອຸປະກອນເຄືອຂ່າຍ, ເຊິ່ງສ່ວນໃຫຍ່ແລ້ວຈະແມ່ນ firmware-linux, ໃຫ້ຣັນຄຳສັ່ງ:

```
apt -y -q install firmware-linux
```

- ອັບເດດອິເມຈ SquashFS ສຳລັບ diskless workstations ໂດຍຣັນຄຳສັ່ງ:

```
debian-edu-ltsp-install --diskless_workstation yes
```

- ໃນກໍລະນີທີ່ມີການນຳໃຊ້ X2Go thin clients, ໃຫ້ຣັນຄຳສັ່ງ:

```
/usr/share/debian-edu-config/tools/ltsp-addfirmware -h
```

- ແລະ ດຳເນີນການຕໍ່ຕາມຂໍ້ມູນການນຳໃຊ້.

  ຈາກນັ້ນໃຫ້ອັບເດດອິເມຈ SquashFS; ຕົວຢ່າງ ສຳລັບ /srv/ltsp/x2go-bare-amd64 chroot, ໃຫ້ຣັນຄຳສັ່ງ:

```
ltsp image x2go-bare-amd64
```

17.1.1 ການເລືອກປະເພດເຄື່ອງລູກຂ່າຍ LTSP

LTSP ເຊີເວີແຕ່ລະເຄື່ອງມີສອງອິນເຕີເຟສອີເທີເນັດ: ອັນໜຶ່ງຖືກຕັ້ງຄ່າໃນເຄືອຂ່າຍຍ່ອຍຫຼັກ 10.0.0.0/8 (ເຊິ່ງໃຊ້ຮ່ວມກັບເຊີເວີຫຼັກ), ແລະ ອີກອັນໜຶ່ງແມ່ນສ້າງເປັນເຄືອຂ່າຍຍ່ອຍທ້ອງຖິ່ນ (ເຄືອຂ່າຍຍ່ອຍແຍກຕ່າງຫາກສຳລັບ LTSP ເຊີເວີແຕ່ລະເຄື່ອງ).

ໃນທັງສອງກໍລະນີ, ທ່ານສາມາດເລືອກ diskless workstation ຫຼື thin client ໄດ້ຈາກເມນູ iPXE. ຫຼັງຈາກລໍຖ້າ 5 ວິນາທີ, ເຄື່ອງຈະບູດເຂົ້າເປັນ diskless workstation ໂດຍອັດຕະໂນມັດ.

ລາຍການບູດເລີ່ມຕົ້ນຂອງເມນູ iPXE ແລະ ເວລາລໍຖ້າ ສາມາດຕັ້ງຄ່າໄດ້ໃນ `/etc/ltsp/ltsp.conf`. ຫາກຕັ້ງຄ່າເວລາລໍຖ້າເປັນ -1 ຈະເປັນການເຊື່ອງເມນູ. ໃຫ້ຣັນ `debian-edu-ltsp-ipxe` ເພື່ອໃຫ້ການປ່ຽນແປງມີຜົນ.

17.1.2 ການນຳໃຊ້ເຄືອຂ່າຍເຄື່ອງລູກຂ່າຍ LTSP ອື່ນ

192.168.0.0/24 ແມ່ນເຄືອຂ່າຍເຄື່ອງລູກຂ່າຍ LTSP ເລີ່ມຕົ້ນ ຫາກຕິດຕັ້ງເຄື່ອງ ໂດຍໃຊ້ໂປຣໄຟລ໌ LTSP. ຖ້າມີເຄື່ອງລູກຂ່າຍ LTSP ຈຳນວນຫຼາຍ ຫຼື ຖ້າຕ້ອງການໃຫ້ LTSP ເຊີເວີທີ່ແຕກຕ່າງກັນບໍລິການທັງສະພາບແວດລ້ອມ chroot ແບບ i386 ແລະ amd64, ກໍສາມາດໃຊ້ເຄືອຂ່າຍ 192.168.1.0/24 ທີ່ຖືກຕັ້ງຄ່າໄວ້ກ່ອນແລ້ວໄດ້ເຊັ່ນກັນ. ໃຫ້ແກ້ໄຂໄຟລ໌ `/etc/network/interfaces` ແລະ ປັບການຕັ້ງຄ່າ eth1 ຕາມຄວາມເໝາະສົມ. ໃຊ້ `ldapvi` ຫຼື ໂປຣແກຣມແກ້ໄຂ LDAP ອື່ນໆ ເພື່ອກວດສອບການຕັ້ງຄ່າ DNS ແລະ DHCP.

17.1.3 ເພີ່ມ LTSP chroot ເພື່ອຮອງຮັບເຄື່ອງລູກຂ່າຍ PC ແບບ 32-bit

ເພື່ອສ້າງ chroot ແລະ ອິເມຈ SquashFS, ໃຫ້ຣັນຄຳສັ່ງ:

```
debian-edu-ltsp-install --arch i386 --thin_type bare
```

ເບິ່ງ `man debian-edu-ltsp-install` ສຳລັບລາຍລະອຽດ ກ່ຽວກັບປະເພດຂອງ thin client.

17.1.4 ການຕັ້ງຄ່າເຄື່ອງລູກຂ່າຍ LTSP

ຣັນ `man ltsp.conf` ເພື່ອເບິ່ງຕົວເລືອກການຕັ້ງຄ່າ ທີ່ມີໃຫ້. ຫຼື ອ່ານທາງອອນລາຍໄດ້ທີ່: https://ltsp.org/man/ltsp.conf/

ເພີ່ມລາຍການການຕັ້ງຄ່າເຂົ້າໃນສ່ວນ [clients] ຂອງ /etc/ltsp/ltsp.conf. ເພື່ອໃຫ້ການປ່ຽນແປງມີຜົນ, ໃຫ້ຣັນຄຳສັ່ງ:

```
debian-edu-ltsp-initrd
```

17.1.5 ລະບົບສຽງກັບເຄື່ອງລູກຂ່າຍ LTSP

LTSP thin clients ໃຊ້ລະບົບສຽງຜ່ານເຄືອຂ່າຍເພື່ອສົ່ງສຽງຈາກເຊີເວີໄປຫາເຄື່ອງລູກຂ່າຍ.

LTSP diskless workstations ຈັດການລະບົບສຽງພາຍໃນເຄື່ອງໂດຍກົງ.

17.1.6 ການເຂົ້າເຖິງ USB ໄດຣຟ໌ ແລະ CD-ROM/DVD

